**<u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ</u>**

**Copyright © 2008 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມ ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບ ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.



ພິມອອກຄັ້ງທຳອິດ: ເດືອນ ມີນາ, 2004


BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1- 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1- 4
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 5 - 7
Bounchanh Vongsurith, Crievewood Baptist Church, Nashville, Tennessee
Editor for Lessons 5 - 7
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 8 - 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8 - 10
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 11- 13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11 - 13
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ຈົ່ງເຂົ້າແຖວໃນແຜນການຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເອເຟໂຊ 1:1-14

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ ບົດທີ 1

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າໄດ້ຮຽກເອີ້ນ ພວກເຮົາໃຫ້ມີສ່ວນຮ່ວມໃນແຜນການທີ່ພຣະອົງໄດ້ຕັ້ງໄວ້ແລ້ວໃນພຣະຄຣິດ ເພື່ອທຸກຄົນຈະໄດ້ຮັບຄວາມຊື່ນຊົມຍິນດີໃນພຣະພອນທີ່ຈະມາສູ່ຄອບຄົວຂອງພຣະເຈົ້າ

**ຄຳຖາມເພື່ອຄົ້ນຄວ້າ:** ໃນພຣະເຢຊູ, ພຣະເຈົ້າໄດ້ກະທຳການຢ່າງໃດເພື່ອພວກເຮົາແດ່? ເປັນຫຍັງພຣະອົງຈຶ່ງກະທຳການຢ່າງນີ້?

**ຈຸດປະສົງຂອງບົດຮຽນ:** ເພື່ອຢາກໃຫ້ທຸກຄົນເຂົ້າໃນແຜນການຂອງພຣະເຈົ້າ ແລະມີຄວາມຮັບຜິດຊອບຕໍ່ແຜນການນັ້ນ.

**ຄົ້ນຄວ້າ ພ້ອມກັບການປະຕິບັດ**

- ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ປະຕິບັດຄວາມຮັກ ເພື່ອຄົນອື່ນຈະໄດ້ເຫັນພຣະເຢຊູໃນຄວາມຮັກນັ້ນ

## ຄຳນຳ

ຂ້າພະເຈົ້າຍັງຈຳນິທານເກົ່າໆເຣື່ອງນຶ່ງທີ່ເຄີຍໄດ້ຟັງເມື່ອຍັງນ້ອຍ. ມີກະສັດອົງນຶ່ງມັກຟັງນິທານ, ຖ້າໄດ້ຟັງນິທານແລ້ວ ສາມວັນສາມຄືນກໍຢູ່ໄດ້ບໍ່ມີເຫງົານອນ. ເມື່ອພຣະອົງໄດ້ຊາບຂ່າວວ່າ ມີນັກເລົ່ານິທານເກັ່ງຢູ່ອີກແຄ້ວນນຶ່ງ, ພຣະອົງຈຶ່ງຊົງໃຊ້ເສນາໄປເຊີນໃຫ້ມາເລົ່າໃຫ້ຟັງ.

ເມື່ອນັກເລົ່ານິທານມາເຖິງເຂົາກໍບໍ່ຊັກຊ້າ ເລີ້ມເລົ່ານິທານທັນທີ. ຄັນນິທານຈົບລົງແລ້ວເຂົາກໍຂໍລາກັບ. ກະສັດກໍຖາມເຂົາວ່າ: "ເຈົ້າຢາກໄດ້ຂອງຂວັນອັນໃດ?" "ແມ່ນຫຍັງກໍໄດ້ຕາມພຣະປະສົງຂອງພຣະອົງເຖີ້ນ" ນັກເລົ່ານິທານຄົນນີ້ຄິດວ່າຖ້າຈະເວົ້າໄປກໍຢ້ານໄດ້ນ້ອຍເກີນໄປ, ຂອງຂວັນຈາກກະສັດຄົງຈະເປັນສິ່ງທີ່ໃຫຍ່ ແລະມີຣາຄາແພງ. ຖ້າຢ່າງນັ້ນ ໃຫ້ເຈົ້າກັບບ້ານກ່ອນແລ້ວຂ້ອຍຈະສົ່ງໃຫ້ຕາມທີຫລັງ.

ອາທິດນຶ່ງຜ່ານໄປ, ສອງອາທິດກໍຜ່ານໄປອີກ, ນັກເລົ່ານິທານຄົນນີ້ກໍລໍຄອຍຂອງຂວັນວ່າຈະໄດ້ສິ່ງໃດຈາກກະສັດ. ໃນທີ່ສຸດລາວກໍໄດ້ເຫັນເສນາຂອງກະສັດມາມອບຂອງຂວັນໃຫ້ກັບລາວ, ເປັນຊອງເອກສານນ້ອຍໆ ແທນທີ່ຈະເປັນກ່ອງຫລືເປັນຫີບ ຫລືເປັນຖົງເປັນໄຖ່ໃຫຍ່ໆ....

ນິທານເຣື່ອງນີ້ສະແດງໃຫ້ພວກເຮົາເຫັນວ່າ ຄວາມຄາດຫມາຍຂອງພວກເຮົາ ບາງຄັ້ງກໍມີຄວາມຄາດຫມາຍສູງ ແຕ່ໃນພຣະຄັມພີບໍ່ເຄີຍໄດ້ບອກພວກເຮົາວ່າເຮົາຈະໄດ້ຢ່າງໃດ, ອັນໃດ.

**1. ຄຳສັນຍາ:** (ເອເຟໂຊ 1:1-3)
ໂປໂລເລີ່ມຈົດໝາຍດ້ວຍການແນະນຳຕົວເອງໃຫ້ກັບພີ່ນ້ອງຊາວເອເຟໂຊ ແລະກໍໄດ້ກ່າວເຖິງພຣະຄຸນແລະສັນຕິສຸກທີ່ມາຈາກພຣະເຈົ້າຈົ່ງໄດ້ສະຖິດຢູ່ກັບຜູ້ທີ່ເຊື່ອທັງຫລາຍ. ເມື່ອພວກເຮົາເຫັນຢ່າງນີ້ ກໍຮູ້ໄດ້ແລ້ວວ່າໂປໂລເປັນຜູ້ທີ່ຖືກເອີ້ນມາໃຫ້ເປັນສາວົກຂອງພຣະເຢຊູໂດຍກົງ. ລາວໄດ້ຮັບພຣະກະຣຸນາທິຄຸນຢ່າງຫລວງຫລາຍ.

ເຫມືອນຈົດໝາຍຫລາຍສະບັບທີ່ໂປໂລໄດ້ຂຽນອອກໄປ, ລາວໄດ້ຖາມຂ່າວແລະຂອບພຣະຄຸນໄປດ້ວຍ. ທຸກສິ່ງທຸກຢ່າງແມ່ນລາວສັຣເສີນໃນພຣະນາມຂອງພຣະເຢຊູຄຣິດເຈົ້າ. ຄຣິສຕຽນທີ່ມີຄວາມເຊື່ອຢ່າງແທ້ຈິງຕ້ອງມີພຣະເຢຊູເປັນຈຸດສູນກາງຂອງຊີວິດ, ແລະຈົດໝາຍນີ້ກໍແມ່ນເພື່ອໃຫ້ຄຣິສຕຽນທັງຫລາຍຮູ້ເຖິງບຸນຄຸນຂອງພຣະເຢຊູນັ້ນເອງ

ໂປໂລໄດ້ຍົກເອົາຮູບພາບມາໃຫ້ເຫັນກໍເພາະວ່າໃຜກໍຕາມທີ່ເອີ້ນພຣະອົງວ່າພຣະບິດາ ພຣະອົງຈະຊົງອວຍພຣະພອນທຸກໆຄົນ ແມ່ນວ່າບໍ່ມີໃຜເຄີຍໄດ້ເຫັນພຣະອົງຈັກເທື່ອກໍຕາມ.

ພວກເຮົາຈະໄດ້ຮັບພຣະພອນຈາກພຣະເຈົ້າຢ່າງໃດ? "ໃນພຣະເຢຊູຄຣິດເທົ່ານັ້ນ" ພຣະພອນຂອງພຣະເຈົ້າທີ່ພຣະອົງຊົງປະທານນັ້ນແມ່ນຢູ່ໃນພຣະເຢຊູ. (ເອເຟໂຊ 1:3) ຖ້າຢາກໄດ້ເຫັນພຣະພອນຢູ່ໃນຊີວິດ ພວກເຮົາຈຳເປັນຕ້ອງມີຄວາມສັມພັນກັບພຣະເຢຊູ. ພຣະເຈົ້າມີພຣະປະສົງຢາກໃຫ້ພວກເຮົາໄດ້ພຣະພອນ ແຕ່ພຣະອົງບໍ່ສາມາດຈະອວຍພຣະພອນໄດ້ ຖ້າພວກເຮົາຫາກບໍ່ມີຄວາມສັມພັນຢ່າງສນິດແຫນ້ນກັບພຣະເຢຊູ.

**2. ການຊົງຈັດຕຽມ:** (ເອເຟໂຊ 1:4-12)
ໂປໂລບໍ່ໄດ້ປ່ອຍໃຫ້ພວກເຮົາຄິດເດົາເອົາເອງ ລາວອະທິບາຍເຖິງການຈັດຕຽມຂອງພຣະເຈົ້າຕໍ່ພວກເຮົາຢ່າງຈະແຈ້ງ. ໃນຂໍ້ 4 ກ່າວວ່າ "ໃນພຣະຄຣິດນັ້ນ ພຣະອົງໄດ້ຊົງເລືອກພວກເຮົາໄວ້ຕັ້ງແຕ່ກ່ອນ ທີ່ຈະຊົງວາງຮາກສ້າງໂລກ." ຄວາມລອດພົ້ນບໍ່ແມ່ນສິ່ງທີ່ເຮົາກະທຳເພື່ອພຣະເຈົ້າ. ຄວາມລອດພົ້ນແມ່ນຂອງປະທານຈາກພຣະເຈົ້າ, ແມ່ນຂອງຂວັນທີ່ພຣະເຈົ້າມອບໃຫ້ແກ່ມະນຸດທຸກໆຄົນ. ພຣະເຈົ້າເປັນຜູ້ວາງແຜນການຊ່ວຍມະນຸດ. (ໂຢຮັນ 6:44) ພຣະເຢຊູຊົງຕອບເຂົາວ່າ "ຢ່າໄດ້ຈົ່ມເທາະ, ບໍ່ມີຜູ້ໃດມາຫາເຮົາໄດ້ ເວັ້ນໄວ້ແຕ່ພຣະບິດາຜູ້ຊົງໃຊ້ເຮົາມານັ້ນຈະຊົງຊັກນຳໃຫ້ເຂົາມາ ແລະຝ່າຍເຮົາ, ເຮົາຈະໃຫ້ຜູ້ນັ້ນຄືນມາໃນວັນສຸດທ້າຍ." ອີກອັນນຶ່ງ ພວກເຮົາກໍບໍ່ສາມາດສ້າງຄວາມລອດພົ້ນໃຫ້ຕົວເອງໄດ້, ນອກຈາກພຣະເຈົ້າເທົ່ານັ້ນ.

ຂໍ້ທີ 5 ກ່າວວ່າແຜນການນີ້ແມ່ນພຣະເຈົ້າໄດ້ວາງຄາດໝາຍໄວ້ແລ້ວ. ພຣະອົງມີພຣະປະສົງຢາກໃຫ້ຄົນທີ່ຫລົງຫາຍໄປນັ້ນໃຫ້ໄດ້ກັບຄືນມາຮັບເອົາສິດທິທີ່ພວກເຂົາຄວນຈະໄດ້ຮັບ ຄືກັບເຂົ້າມາຮ່ວມໃນຄອບຄົວຂອງພຣະເຈົ້າ ແລະເປັນຄົນໃຫມ່

ຂໍ້ທີ 7 ໂປໂລຍັງກ່າວອີກວ່າ ພຣະເຢຊູຍັງເປັນຜູ້ຊົງໄຖ່ດ້ວຍພຣະໂລຫິດຂອງພຣະອົງ. "**ການໄຖ່**" ຄຳວ່າໄຖ່ ໝາຍຄວາມວ່າ (ສິ່ງຂອງ) ກໍແມ່ນສິ່ງທີ່ເສັຍຫາຍໄປແລ້ວ ແຕ່ເມື່ອພົບແລ້ວກໍຂໍໄຖ່ເອົາຄືນມາ. (ຄົນ) ກໍແມ່ນຜູ້ທີ່ຫລົງຫາຍໄປແລ້ວ ແລະກໍຕົກຢູ່ໃນຄວາມບາບ ແລະກໍລໍຖ້າຄວາມຕາຍເທົ່ານັ້ນ. ຜູ້ໃດກໍຕາມ ຖ້າພຣະເຢຊູຫາກຊົງໄຖ່ແລ້ວ ພວກເຂົາກໍຈະມີອິສລະພາບ.

ຕໍ່ມາພວກເຮົາກໍໄດ້ຮັບການອະພັຍໂທດ (1:7) "**ອະພັຍໂທດ**" ກໍໝາຍຄວາມວ່າ ບໍ່ມີໂທດອີກຕໍ່ໄປ ແມ່ນຈະໜັກ

ຫລືເບົາ, ຫລາຍຫລືໜ້ອຍກໍຕາມ ພຣະອົງຈະຊົງລຶບລ້າງໃຫ້ໝົດສິ້ນ ຫລືອີກຢ່າງນຶ່ງກໍໝາຍຄວາມວ່າຍົກອອກໄປໃຫ້ໝົດສິ້ນ.

ເມື່ອຊົງໄຖ່ອອກມາແລ້ວ ພຣະອົງກໍຊົງໂຜດໃຫ້ພວກເຮົາຮູ້ເຖິງຄວາມລັບເລິກ ຕາມນ້ຳພຣະທັຍຂອງພຣະອົງ (ຂໍ້ 9). "**ຄວາມລັບເລິກ**" ບໍ່ແມ່ນຂໍ້ຄວາມທີ່ໜ້າຢ້ານໜ້າກົວອັນໃດທັງນັ້ນ, ຄວາມລັບເລິກນີ້ແມ່ນການເປີດເຜີຍໃຫ້ຄົນຂອງພຣະເຈົ້າຮູ້ເຖິງພຣະປະສົງຂອງພຣະອົງ. ການທີ່ຈະເຂົ້າໃຈໄດ້ນັ້ນຕ້ອງເປັນຄົນທີ່ມີຄວາມເຊື່ອ ບໍ່ແມ່ນເປັນຄົນທີ່ຜ່ານມະຫາວິທະຍາລັຍ ຫລືເປັນນັກວິທະຍາສາດ ຫລືເປັນນັກການເມືອງ....ແລະນັກເທດຜົນອື່ນໆ

ລວມແລ້ວແຜນການຂອງພຣະເຈົ້າກໍຄືວ່າ: ພຣະເຢຊູສະເດັດລົງມາ ເພື່ອລຶບລ້າງສິ່ງທີ່ກີດຂວາງລະຫວ່າງພຣະເຈົ້າກັບມະນຸດ, ມາຍົກຍ້າຍຄວາມເລື່ອມລ້ຳຕ່ຳສູງ, ມາປິດຊ່ອງຫວ່າງທີ່ຂວາງກັ້ນພວກເຮົາກັບພຣະເຈົ້າ. ພຣະເຈົ້າຢາກຮວບຮວມສິ່ງສາລະພັດທີ່ມີໃນສວັນແລະແຜ່ນດິນໂລກໄວ້ໃນອົງພຣະຄຣິດຜູ້ຊົງເປັນພຣະປະມຸກ.

ພວກເຮົາຈະຮູ້ສິ່ງເຫລົ່ານີ້ໄດ້ຢ່າງໃດ? ຈະເກີດຂຶ້ນໃນເວລາໃດ? ພວກເຮົາຈະຮູ້ໄດ້ຢ່າງໃດວ່າພວກເຮົາໄດ້ຖືກເລືອກແລ້ວ? ພວກເຮົາຈະຮູ້ໄດ້ຢ່າງໃດວ່າພວກເຮົາຖືກໄຖ່ໄວ້ແລ້ວ? ພວກເຮົາຈະຮູ້ໄດ້ຢ່າງໃດວ່າພວກເຮົາໄດ້ຮັບການອະພັຍໂທດແລ້ວ? ພວກເຮົາຈະຮູ້ໄດ້ຢ່າງໃດວ່າພຣະອົງຊົງເປີດເຜີຍຄວາມລັບເລິກໃຫ້ກັບພວກເຮົາແລ້ວ? ພວກເຮົາຈະຮູ້ໄດ້ຢ່າງໃດວ່າຄວາມລອດພົ້ນນັ້ນເປັນຄວາມຈິງ? ສິ່ງທັງໝົດເຫລົ່ານີ້ຈະຮູ້ໄດ້ແທ້ນັ້ນກໍຕໍ່ເມື່ອພຣະວິນຍານບໍຣິສຸດທີ່ຢູ່ໃນຕົວເຮົາເປັນຜູ້ຢືນຢັນວ່າເຮົາມີຄວາມເຊື່ອແທ້.

**3. <u>ການປະທັບຕຣາ:</u>** (ເອເຟໂຊ 1:13-14)
ພຣະວິນຍານບໍຣິສຸດກະທຳການຢ່າງໃດໃນຊີວິດຂອງພວກເຮົາ? ໂປໂລກ່າວໄວ້ສອງຢ່າງກ່ຽວກັບການທຳງານຂອງພຣະວິນຍານບໍຣິສຸດໃນຫົວໃຈຂອງພວກເຮົາ.
ປັດຈຸບັນນີ້ພຣະວິນຍານບໍຣິສຸດປະທັບຕາພວກເຮົາ. "ການປະທັບຕາ" ມີຢູ່ສີ່ຢ່າງ:

- ປະທັບຕາ ເພື່ອຢັ້ງຢືນວ່າຖືເປັນທາງການໄດ້, ໃຊ້ໄດ້ຕາມກົດໝາຍ(ພວກເຮົາເປັນຄົນຂອງພຣະຄຣິດຢ່າງເປັນທາງການແລ້ວ)
- ປະທັບຕາ ເພື່ອຢັ້ງຢືນວ່າມີເຈົ້າຂອງແລ້ວ, (ພຣະເຢຊູເປັນເຈົ້າຂອງພວກເຮົາແລ້ວ)
- ປະທັບຕາ ເພື່ອປ້ອງກັນບໍ່ໃຫ້ມີການທຳລາຍ (ປະທັບຕາຂີ້ຄັ່ງໃນການສົ່ງໜັງສື...) ພຣະເຢຊູຄຣິດເປັນຜູ້ປົກປ້ອງພວກເຮົາແລ້ວ ບໍ່ມີຜູ້ໃດສາມາດທຳລາຍໄດ້
- ປະທັບຕາ ເພື່ອຢັ້ງຢືນວ່າ ການຊົງໄຖ່ໄດ້ສຳເຣັດແລ້ວ (ພວກເຮົາເປັນຄົນຂອງພຣະເຢຊູຢ່າງສົມບູນແລ້ວ)

ພຣະວິນຍານບໍຣິສຸດຊົງສະຖິດຢູ່ນຳຜູ້ທີ່ເຊື່ອທຸກຄົນ ແລະຄ້ຳປະກັນໄດ້ວ່າເປັນຄວາມຈິງ. (ໂຣມ 8:16) ໃນອະນາຄົດຂ້າງໜ້າພຣະວິນຍານບໍຣິສຸດຈະຊົງກະທຳໃຫ້ສຳເຣັດເພື່ອພວກເຮົາ (1:14)

ສ່ວນມໍຣະດົກນັ້ນ ອາດຈະເປັນຮ່າງກາຍໃໝ່ທີ່ພຣະອົງຈັດຕຽມຖ້າພວກເຮົາ, ຫລືວ່າການຄືນພຣະຊົນ, ຫລືວ່າແຜ່ນດິນສວັນ, ຫລືວ່າສະຖານທີ່ພິເສດ ທີ່ພຣະເຢຊູຊົງສັນຍາໄວ້ແກ່ພວກເຮົາ (ໂຢຮັນ 14:1-3)

## <u>ສິ່ງທີ່ຄວນນຳໄປປະຕິບັດ:</u>

ກ່ອນອື່ນໝົດ, ພຣະທັມຊົງສອນວ່າຄວາມຮັ່ງມີຂອງພວກເຮົາແມ່ນພຣະເຈົ້າ ເພາະວ່າພຣະເຈົ້າຊົງເປັນເຈົ້າຂອງ

ສວັນ, ພວກເຮົາຈະໄດ້ຮັບມໍຣະດົກທຸກຢ່າງທີ່ພຣະເຈົ້າມີ.
ຫລາຍຄັ້ງຫລາຍຄາວພວກເຮົາພົບກັບການທ້າທາຍຂອງຊີວິດໃນສິ່ງທີ່ຕາເບິ່ງເຫັນໄດ້, ເຂົ້າໃຈໄດ້ ເປັນຫນ້າຢາກໄດ້ແທ້ໆ. ແຕ່ຖ້າພວກເຮົາຫາກຄິດເຖິງຄວາມຮັ່ງຂອງພຣະເຈົ້າທີ່ພຣະອົງຈະປະທານໃຫ້ແກ່ເຮົາແລ້ວ ພວກເຮົາຈະຄິດວ່າຢ່າງໃດ. ນີ້ລະຄືຊີວິດຄຣິສຕຽນທີ່ຕ້ອງມີຄວາມຫມັ້ນໃຈ. ຖ້າພວກເຮົາຫາກມີຄວາມເຊື່ອພຽງພໍ, ເຊື່ອຟັງຄໍາສັນຍາຂອງພຣະອົງ, ພຣະອົງຈະປະທານໃຫ້ພວກເຮົາມີສຸຂພາບແຂງແຮງ, ພຣະອົງຈະເຮັດໃຫ້ເຮົາຮັ່ງມີ, ພຣະອົງຈະເຮັດໃຫ້ເຮົາມີຄວາມສລາດ.

ໂປໂລຍັງໄດ້ກ່າວກັບພວກເຮົາອີກວ່າ ພຣະເຈົ້າຈະຊ່ວຍພວກເຮົາທຸກຢ່າງໃນການກະທໍາຂອງພວກເຮົາ. ພຣະເຈົ້າຈະສະຖິດຢູ່ກັບພວກເຮົາແລະພຣະອົງຈະນໍາພາໃຫ້ເຮົາເຂົ້າໄປໃນສະຖານທີ່ເຫມາະສົມ.

**<u>ຄໍາຖາມ</u>**

1. ເປັນຫຍັງພວກເຮົາຈຶ່ງດໍາຣົງຊີວິດຄຣິສຕຽນໃນລະດັບທີ່ຕໍ່າ ?

2. ພຣະພອນຝ່າຍພຣະວິນຍານບໍຣິສຸດ ທີ່ພວກເຮົາຮຽນຜ່ານມາ ມີສິ່ງໃດທີ່ທ່ານຈໍາໄດ້ຢ່າງຈະແຈ້ງດີ?

3. ຖ້ອຍຄໍາຕອນໃດທີ່ພຣະເຈົ້າກ່າວວ່າຈະເພີ້ມເຕີມໃຫ້ພວກເຮົາໄດ້ເຂົ້າໃຈພຣະອົງດີຂຶ້ນ?

4. ຖ້ອຍຄໍາຕອນໃດ ທີ່ກ່າວເຖິງ ພຣະເຈົ້າພຣະບິດາ?

5. ພວກເຮົາຈະຈໍາໄດ້ຢ່າງໃດວ່າ ອັນນີ້ແມ່ນການຊົງຈັດຕຽມທີ່ ພຣະເຈົ້າຊົງຈັດຕຽມໄວ້ເພື່ອພວກເຮົາ?

*ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 2
# ພຣະເຈົ້າເຮັດໃຫ້ມີຄວາມແຕກຕ່າງ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ເອເຟໂຊ 2:1-10

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ 2:1-10

**ຈຸດສໍາຄັນຂອງບົດຮຽນນີ້:** ພວກເຮົາສາມາດມີຄວາມຊື່ນຊົມຍິນດີທີ່ພຣະເຈົ້າເຮັດໃຫ້ມີການປ່ຽນແປງໃນຊີວິດ ຂອງພວກເຮົາໃນປັດຈຸບັນແລະຕລອດໄປໄດ້ ຖ້າເຮົາວາງໃຈໃນພຣະເຢຊູຄຣິດ.

**ຄໍາຖາມເພື່ອຄົ້ນຄວ້າ:** ຖ້າວາງໃຈໃນພຣະຄຣິດແລ້ວ ຈະມີອັນໃດປ່ຽນແປງ

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄດ້ຊີ້ແຈງໃຫ້ເຫັນວ່າ ຄວາມແຕກຕ່າງທີ່ພຣະເຈົ້າກະທໍາໃນປັດຈຸບັນແລະຕລອດ ໄປນັ້ນ ແມ່ນພຣະອົງຊົງກະທໍາໃນພຣະເຢຊູຄຣິດ.

**ຄົ້ນຄວ້າ ພ້ອມກັບການປະຕິບັດ**

- ຢັ້ງຢືນວ່າ ພຣະຄັມພີມີອໍານາດໃນການນໍາພາຊີວິດ ແລະ ໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກຄົນ
- ເສີມຂຍາຍການເຕີບໃຫຍ່ຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ຍົກສູງທຸກຄົນ ໂດຍເຫັນວ່າ ພວກເຂົາກໍແມ່ນພຣະລັກສະນະຂອງພຣະເຈົ້າ

**ຄໍານໍາ**

ບົດຮຽນນີ້ ເປັນບົດຮຽນທີ່ສໍາຄັນສໍາລັບທຸກຄົນ ເພາະເປັນບົດຮຽນທີ່ພວກເຮົາຈະສຶກສາເຖິງການຄືນດີກັບພຣະເຈົ້າ. ແຕ່ຢ່າງໃດກໍຕາມໃນສັງຄົມຂອງພວກເຮົາມີຄວາມແຕກຕ່າງກັນຢູ່ຫລາຍກຸ່ມຊົນ. ຂ້າພະເຈົ້າຂໍຍົກເອົາສອງປະເພດມາເວົ້າໃຫ້ພີ່ທ່ານເຂົ້າໃຈ ເພາະສອງກຸ່ມນີ້ຈະເປັນກຸ່ມທີ່ໃຫຍ່ ຄື: ກຸ່ມຄົ້ນຄວ້າຫາວິທີການແບບໃຫມ່ ແລະກຸ່ມຕາມສຽງມະຫາຊົນ.

<u>ກຸ່ມຄົ້ນຄວ້າຫາວິທີການແບບໃຫມ່:</u> ກຸ່ມນີ້ມັກປະຕິເສດຄວາມຈິງ ແລະຍັງເປັນກຸ່ມຕໍ່ສູ້ດ້ວຍ. ກຸ່ມນີ້ຈະມີແນວໂນ້ມໄປຫາທຸກວິທີທາງ (ສາສນາໃດກໍໄດ້, ສາສນາໃດກໍດີຫມົດ. ບາງຄັ້ງຄາວກໍຄິດຄົ້ນເອົາສາສນາຕົນເອງຂຶ້ນມາປະຕິບັດ ແລະກໍເວົ້າວ່າວິທີຂອງຕົນເອງຖືກຕ້ອງ ຂອງຜູ້ອື່ນຜິດຫມົດ.

<u>ກຸ່ມຕາມສຽງມະຫາຊົນ:</u> ກຸ່ມນີ້ຈະເຊື່ອກັນເປັນຫມວດເປັນຫມູ່ ບໍ່ມີສ່ວນຕົວ ແລະກໍຖືກຕ້ອງທີ່ສຸດ. ດັ່ງນັ້ນລະຈຶ່ງມີຫລາຍແຜນການຫລາຍສາສນາໃນທົ່ວໂລກ. ຜົນຕາມມາ ກຸ່ມນີ້ມັກຈະເຫັນໄດ້ໃນຍາດພີ່ນ້ອງເທົ່ານັ້ນ.

ຂ້າພະເຈົ້າມັກຟັງ, ມັກອ່ານ ຈຶ່ງພົບຫລາຍແບບຫລາຍຢ່າງ ແຕ່ສິ່ງທີ່ຂ້າພະເຈົ້າເປັນຫ່ວງຫລາຍທີ່ສຸດນັ້ນກໍຄືວ່າ ພວກເຂົາຫລົງຈາກທາງຄວາມເຊື່ອຂອງຄຣິສຕຽນໄປ. ພວກເຮົາຈະແນະນໍາພວກທີ່ຫລົງທາງໄປນັ້ນໃຫ້ຄືນມາມີຄວາມສັມພັນກັບພຣະເຈົ້າຢ່າງໃດ? ແລະແມ່ນຫຍັງຄືຄວາມແຕກຕ່າງທີ່ຈະເຮັດໃຫ້ຄວາມສັມພັນທີ່ຖືກຕ້ອງນັ້ນຢູ່ໃນຊີວິດຂອງພວກເຮົາ? ໂປໂລໄດ້ສອນພວກເຮົາຢູ່ໃນ ເອເຟໂຊບົດທີສອງ ເຖິງແບບຢ່າງນີ້.

**1. <u>ຈາກຄວາມຕາຍ:</u>** (ເອເຟໂຊ 2:1-3)

ອີງຕາມຄຳສອນຂອງໂປໂລ, ພວກເຮົາຈຳເປັນຕ້ອງຄືນດີກັບພຣະເຈົ້າ ເພາະວ່າຕາມທີ່ຈິງແລ້ວພວກເຮົາໄດ້ຕາຍແລ້ວຝ່າຍຈິດວິນຍານ. ໂປໂລກ່າວໃນຂໍ້ທີ 1 ວ່າ "*ທ່ານຕາຍແລ້ວໂດຍການລະເມີດແລະການບາບ.*" ບໍ່ມີພຣະເຢຊູ ມະນຸດກໍຍັງບໍ່ຕາຍ, ຮ່າງກາຍຂອງເຂົາຍັງເຫນັງຕີງໄດ້, ໄປມາໄດ້. ບໍ່ມີພຣະເຢຊູ ມະນຸດກໍຍັງມີຄວາມສລາດຕາມທັມດາຂອງມະນຸດ. ບໍ່ມີພຣະເຢຊູ ມະນຸດກໍຍັງສາມາດຄິດແລະມີເຫດມີຜົນໄດ້ຢູ່. ບໍ່ມີພຣະເຢຊູ ມະນຸດກໍຍັງມີຄວາມເມດຕາປານີໄດ້ຢູ່. ຄຳເວົ້າຂອງໂປໂລ ທີ່ກ່າວນີ້ ແມ່ນກ່າວເຖິງວິນຍານ.

ແມ່ນຫຍັງທີ່ເຮັດໃຫ້ຈິດວິນຍານຕ້ອງຕາຍ? ໂປໂລກ່າວວ່າ "ຕາຍຍ້ອນການລະເມີດ ແລະຄວາມບາບ" ການລະເມີດແມ່ນການລ່ວງເກີນ, ການຫລີກອອກຈາກທາງ, ບໍ່ເດີນຕຣົງ, ຫລືແປອີກຢ່າງນຶ່ງວ່າຫລົງທາງ, ເຫັນຜິດເປັນຖືກ. ການບາບ ແມ່ນການເດີນຊີວິດທີ່ບໍ່ຖືກເປົ້າ, ຫລືແປອີກຢ່າງນຶ່ງວ່າແນໃສ່ບໍ່ຖືກຈຸດ. ນີ້ລະຄືຊີວິດຂອງພວກເຮົາ, ພວກເຮົາຢາກຫັນເຫອອກຈາກແຜນການຂອງພຣະເຈົ້າ ທີ່ພຣະອົງມີພຣະປະສົງຕໍ່ຊີວິດຂອງພວກເຮົາ. ຜົນທີ່ຕາມມາກໍຄືບາບ ແລະຜົນຂອງຄວາມບາບກໍຄືຄວາມຕາຍ. ນີ້ແມ່ນຄວາມຕາຍຝ່າຍຈິດວິນຍານ.

ໂປໂລກ່າວວ່າ ທ່ານເຄີຍປະພຶດການລະເມີດແລະການບາບມາແລ້ວ, ທ່ານເຄີຍປະຕິບັດຕາມວິຖີທາງຂອງໂລກນີ້ (2:2) ພວກເຮົາບໍ່ໄດ້ປະພຶດຕາມຊີວິດຄຣິສຕຽນ, ພວກເຮົາບໍ່ໄດ້ຢູ່ໃນການຄວບຄຸມຂອງພຣະຄຣິດ ແຕ່ວ່າພວກເຮົາຢູ່ໃຕ້ການຄວບຄຸມຂອງມານຊາຕານ ຊຶ່ງໂປໂລເອີ້ນວ່າ "ເຈົ້າແຫ່ງຍ່ານອາກາດ"

ສາມສິ່ງທີ່ຄວບຄຸມຈິດວິນຍານຂອງມະນຸດຄື: ໂລກ, ມານ, ແລະຮ່າງກາຍ. ເວລາພວກເຮົາກະທຳບາບ, ພວກເຮົາກໍກຳລັງປ່ອຍຕົວຂອງເຮົາໃຫ້ໂລກນີ້ຄວບຄຸມເຮົາ. ເວລາເຮົາກະທຳບາບ ແມ່ນພວກເຮົາກຳລັງປ່ອຍຕົວໃຫ້ທາງຊາຕານຄວບຄຸມຊີວິດຂອງເຮົາ. ເວລາເຮົາກະທຳບາບແມ່ນພວກເຮົາກຳລັງ ປ່ອຍຕົວໄປຕາມຄວາມຕ້ອງການຂອງຮ່າງກາຍ ຫລືອີກຄວາມນຶ່ງວ່າ ປ່ອຍຕົວໄປຕາມທັມຊາດ.

ຜູ້ໃດທີ່ປ່ອຍຕົວໄປຕາມໂລກ, ມານຊາຕານ, ແລະຮ່າງກາຍຜູ້ນັ້ນແມ່ນຈິດວິນຍານຕາຍແລ້ວ. ໂປໂລກ່າວວ່າພວກເຮົາກໍເຄີຍເປັນເຊັ່ນນັ້ນເຫມືອນກັນ. (2:3)

**2. <u>ສູ່ຊີວິດ:</u>** (ເອເຟໂຊ 2:4-5)

ການຄືນດີທີ່ພຣະເຈົ້າຊົງຈັດຕຽມເພື່ອຜູ້ທີ່ຈິດວິນຍານຕາຍແລ້ວຄືອັນໃດ? ຄຳຕອບທີ່ໂປໂລຈັດຕຽມໄວ້ໃນຂໍ້ 4 ແລະ5 ມີອັນໃດແດ່? "ເພິ່ນຢັ້ງຢືນວ່າພຣະເຈົ້າຊົງເຕັມລົ້ນດ້ວຍພຣະຄຸນ, ພຣະຄຸນນັ້ນລະຈະທຳໃຫ້ພວກເຮົາມີຊີວິດຄືນມາອີກໃນພຣະຄຣິດ." ສົມມຸດວ່າສອງຜົວເມັຍໄດ້ຮັບໂທຣະເລກຈາກທາງສນໍຣະພູມແນວຣົບວ່າລູກຊາຍຂອງເຂົາໄດ້ເສັຍຊີວິດແລ້ວ. ແຕ່ໃນວັນຕໍ່ມາເຂົາເຈົ້າກໍໄດ້ຮັບຂ່າວອີກວ່າການລາຍງານມີການຜິດພາດ. ລູກຊາຍຂອງພວກເຂົາຍັງມີຊີວິດຢູ່. ນີ້ຄືຂ່າວດີທີ່ສຸດ. ແຕ່ຄຳເວົ້າຂອງໂປໂລ ຍິ່ງເປັນທີ່ປະເສີດກວ່ານີ້ຫລາຍເທົ່າ ໂດຍສະເພາະຢ່າງຍິ່ງກໍແມ່ນເພື່ອພວກເຮົາຜູ້ທີ່ຈິດວິນຍານໄດ້ຕາຍແລ້ວ, ພຣະເຈົ້າໄດ້ເຮັດໃຫ້ພວກເຮົາຟື້ນຂຶ້ນມາ ມີຊີວິດໃຫມ່, ມີຄຸນນະພາບໃຫມ່, ແລະດຳເນີນຕລອດໄປ. ທີ່ຈະຄືນດີກັບພຣະເຈົ້າໄດ້ນັ້ນພວກເຮົາຈຳເປັນຕ້ອງບັງເກີດໃຫມ່.

ພຣະເຈົ້າຈະປະທານຊີວິດນີ້ໃຫ້ພວກເຮົາໃນເວລາໃດ? ພຣະອົງປະທານໃຫ້ແກ່ພວກເຮົາເວລາພວກເຮົາປະຖິ້ມການລ່ວງລະເມີດ ຫລົງຜິດ. ຈິດວິນຍານຈະປ່ຽນແປງໄດ້ນັ້ນກໍຕ້ອງອາສັຍຣິດເດດຂອງພຣະເຈົ້າ ພວກເຮົາຈະປ່ຽນແປງເອງບໍ່ໄດ້ແນ່ນອນ .

ໂປໂລກ່າວວ່າພຣະເຈົ້າເປັນຜູ້ຊົງຈັດຕຽມຊີວິດນີ້ເພື່ອພວກເຮົາ "ຊີວິດໃນພຣະຄຣິດ" ພຣະຄຣິດໄດ້ສະລະຊີວິດຂອງພຣະອົງຢູ່ເທິງໄມ້ກາງແຂນເພື່ອພວກເຮົາທັງຫລາຍຈະມີຊີວິດ. ພຣະຄຣິດຈ່າຍຄ່າໜີ້ບາບໃຫ້ກັບພວກເຮົາ ເພື່ອຈະນຳພວກເຮົາໃຫ້ມີຄວາມສັມພັນ, ຄືນດີກັບພຣະເຈົ້າ. ໃນ 2 ໂກຣິນໂທ 5:21 "ເພາະວ່າພຣະເຈົ້າໄດ້ຊົງກະທຳໃຫ້ພຣະຄຣິດຜູ້ຊົງບໍ່ມີຄວາມບາບນັ້ນໄດ້ເຂົ້າສ່ວນກັບຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ສ່ວນໃນຄວາມຊອບທັມຂອງພຣະເຈົ້າໂດຍທາງພຣະອົງ"

ເປັນຫຍັງພຣະເຈົ້າຈຶ່ງຢາກໃຫ້ພວກເຮົາຄືນດີກັບພຣະອົງ ແລະປະທານຊີວິດໃຫມ່ໃຫ້ແກ່ພວກເຮົາ? ແມ່ນຫຍັງຄືສິ່ງທີ່ເຮັດໃຫ້ພຣະອົງຢາກກະທຳ? ພຣະຄຸນອັນຍິ່ງໃຫຍ່ແລະຄວາມຮັກຊຶ່ງມີຢູ່ໃນພຣະອົງຄືສິ່ງທີ່ເຮັດໃຫ້ພຣະອົງຢາກກະທຳ. (2:5) ພຣະຄຸນແມ່ນສິ່ງທີ່ພວກເຮົາບໍ່ສົມຄວນໄດ້ຮັບແຕ່ພຣະອົງປະທານໃຫ້ ເຊັ່ນຄວາມລອດ. ຄວາມຮັກແມ່ນສິ່ງພິເສດສຳລັບທຸກຄົນ ພຣະຄັມພີໄດ້ບັລຍາຍໄວ້ວ່າຄວາມຮັກຂອງພຣະອົງເປັນອັມະຕະ (ບໍ່ມີເງື່ອນໄຂແລະບໍ່ມີທີ່ສິ້ນສຸດ)

**3. <u>ດ້ວຍພຣະຄຸນແລະໂດຍທາງຄວາມເຊື່ອ:</u>** (ເອເຟໂຊ 2:6-9)
ຜົນຂອງການຮັບຂອງປະທານຈາກພຣະເຈົ້ານີ້ ໂປໂລບອກເຖິງປັດຈຸບັນ (2:6) ແລະອານາຄົດ (2:7). ປັດຈຸບັນພຣະອົງຊົງໂຜດໃຫ້ເຮົານັ່ງໃນສວັນສະຖານດ້ວຍກັນກັບພຣະເຢຊູຄຣິດ. ນີ້ລະຄືປະສົບການຂອງພວກເຮົາ, ເມື່ອເຮົາຕາຍແລະຟື້ນຂຶ້ນມາໃນພຣະເຢຊູຄຣິດແລ້ວພວກເຮົາກໍຢູ່ໃນພຣະອົງ ບໍ່ວ່າພຣະອົງຈະຢູ່ທີ່ໃດກໍຕາມ.

ພຣະຄັມພີຊົງເພີ້ມເຕີມອີກວ່າ ວັນນຶ່ງໃນອະນາຄົດພຣະອົງຈະສຳແດງພຣະຄຸນອັນເຫລືອລົ້ນພົ້ນປະມານຂອງພຣະອົງນັ້ນ. ພຣະຄຸນອັນເຫລືອລົ້ນນັ້ນ ພວກເຮົາຈະໄດ້ພົບໄດ້ເຫັນໂດຍທີ່ພວກເຮົາບໍ່ເຄີຍຄາດຄິດມາກ່ອນ.

ພວກເຮົາຈະໄດ້ຮັບພຣະພອນນີ້ໃນປັດຈຸບັນແລະອະນາຄົດຢ່າງໃດ? ໂປໂລຕອບຄຳຖາມນີ້ວ່າ "ພຣະຄຸນແລະຄວາມເຊື່ອ" ພວກເຮົາຕ້ອງແນ່ໃຈວ່າເຮົາມີຄວາມຮັບຜິດຊອບກັບຄວາມເຊື່ອຢ່າງໃດ. ສິ່ງເຫລົ່ານີ້ບໍ່ແມ່ນເຮົາເຮັດເອົາເອງໄດ້. ຄວາມພົ້ນບໍ່ແມ່ນມາຍ້ອນການປະຕິບັດເອົາຫລືກະທຳເອົາເອງ. (2:9)

**4. <u>ເພື່ອປະກອບການດີ:</u>** (ພຣະທັມເອເຟໂຊ 2:10)
ເມື່ອເຮົາມີຄວາມຮັບຜິດຊອບໃນພຣະຄຸນຂອງພຣະເຈົ້າດ້ວຍຄວາມເຊື່ອແລ້ວ ສາຍສັມພັນການຄືນດີກັບພຣະເຈົ້າກໍຟື້ນຄືນມາ, ການມີຊີວິດໃຫມ່ກໍເລີ້ມຂຶ້ນ. ຂໍ້ທີ 10 ແທນທີ່ຈະທຳງານເພື່ອບັນດາພວກມານຊາຕານ ພວກເຮົາກໍຈະເລີ້ມກະທຳການດີສຳລັບວຽກງານຂອງພຣະເຈົ້າດ້ວຍຄວາມເຊື່ອ.

ພວກເຮົາເປັນສິພຣະຫັດຂອງພຣະເຈົ້າ. ພຣະເຈົ້ານຳພວກເຮົາໃຫ້ຫັນກັບມາຄືນດີກັບພຣະອົງ. ແຕ່ເມື່ອພວກເຮົາໄດ້ຮັບການຄືນດີແລ້ວ ພວກເຮົາກໍຄວນຈະປະຕິບັດຕົວໃຫ້ເປັນຕົວຢ່າງທີ່ດີດ້ວຍ. ມັດທາຍ 5:16 "ພວກທ່ານຈົ່ງສ່ອງແຈ້ງແກ່ຄົນທັງປວງ ເ ພື່ອວ່າເມື່ອເຂົາເຫັນການດີທີ່ພວກທ່ານເຮັດເຂົາຈະໄດ້ສັລເສີນພຣະບິດາຂອງພວກທ່ານຜູ້ຊົງສະຖິດຢູ່ໃນສວັນ."

**<u>ຄຳແນະນຳແລະພາກປະຕິບັດ:</u>**
ໃນບົດຮຽນວັນນີ້ ພວກເຮົາໄດ້ທັງພຣະຄຳທີ່ຄ້ຳປະກັນແລະຄຳຕັກເຕືອນ.
<u>ຄ້ຳປະກັນ:</u> ພຣະອົງສາມາດປ່ຽນແປງພວກເຮົາທຸກຄົນດ້ວຍພຣະຄຸນແລະຄວາມຮັກຂອງພຣະອົງໂດຍບໍ່ເລືອກຊັ້ນ

ວັນນະ.

<u>ຄຳຕັກເຕືອນ:</u> ຜູ້ທີ່ເຊື່ອທັງຫລາຍຕ້ອງສະແດງຄວາມເຊື່ອວ່າຕົນໄດ້ຮັບຄວາມລອດພົ້ນຢ່າງແທ້ຈິງ, ກະທຳການດີເພື່ອໃຫ້ຄົນທັງຫລາຍໄດ້ເຫັນເສັ້ນທາງຂອງພຣະເຈົ້າ. "ເຮົານີ້ແຫລະເປັນທາງນັ້ນ ເປັນຄວາມຈິງແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ ນອກຈາກຈະມາທາງເຮົາ." ໂຢຮັນ 14:6

## <u>ຄຳຖາມ</u>

1. ເປັນຫຍັງພວກກຸ່ມສຽງສ່ວນຫລາຍຈຶ່ງມີຄົນນິຍົມຊົມຊອບຢ່າງມາກມາຍໃນທຸກວັນນີ້?

2. ເປັນຫຍັງຄົນຈຶ່ງຍັງສແວງຫາຄວາມລອດພົ້ນດ້ວຍການກະທຳດີດ້ວຍຕົນເອງຢູ່?

3. ບົດຮຽນໃນວັນນີ້ຊ່ວຍສອນພວກເຮົາຫຍັງແດ່ ກ່ຽວກັບການຄືນດີກັບພຣະເຈົ້າ?

4. ທ່ານພໍຄິດອອກບໍ່ວ່າ ໃນພຣະຄັມພີໃຫມ່ ຍັງມີຕອນໃດທີ່ກ່າວກ່ຽວກັບການຄືນດີກັບພຣະເຈົ້າ?

5. ອະທິບາຍຄວາມແຕກຕ່າງລະຫວ່າງລອດພົ້ນດ້ວຍການກະທຳດີ ແລະລອດພົ້ນເພື່ອກະທຳການດີ

*ດຣ. ບຸນໂຮມ ພົມມະຈັນ*

## ບົດຮຽນທີ 3
## ຈົ່ງເຮັດໃຫ້ທຸກຄົນເຂົ້າຢູ່ໃນຄອບຄົວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເອເຟໂຊ 2:11-22

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ 2:11-22

**ຈຸດສຳຄັນຂອງບົດຮຽນນີ້:** ໃນພຣະເຢຊູຄຣິດ ພຣະເຈົ້າໄດ້ຊົງເຮັດໃຫ້ພວກເຮົາຢູ່ຮ່ວມກັນດ້ວຍການປະສົມປະສານ ແລະດ້ວຍສັນຕິສຸກທີ່ມາຈາກຄວາມເປັນອັນນຶ່ງອັນດຽວກັນ.

**ຄຳຖາມເພື່ອຄົ້ນຄວ້າ:** ເປັນຫຍັງຄຣິສຕຽນບັບຕິສຈຶ່ງມີການລົ້ມເຫລວ ໃນການປະສົມປະສານງານ, ລົ້ມເຫລວໃນການຮັບສັນຕິສຸກທີ່ພຣະເຈົ້າມອບໃຫ້ໃນພຣະຄຣິດ, ແລະພວກເຮົາຈະແກ້ໄຂຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະຊີ້ໃຫ້ເຫັນວ່າຄວາມເປັນອັນດຽວກັນທີ່ພຣະເຈົ້າມອບໃຫ້ໃນພຣະເຢຊູຄຣິດ ເປັນທາງດຽວເທົ່ານັ້ນໃນປັດຈຸບັນນີ້.

### ຄົ້ນຄວ້າ ພ້ອມກັບການປະຕິບັດ

- ຢັ້ງຢືນວ່າ ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະ ໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກງຄົນ
- ເສີມຂຍາຍການເຕີບໃຫ່ຍຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ຍົກສູງທຸກງຄົນ ໂດຍເຫັນວ່າ ພວກເຂົາກໍແມ່ນພຣະລັກສະນະຂອງພຣະເຈົ້າ

### ຄຳນຳ

ຈິງຫລື, ທີ່ວ່າມະນຸດຈະຢູ່ຮ່ວມກັນດ້ວຍການປະສົມປະສານງານກັນ, ແລະສັນຕິສຸກໃນຄວາມເປັນອັນນຶ່ງອັນດຽວກັນໄດ້? ໃນສມັຍແຕ່ກ່ອນ ຄົນຢິວແລະຄົນຕ່າງຊາດມີຄວາມແຕກຕ່າງກັນປານຟ້າກັບດິນ ບໍ່ວ່າຈະເປັນທາງຄວາມຮູ້ສຶກ ຫລືທາງດ້ານແນວຄິດ. ສອງພວກນີ້ມີການແບ່ງແຍກ, ກຽດຊັງ, ຖືຊັ້ນວັນນະ,ເປັນກຳແພງອັນໃຫຍ່ຂວາງກັ້ນ ຊຶ່ງບໍ່ມີໃຜຈະສາມາດລົບລ້າງລົງໄດ້. ແຕ່ວ່າໃນພຣະທັມຄັມພີທີ່ພວກເຮົາ ເຫັນນຳກັນນີ້ ພຣະເຢຊູໄດ້ນຳຄົນສອງພວກນີ້ເຂົ້າມາຫາກັນໃຫ້ເປັນອັນນຶ່ງອັນດຽວກັນ. ພວກເຮົາຍັງຈະກ້າເວົ້າໄດ້ບໍ່ວ່າ ພຣະເຢຊູຍັງກະທຳການນີ້ຢູ່ໃນໂລກປັດຈຸບັນນີ້? ພຣະອົງຈະກະທຳຢ່າງໃດ?

**1. ຄວາມບໍ່ເຂົ້າໃຈກັນ:** (ເອເຟໂຊ 2:11-12)

ຈົ່ງເຫັນວ່າ ຂໍ້ພຣະຄັມພີໄດ້ເລີ່ມຕົ້ນດ້ວຍຄຳວ່າ "ເຫດສັນນັ້ນ" ນີ້ກໍຫມາຍຄວາມວ່າມີການຕິດຕໍ່ກັບຄຳເວົ້າ, ປໂຍກ, ວັກ, ຫລືຕອນທີ່ຜ່ານມາ. ໃນຂໍ້ຄວາມຕ່າງໆ ທີ່ໂປໂລກ່າວຜ່ານມານັ້ນ, ເພິ່ນໄດ້ອະທິບາຍວ່າໃຜຜູ້ໃດທີ່ ຫລີກທາງຈາກພຣະເຈົ້າກໍຕາຍແລ້ວ; ຫລືຕາຍແລ້ວໃນການລ່ວງລະເມີດ ແລະໃນຄວາມບາບ. ພຣະເຈົ້າກໍໄດ້ນຳພວກເຮົາຄືນມາໃຫ້ຄືນດີກັນກັບພຣະອົງແລ້ວ ແລະກໍເຮັດໃຫ້ພວກເຮົາມີຊີວິດໃນພຣະເຢຊູຄຣິດແລ້ວ. ພຣະອົງໄດ້ທຳລາຍກຳແພງກັ້ນລະຫວ່າງພຣະເຈົ້າກັບມະນຸດລົງແລ້ວ

ໃນເມື່ອພຣະເຢຊູທຳລາຍສິ່ງທີ່ກີດກັ້ນລົງຫມົດແລ້ວ ພຣະອົງກໍໄດ້ຊົງສ້າງສັນຕິສຸກຂຶ້ນ. ໃນລະຫວ່າງຄົນຢິວ

ແລະຄົນຕ່າງຊາດກໍເຫມືອນກັນ ພຣະອົງກໍມີພຣະປະສົງຢາກສ້າງສັນຕິສຸກຂື້ນ. ໂປໂລກ່າວເຖິງຄົນສອງພວກກໍເພື່ອໃຫ້ຄົນຢິວຮູ້ສຶກຕົວ. ພວກທີນຶ່ງຄືພວກທີ່ໄດ້ຮັບພິທີຕັດ ແລະພວກທີສອງພວກທີ່ບໍ່ໄດ້ຮັບພິທີຕັດ.

ພວກທີ່ໄດ້ຮັບພິທີຕັດ: ແມ່ນພວກທີ່ມີເຄື່ອງຫມາຍ ໄດ້ຮັບຮອງຢູ່ໃນຣະບຽບກົດຫມາຍທີ່ພຣະເຈົ້າໄດ້ສັນຍາໄວ້ກັບຊົນຊາດອິສຣາເອນ. ການຕັດຢູ່ໃນຮ່າງກາຍກໍແມ່ນມີຄວາມຫມາຍວ່າ ພຣະເຈົ້າຊົງເລືອກໄວ້ແລ້ວ. ພວກທີ່ບໍ່ໄດ້ຮັບພິທີຕັດ: ແມ່ນພວກຕ່າງຊາດ ບໍ່ໄດ້ມີສ່ວນຮ່ວມໃນພັນທະສັນຍາອັນໃດເລີຍ, ບໍ່ມີເຄື່ອງຫມາຍອັນໃດໃນຮ່າງກາຍຂອງພວກເຂົາ. ພວກຕ່າງຊາດບໍ່ມີສ່ວນຮ່ວມໃນຄອບຄົວຂອງພຣະເຈົ້າ, ພວກເຂົາຂາດຈາກການເປັນຊົນຊາດອິສຣາເອນ. ພວກເຂົາບໍ່ມີສິດທີ່ຈະໄດ້ຮັບມໍຣະດົກໃນຣາຊອານາຈັກຂອງພຣະເຈົ້າ.

ພັນທະສັນຍາແມ່ນການຕົກລົງລະຫວ່າງສອງຝ່າຍດ້ວຍກັນ ຫລືວ່າສັນຍາຕໍ່ກັນວ່າ ຈະຮັບຜິດຊອບຊື່ງກັນແລະກັນ. ທີ່ຈະເຂົ້າຮ່ວມໃນພັນທະສັນຍາຂອງພຣະເຈົ້າໄດ້ນັ້ນ ພວກເຮົາກໍຕ້ອງຍອມຮັບຄຳສັນຍາຂອງພຣະເຈົ້າເສັຍກ່ອນ. ແຕ່ພວກຕ່າງຊາດ ຊ້ຳພັດບໍ່ມີໂອກາດທີ່ຈະໄດ້ຮູ້ພຣະເຢຊູ ເພາະພວກເຂົາຖືກປະຕິເສດເສັຍກ່ອນ.

ພວກຕ່າງຊາດຈະມີໂອກາດບໍ່? ພວກຕ່າງຊາດຍັງຈະມີຄວາມຫວັງຢູ່ບໍ່? ຄວາມຫວັງບໍ່ໄດ້ຂື້ນຢູ່ກັບກຳລັງແລະຄວາມສາມາດຂອງເຮົາເອງ. ຄວາມຫວັງແມ່ນອອກມາຈາກຮາກຖານຂອງຄວາມເຊື່ອໃນພຣະເຈົ້າ, ເຊື່ອໃນຄຳສັນຍາ ແລະຫມັ້ນໃຈວ່າພຣະອົງຈະກະທຳການດີຕໍ່ຊີວິດພວກເຮົາທຸກຢ່າງ.

ພວກຕ່າງຊາດ "ພວກທີ່ບໍ່ມີພຣະເຈົ້າ" ໃນສມັຍຂອງໂປໂລ ພວກເຂົາກໍມີການຂາບໄຫວ້ຫລາຍພຣະເຈົ້າ. ພວກເຂົານະມັສການຫລາຍພຣະເຈົ້າ, ພວກເຂົາບໍ່ຮູ້ຈັກພຣະເຈົ້າອົງທ່ຽງແທ້. ເຫດສັນນັ້ນ ພວກເຂົາຈຶ່ງບໍ່ໄດ້ຮັບ ສັນຕິສຸກ, ບໍ່ໄດ້ຮັບອຳນາດ, ບໍ່ໄດ້ຮັບການຄືນດີກັບພຣະເຈົ້າຢ່າງແທ້ຈິງ.

**೭. <u>ການຄືນດີ:</u>** (ເອເຟໂຊ ೭:13-16 )
ຍ້ອນການບໍ່ພຽງພໍ, ຍ້ອນການຂາດເຂີນຫລາຍຢ່າງ ພວກຕ່າງຊາດຈຶ່ງບໍ່ມີສ່ວນຮ່ວມອັນໃດນຳພວກຢິວ. ໃນພຣະຄັມພີ, ໃນພາສາຄຳສັບກໍໄດ້ໃຊ້ຄຳວ່າ "ໄກ ແລະ ໃກ້". ແຕ່ກ່ອນທ່ານເຄີຍຢູ່ຫ່າງໄກ ແຕ່ບັດນີ້ໄດ້ຫຽັບເຂົ້າມາໃກ້ແລ້ວໂດຍພຣະໂລຫິດຂອງພຣະອົງ. ນີ້ກໍຫມາຍຄວາມວ່າພຣະອົງໄດ້ຊົງຖວາຍຊີວິດຂອງພຣະອົງຢູ່ເທິງໄມ້ກາງແຂນກໍເພື່ອທຳລາຍຮົ້ວກັ້ນໃນການເປັນສັດຕຣູກັນ. ພຣະອົງໄດ້ຊົງຍົກເລີກການຖືສິນແລະກົດບັນຍັດຕ່າງໆ ເພື່ອທັງສອງຝ່າຍຈະໄດ້ກາຍເປັນຄົນໃຫມ່ຄົນດຽວໃນພຣະອົງ.

ບັດນີ້ ຈະເປັນຄົນຢິວຫລືຄົນຕ່າງຊາດກໍຕາມ ເຂົາກໍຈະຢູ່ຫ່າງໄກຈາກພຣະເຈົ້າ ຫາກເຂົາປະຕິເສດພຣະເຢຊູ. ຖ້າເຂົາຫາກຮັບພຣະເຢຊູ ພຣະໂລຫິດຂອງພຣະອົງກໍຈະຢູ່ໃນຕົວຂອງເຂົາ ຄຳວ່າແບ່ງແຍກຈະບໍ່ມີອີກຕໍ່ໄປ. ສອງຢ່າງເປັນສິ່ງທີ່ກີດກັ້ນ ຊຶ່ງໂປໂລຍົກອອກມາໃຫ້ເຫັນກໍຄື: ກຳແພງແລະພຣະບັນຍັດ. ໃນຂໍ້ 14 "....ພຣະອົງໄດ້ຊົງຮື້ກຳແພງທີ່ຂັ້ນລະຫວ່າງການເປັນສັດຕຣູກັນຖິ້ມເສັຍດ້ວຍພຣະກາຍຂອງພຣະອົງ." ໃນຂໍ້ທີ 15 " ພຣະອົງໄດ້ຊົງຍົກເລີກກົດຂອງພຣະບັນຍັດທີ່ໃຫ້ຖືສິນຕ່າງໆ ເພື່ອຈະກະທຳໃຫ້ທັງສອງຝ່າຍເປັນຄົນໃຫມ່ຄົນດຽວໃນພຣະອົງ" ພຣະເຢຊູໄດ້ຮວບຮວມເອົາສອງຢ່າງນີ້ເຂົ້າຫາກັນ ຊຶ່ງເປັນສິ່ງໃຫມ່ແລະກໍບໍ່ເຄີຍເຫັນມາກ່ອນ

ດັ່ງນັ້ນ ຄວາມແຕກຕ່າງຣະຫວ່າງຄົນຢິວແລະຄົນຕ່າງຊາດກໍຈະບໍ່ມີຕໍ່ໄປອີກແລ້ວ. ນີ້ແມ່ນສຳລັບຜູ້ທີ່ຢູ່ໃນພຣະເຢຊູຄຣິດເທົ່ານັ້ນ ແຕ່ສ່ວນຜູ້ທີ່ຍັງບໍ່ທັນມີພຣະເຢຊູຫລືຍັງບໍ່ທັນໄດ້ຕ້ອນຮັບເອົາພຣະອົງນັ້ນຄວາມແຕກຕ່າງ ການແບ່ງແຍກກໍຍັງມີເຫມືອນເດີມ.

**3. <u>ຜົນຕາມມາ:</u>** (ເອເຟໂຊ 2:17-22)

ງານການຖວາຍຕົວຂອງພຣະເຢຊູຢູ່ເທິງກາງແຂນເຮັດໃຫ້ເກີດຜົນພິເສດຢູ່ສອງຢ່າງຄື: "ມີສັນຕິສຸກແລະມີໂອກາດເຂົ້າເຝົ້າພຣະເຈົ້າ. "ສັນຕິສຸກ" ຄືການມີຄວາມສຸກທີ່ຢູ່ຂ້າງໃນຣະຫວ່າງພຣະເຈົ້າແລະມະນຸດ. ພຣະເຢຊູເອງກໍເປັນສັນຕິສຸກ (ຂໍ້ 14) ພຣະອົງເປັນຜູ້ບັນດານສັນຕິສຸກ (ຂໍ້ 15) ແລະພຣະອົງກໍປະກາດຂ່າວປະເສີດກ່ຽວກັບສັນຕິສຸກ (ຂໍ້ 17) ຖ້າຈະເວົ້າແລ້ວໃນຕລອດຊີວິດຂອງພຣະເຢຊູ ພຣະອົງປ່າວປະກາດສັນຕິສຸກ. "ໂອກາດເຂົ້າເຝົ້າພຣະເຈົ້າ" ມີສິດເສຣີພາບທີ່ຈະເຂົ້າເຝົ້າພຣະເຈົ້າ, ຫຍັບເຂົ້າໃກ້ພຣະເຈົ້າດ້ວຍຄວາມເຊື່ອ ແລະຄວາມໝັ້ນໃຈ.

ເມື່ອເຂົ້າມາຫາພຣະເຢຊູດ້ວຍກັນທັງຢິວແລະຄົນຕ່າງຊາດແລ້ວ ໂປໂລກໍສາມາດເວົ້າໄດ້ວ່າ "ທ່ານທັງຫລາຍຈຶ່ງບໍ່ເປັນຄົນຕ່າງດ້າວທ້າວຕ່າງແດນອີກຕໍ່ໄປ ແຕ່ວ່າເປັນພົລເມືອງອັນດຽວກັນກັບໄພ່ພົນແລະເປັນຄົວເຮືອນຂອງພຣະເຈົ້າ." (2:19)

"ຄົນຕ່າງດ້າວ" ຄົນທີ່ມາຈາກຖິ່ນອື່ນ, ມາຈາກປະເທດອື່ນ, ພາສາແລະເຊື້ອຊາດອື່ນ. ເຖິງແມ່ນວ່າຈະຢູ່ໃນປະເທດດຽວກັນກໍຕາມ. ຄົນຕ່າງຊາດບໍ່ມີໂອກາດຈະໄດ້ຮັບສັນຊາດຈັກເທື່ອກ່ອນພຣະເຢຊູສະເດັດມາ. ຫລັງຈາກທີ່ພຣະເຢຊູສະເດັດມາແລ້ວ ຖານະຂອງຄົນຕ່າງຊາດຈຶ່ງຖືກປ່ຽນແປງ.

ໂປໂລສເນີຄົນຕ່າງຊາດທີ່ໄດ້ຮັບມີສາມຢ່າງດ້ວຍກັນຄື: (1) ພວກເຂົາກາຍເປັນຊົນຊາດຂອງພຣະເຈົ້າຮ່ວມກັບພວກຢິວແລ້ວ.(2:19) ພວກເຂົາເທົ່າທຽມກັບພວກຢິວທຸກຢ່າງ. ເຊັ່ນດຽວກັນກັບການເປັນຄຣິສຕຽນ, ເມື່ອພວກເຮົາເຊື່ອໃນພຣະເຈົ້າແລ້ວ ພວກເຮົາກໍມີສິດສເມີກັນທຸກຄົນ ບໍ່ມີຄຣິສຕຽນຊັ້ນນຶ່ງຫລືຄຣິສຕຽນຊັ້ນສອງ. (2) ພວກເຂົາກາຍມາເປັນຄົວເຮືອນຂອງພຣະເຈົ້າ (2:19) ພຣະຄັມພີໃໝ່ບໍ່ໄດ້ກ່າວເຖິງຣາຊອານາຈັກຂອງພຣະເຈົ້າແຕ່ຢ່າງດຽວຍັງເວົ້າເຖິງຄອບຄົວຂອງພຣະເຈົ້າດ້ວຍ. ແຕ່ໃນທີ່ນັ້ນກໍແມ່ນພຣະເຈົ້າຊົງເປັນປະມຸກແລະເປັນຜູ້ນຳຄອບຄົວດ້ວຍ. ຄົນຢິວແລະຄົນຕ່າງຊາດກໍເປັນອ້າຍນ້ອງກັນເພາະມີພຣະບິດາອົງດຽວກັນ. (3) ພວກເຂົາໄດ້ຖືກສ້າງຂຶ້ນເທິງຮາກຖານອັນດຽວກັນ ຄືພຣະເຢຊູເປັນຫີນເສົາເອກ. ພວກເຂົາກໍໄດ້ກາຍມາເປັນອັຄສາວົກແລະຜູ້ປະກາດພຣະທັມເໝືອນກັນ. (2:20) ໂດຍການສົ່ງອອກໄປໂດຍຣິດອຳນາດຂອງພຣະເຈົ້າ. ພວກເຂົາກໍມີສິດໃນການເສີມສ້າງຄຣິສຕະຈັກເໝືອນກັນ, ເພາະຄຣິສຕະຈັກເປັນຂອງອົງພຣະເຢຊູພຽງຜູ້ດຽວ.

**<u>ແນະນຳການນຳໃຊ້:</u>**

ຄຣິສຕະຈັກໄດ້ສເນີສິ່ງໃໝ່ໆໃຫ້ໂລກຮູ້ຄື:

- ຄຣິສຕະຈັກທຳໃຫ້ໂລກນີ້ກາຍ<u>ເປັນອັນນຶ່ງອັນດຽວກັນ</u>ໄດ້, ແລະ
- ຄຣິສຕະຈັກທຳໃຫ້ໂລກນີ້<u>ມີສິດເທົ່າທຽມກັນ</u>ໃນອົງພຣະເຢຊູຄຣິດໄດ້, ແລະ
- ຄຣິສຕະຈັກທຳໃຫ້ໂລກນີ້ ມີຄວາມສັມພັນເໝືອນຄອບຄົວດຽວກັນໄດ້.

**<u>ຄຳຖາມ:</u>**

1. ແມ່ນຫຍັງຄືການແບ່ງແຍກຣະຫວ່າງທ່ານແລະຜູ້ອື່ນ?

2. ຈະເຮັດຢ່າງໃດຈຶ່ງຈະມ້າງກຳແພງນີ້ລົງໄດ້?

3. ແມ່ນຫຍັງຄືສິ່ງທີ່ຄຣິສຕະຈັກຄວນຈະສຳແດງອອກໃນຄວາມເປັນອັນນຶ່ງອັນດຽວກັນທີ່ໂປໂລກ່າວໄວ້?

4. ທ່ານພໍຈະຍົກຮູບພາບອັນໃດທີ່ບົ່ງບອກວ່າເປັນຄຣິສຕະຈັກ? ຣາຊອານາຈັກ, ຄອບຄົວ, ຫລືວິຫານ

5. ຮູບພາບອັນໃດໃນຄຳຖາມທີ 4 ທີ່ເຂົ້າກັບຄຳທີ່ວ່າພວກກຸ່ມຄົ້ນຄວ້າວິທີການແບບໃໝ່?

*ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 4
# ຈົ່ງເປີດໃຈຮັບຄວາມສົມບູນຈາກພຣະເຈົ້າ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ເອເຟໂຊ 3:14-21

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ 3:14-21

**ຈຸດສໍາຄັນຂອງບົດຮຽນນີ້:** ພວກເຮົາຕ້ອງເປີດໃຈຮັບເອົາກໍາລັງອັນເຂັ້ມແຂງຂອງພຣະເຈົ້າ ແລະໃຫ້ຄວາມຮັກຂອງພຣະອົງເຈົ້າມາຢູ່ໃນຈິດໃຈຂອງພວກເຮົາ.

**ຄໍາຖາມເພື່ອຄົ້ນຄວ້າ:** ທ່ານເຄີຍຫວັງຈະໄດ້ຮັບ ຄວາມເຂັ້ມແຂງຝ່າຍວິນຍານຈິດ ແລະຢູ່ໃກ້ໆກັບພຣະເຢຊູຄຣິດຫລືບໍ່?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄດ້ພິຈາຣະນາໃນກໍາລັງອັນເຂັ້ມແຂງຝ່າຍຈິດໃຈ ແລະຈະໄດ້ເປີດຕົວເອງໃຫ້ຮັບເອົາທຸກຢ່າງທີ່ພຣະເຈົ້າມີເພື່ອພວກເຮົາ.

## ຄົ້ນຄວ້າພ້ອມກັບການປະຕິບັດ

- ຢັ້ງຢືນວ່າ ພຣະຄັມພີມີອໍານາດໃນການນໍາພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ເສີມຂະຫຍາຍການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ
- ຍົກສູງທຸກໆຄົນ ໂດຍເຫັນວ່າພວກເຂົາກໍແມ່ນພຣະລັກສະນະຂອງພຣະເຈົ້າ

## ຄໍານໍາ

ສິ່ງທີ່ດີທີ່ສຸດສໍາລັບຄຣິສຕຽນຂອງພວກເຮົາກໍຄືການອະທິຖານ. ຂ້າພະເຈົ້າຍັງສົງສັຍວ່າທ່ານຈະເຂົ້າໃຈດີບໍ່ກ່ຽວກັບການອະທິຖານ ຫລືວ່າມີປະສົບການຫລາຍປານໃດກ່ຽວກັບເຣື່ອງນີ້. ສ່ວນຫລາຍພວກເຮົາເຂົ້າໃຈວ່າການອະທິຖານແມ່ນການທູນຂໍບາງສິ່ງບາງຢ່າງຈາກພຣະເຈົ້າເທົ່ານັ້ນ. ຖ້າຈະເວົ້າເຣື່ອງການສັຣເສີນແລ້ວແມ່ນບໍ່ມີໃນຄໍາອະທິຖານ.

ພວກເຮົາເຄີຍໃຊ້ເວລາອະທິຖານຂອບພຣະຄຸນພຣະເຈົ້າ ໃນຖານະທີ່ພຣະອົງຊົງເປັນພຣະເຈົ້າຂອງເຮົາຫລືບໍ່? ຈຸດພິເສດຂອງປຶ້ມບົດເພັງສັຣເສີນໄດ້ບັນທຶກໄວ້ຫລາຍຢ່າງກ່ຽວກັບການສັຣເສີນ ແລະກໍຍັງຖືວ່າເປັນປຶ້ມພິເສດແຫ່ງການສັຣເສີນພຣະເຈົ້າໃນຈໍານວນທັງຫມົດຂອງພຣະຄັມພີເດີມ. ການຂອບພຣະຄຸນກໍແມ່ນສ່ວນນຶ່ງທີ່ພວກເຮົາຄວນປະຕິບັດ. ພວກເຮົາປະຕິບັດຕາມຣະດູການ, ແຕ່ວ່າຫລັງຈາກຣະດູການຜ່ານໄປແລ້ວພວກເຮົາໃຊ້ເວລາຫລາຍເທົ່າໃດໃນການຂອບພຣະຄຸນ? ການສາຣະພາບບາບຜິດເດ? ການສາຣະພາບຜິດກໍແມ່ນພາກສ່ວນທີ່ສໍາຄັນຫລາຍໃນການອະທິຖານ, ແຕ່ວ່າພວກເຮົາໃຊ້ເວລາຫລາຍສໍ່າໃດໃນການສາຣະພາບບາບຜິດຂອງພວກເຮົາເພື່ອສແວງຫາການຍົກໂທດຈາກພຣະເຈົ້າ? ການອະທິຖານເພື່ອຄວາມຕ້ອງການຂອງຄົນອື່ນ, ພວກເຮົາເຄີຍເຮັດຫລືບໍ່ ຫລືວ່າເຫັນແຕ່ຄວາມຕ້ອງການຂອງຕົນເອງ.

ໂປໂລຍົກສູງທຸກໆພາກສ່ວນ,  ທຸກຢ່າງເປັນສິ່ງທີ່ດີຫລາຍ ເພາະເປັນການຮູ້ບຸນຄຸນທີ່ອົງພຣະເຢຊູຊົງກະທຳທຸກຢ່າງ ເພື່ອພວກເຮົາ.

**1. <u>ການສແດງອອກຂອງໂປໂລ:</u>** (ເອເຟໂຊ 3:14-15)

ໂປໂລກ່າວແກ່ພີ່ນ້ອງຄຣິສຕຽນຊາວເອເຟໂຊວ່າ ເພິ່ນໄດ້ຄຸເຂົ່າຕໍ່ພຣະພັກພຣະບິດາ. ພຣະຄັມພີບໍ່ໄດ້ບອກວ່າເຮົາຄວນຈະອະທິຖານຢູ່ໃນທ່າໃດຈຶ່ງຈະດີ.  ພວກເຮົາອາດສາມາດອະທິຖານໄດ້ໃນເວລາຢືນ, ໃນເວລານັ່ງ ,ໃນເວລານອນຫລືໃນທ່າຕ່າງໆກໍໄດ້.

ທ່າທາງການສະແດງອອກຂອງໂປໂລໂດຍການຄູ້ເຂົ່ານີ້  ແມ່ນເຫັນໃນພຣະຄັມພີເປັນສ່ວນຫລາຍ.  ໃນພຣະຄັຫພີ  ຂ ພົງສາວະດານ 6:12  ກະສັດຊາໂລໂມນກໍໄດ້ເຂົ້າເຝົ້າພຣະເຈົ້າໃນພຣະວິຫານຕໍ່ໜ້າຝູງຊົນອິສຣາເອນທັງປວງ ພຣະອົງໄດ້ວາແຂນອອກ. ດານີເອນກໍໄດ້ຄຸເຂົ່າອະທິຖານວັນລະສາມຄັ້ງ.  ດານີເອນ 6:10 ໂປໂລໄດ້ອະທິບາຍຕໍ່ໄປອີກວ່າທຸກຄອບຄົວໃນສວັນແລະແຜ່ນດິນໂລກກໍແມ່ນໄດ້ຊື່ມາຈາກພຣະບິດາ.   ເພິ່ນພະຍາຍາມຈະກ່າວເຖິງການຢູ່ຮ່ວມກັນຣະຫວ່າງຄົນຢິວແລະຄົນຕ່າງຊາດ.  ຮູບພາບຂອງຄອບຄົວໃນໂລກນີ້  ກໍມີພໍ່ເປັນຫົວໜ້າຄອບຄົວ,  ແຕ່ວ່າຄອບຄົວຝ່າຍຈິດວິນຍານກໍແມ່ນພຣະເຈົ້າຜູ້ຊົງສະຖິດໃນສວັນເປັນພຣະບິດາ.  ພວກເຮົາເປັນຄຣິສຕຽນ ພວກເຮົາໄດ້ເອີ້ນພຣະອົງວ່າເປັນພຣະບິດາເຫມືອນກັນ.

ຍ້ອນວ່າພວກເຮົາຢູ່ໃນຄອບຄົວຂອງພຣະເຈົ້າ,  ພຣະເຈົ້າກໍຊົງເປັນພຣະບິດາຂອງພວກເຮົາ.  ພວກເຮົາຄວນໃຫ້ກຽດພຣະອົງໃຫ້ສົມກັບທີ່ພຣະອົງຄວນຈະໄດ້ຮັບ.   ນີ້ລະຄືໂປໂລ ທີ່ເພິ່ນໄດ້ຄຸເຂົ່າລົງຕໍ່ພຣະພັກພຣະບິດາເພິ່ນມີຄວາມເຊື່ອຫມັ້ນໃນພຣະອົງ ເວລາມີສິ່ງໃດເພິ່ນຈຶ່ງໄດ້ເຂົ້າມາຄຸເຂົ່າຕໍ່ພຣະບິດາ.

ໂປໂລໄດ້ອະທິຖານສີ່ຢ່າງເພື່ອພີ່ນ້ອງຊາວເອເຟໂຊ ແລະທັງສີ່ຢ່າງນີ້ກໍມີການພົວພັນກັນຄື: ຂໍຄວາມເຂັ້ມແຂງ (3:16); ຂໍການຊົງສະຖິດຢູ່ໃນໃຈ (3:17);  ຂໍຄວາມເຂົ້າໃຈ (3:17-19) ຂໍຄວາມເຕັມບໍຣິບູນ (3:19)

**2. <u>ການອະທິຖານຂອງໂປໂລ:</u>** (ເອເຟໂຊ 3:16-19)

ໂປໂລອະທິຖານຂໍຄວາມເຂັ້ມແຂງເພື່ອພີ່ນ້ອງຄຣິສຕຽນຊາວເອເຟໂຊ.(3:16)    ເພິ່ນທູນຂໍຕໍ່ພຣະເຈົ້າໃຫ້ພຣະອົງປະທານກຳລັງອັນເຂັ້ມແຂງໃຫ້ແກ່ພວກເຂົາ.   ກຳລັງນີ້ແມ່ນກຳລັງຝ່າຍຈິດໃຈ ແມ່ນກຳລັງທີ່ຢູ່ທາງໃນ.  ໃນຮ່າງກາຍຂອງພວກເຮົາ ພາກສ່ວນທາງໃນຈະເປັນສ່ວນບັງຄັບພາກສ່ວນທາງນອກ. ພຣະຄັມພີສຸພາສິດ4:23 ກ່າວວ່າ "ຈົ່ງຮັກສາໃຈຂອງເຈົ້າດ້ວຍຄວາມຣະມັດຣະວັງຮອບດ້ານ ເພາະຊີວິດເລີ້ມຕົ້ນອອກມາຈາກໃຈ."  ສິ່ງນັ້ນລະທີ່ໂປໂລມີຄວາມປະສົງຢາກໃຫ້ພວກເຮົາເຂັ້ມແຂງຂຶ້ນ ເພາະຮ່າງກາຍຂ້າງນອກຂອງພວກເຮົານັບມື້ລົດນ້ອຍຖອຍລົງແຕ່ລະວັນໆໄປ. ພວກເຮົາດຳຣົງຊີວິດຢູ່ໃນໂລກນີ້ ແມ່ນຕ້ອງອາສັຍຈິດວິນຍານ, ຖ້າບໍ່ມີວິນຍານພວກເຮົາກໍບໍ່ສາມາດຢູ່ໄດ້. ພວກເຮົາປະເຊີນກັບການທ້າທາຍທຸກວັນທາງຝ່າຍຈິດວິນຍານ, ພວກເຮົາກໍເອົາຊະນະໄດ້ໂດຍການເພິ່ງພາອາສັຍພຣະວິນຍານຊົງຢູ່ພາຍໃນຕົວເຮົາ.  ຄຣິສຕຽນຫລາຍຄົນມີປະສົບການດ້ານນີ້ແລະແຕ່ລະຄົນກໍຜ່ານມາຫລາຍສົມຄວນແລ້ວ.

ຂໍ້ 17 ໂປໂລໄດ້ອະທິຖານເພື່ອຊາວເອເຟໂຊ    ບັນດາຜູ້ທີ່ເຊື່ອທັງຫລາຍຂໍໃຫ້ພຣະເຈົ້າໄດ້ຊົງສະຖິດຢູ່ໃນຈິດໃຈຂອງພວກ  ເຂົາ.  ຄຳວ່າ  "ສະຖິດ"  ນີ້ ໝາຍຄວາມວ່າຕັ້ງຫມັ້ນຢູ່ເລີຍ.  ໃນຖານະທີ່ພວກເຮົາເປັນຄຣິສຕຽນພຣະເຢຊູໄດ້ຊົງສະຖິດຢູ່ໃນໃຈຂອງທຸກຄົນແລ້ວ. ຢ່າງໃດກໍຕາມ ເພິ່ນກໍຍັງຮຽກເອີ້ນໃຫ້ພຣະເຢຊູເຂົ້າມາສະຖິດຢູ່ໃນໃຈຂອງພວກເຂົາທຸກຄົນ.

ການເດີນທາງໄປທ່ຽວ ຫລືໄປຢາມຍາດພີ່ນ້ອງ ຂ້າພະເຈົ້າແລະພັລຍາໄດ້ໄປເຊົາຢູ່ເຮືອນຂອງຄົນອື່ນຊຶ່ງບໍ່ແມ່ນເຮືອນຂອງຕົວເອງ, ພວກເຮົາພັກຊົ່ວຄາວ ແຕ່ວ່າເວລາກັບມາບ້ານແລ້ວພວກເຮົາກໍໄດ້ພັກອາສັຍຊຶ່ງເປັນບ້ານຂອງພວກເຮົາເອງ.

ໂປໂລຂໍຄວາມເຂົ້າໃຈ ຄືເຂົ້າໃຈຄຸນນະພາບຂອງຄວາມຮັກພຣະເຈົ້າທີ່ມີຢູ່ໃນພຣະເຢຊູຄຣິດເຈົ້າ. ຄວາມເຂົ້າໃຈທີ່ວ່ານີ້ແມ່ນຄວາມເຂົ້າໃຈແບບຜີວເຜີນ. ຊາວເອເຟໂຊຈະເຂົ້າໃຈຄວາມຮັກນີ້ໄດ້ຢ່າງໃດ? ແລະຈະນຳເຂົ້າສູ່ຊີວິດໄດ້ຢ່າງໃດ? ໂປໂລເວົ້າເຖິງຄຸນນະພາບສອງຢ່າງ: ເຂົ້າໃຈພ້ອມກັບໄພ່ພົນຂອງພຣະເຈົ້າ. (ໝາຍຄວາມວ່າໃນການຢູ່ຮ່ວມກັນ, ແບ່ງປັນຊຶ່ງກັນແລະກັນ ແລ້ວຄວາມຮູ້ຄວາມສລາດກໍຈະເພີ້ມຂຶ້ນ. ເຂົ້າໃຈໃນການວາງຮາກ. ການວາງຮາກກໍຄືການອອກຮາກເໝືອນຕົ້ນໄມ້ກ່ອນຈະເກີດເປັນຕົ້ນອັນໃດອັນນຶ່ງຂຶ້ນມາ. ຕົ້ນໄມ້ທີ່ຈະເປັນຕົ້ນໄມ້ທີ່ແຂງແຮງ ແລະໃຫຍ່ໄດ້ກໍຕ້ອງອາສັຍຮາກທີ່ຢັ່ງເລິກ.

ສຸດທ້າຍ ໂປໂລອະທິຖານເພື່ອໃຫ້ພວກເຂົາເຕັມບໍຣິບູນ. (3:19) ໂປໂລໝາຍຄວາມວ່າຈະໃຫ້ພວກເຂົາບໍຣິບູນຄົບຖ້ວນເໝືອນພຣະເຈົ້າບໍ່? ບໍ່ແມ່ນດອກ. ເພິ່ນຢາກໃຫ້ພວກເຂົາເຂົ້າໃຈໃນການຊ່ວຍເຫລືອຂອງພຣະເຈົ້າຢ່າງສົມບູນ, ເຂົ້າໃຈໃນການໃຊ້ຂອງປະທານຢ່າງເຕັມປ່ຽມ ແລ້ວພວກເຂົາກໍຈະໄດ້ເສີມຂຍາຍຄວາມຮັກຂອງພຣະອົງຢ່າງສົມບູນ.

**3. <u>ການສັຣເສີນຂອງໂປໂລ:</u>** (ເອເຟໂຊ 3:20-21)
ກະທຳໄດ້ທຸກສິ່ງສາຣະພັດຄືດັ່ງໂປໂລກ່າວໄວ້ ຄືຈະເປັນໄປໄດ້ໝົດທຸກຢ່າງ. ຮ່ວມກັບພຣະເຈົ້າ ທຸກສິ່ງຕ້ອງເປັນໄປໄດ້, ເພາະວ່າໃນພຣະເຈົ້າພຣະອົງຊົງພຽບພ້ອມທຸກຢ່າງ. ໂປໂລຢັ້ງຢືນອີກວ່າ ພຣະອົງສາມາດກະທຳຕາມຄຳທູນຂໍທຸກຢ່າງ ແລະນອກເໜືອຈາກນັ້ນພຣະອົງຍັງສາມາດກະທຳເໜືອກວ່າສິ່ງທີ່ພວກເຮົາທູນຂໍອີກ. ໂປໂລຍົກຍ້ອງສັຣເສີນພຣະເຈົ້າທີ່ພຣະອົງຊົງກະທຳດ້ວຍຣິດອຳນາດແລະດຳເນີນຢູ່ພາຍໃນຕົວເຮົາທຸກໆຄົນ.

<u>**ແນະນຳພາກປະຕິບັດ:**</u>
ທຸກສິ່ງທີ່ຮຽນຜ່ານມາໃນວັນນີ້ມີຄວາມໝາຍຫຍັງບໍ່ ໃນທຸກວັນນີ້? ໃນບົດຮຽນໄດ້ເຕືອນພວກເຮົາວ່າຊີວິດຄຣິສຕຽນຕ້ອງມີປະສົບການກ່ຽວກັບພຣະວິນຍານບໍຣິສຸດ. ພວກເຮົາອາດຈະເປັນຄຣິສຕຽນມາແລ້ວຫລາຍປີ, ມີປະສົບການໃນຣິດອຳນາດຂອງພຣະວິນຍານບໍຣິສຸດ, ແລະຄຸນນະພາບແຫ່ງຄວາມຮັກ. ພຣະເຈົ້າຍັງມີຫລາຍສິ່ງຫລາຍຢ່າງທີ່ຈະມອບໃຫ້ແກ່ພວກເຮົາອີກຊຶ່ງເໜືອກວ່າມະນຸດທັມດາ. ຍິ່ງໄປກວ່ານັ້ນ ຊີວິດຄຣິສຕຽນບໍ່ແມ່ນຊີວິດ ຕົວຄົນດຽວ ແຕ່ເປັນຊີວິດທີ່ມີຄວາມເຂົ້າໃຈຢ່າງເລິກເຊິ່ງ, ເຂົ້າໃຈໃນຜູ້ອື່ນ ເຂົ້າໃຈຄົນຢູ່ໃນຄຣິສຕະຈັກດ້ວຍກັນ.

<u>**ຄຳຖາມ**</u>
1. ທ່ານສາມາດເວົ້າໄດ້ແດ່ບໍ່ວ່າ ສິ່ງສຳຄັນອັນໃດທີ່ທ່ານລືມເຮັດໃນການອະທິຖານ? ພາກສ່ວນໃດທີ່ທ່ານມັກມີໃນເວລາອະທິຖານ?

2. ໃນເວລາທ່ານອ້ອນວອນອະທິຖານ, ທ່ານອ້ອນວອນອະທິຖານເພື່ອຜູ້ໃດເປັນປະຈຳ?

3. ເວລາທ່ານອ້ອນວອນອະທິຖານເພື່ອຄົນອື່ນ, ທ່ານໄດ້ອະທິຖານເພື່ອໃຫ້ພວກເຂົາມີຊີວິດສະບາຍໆບໍ່? ຫລືວ່າອະທິຖນເພື່ອໃຫ້ພວກເຂົາມີຄວາມເຂົ້າໃຈໃນພຣະເຈົ້າດີຂຶ້ນ?

4. ຕາມທີ່ຮູ້ຈັກ, ຫລືໄດ້ຍິນຜ່ານມາ,ຫລືໄດ້ຟັງຜ່ານມາ ຢູ່ໃນພຣະຄັມພີຕອນໃດທີ່ກ່າວວ່າຈົ່ງອະທິຖານເພື່ອຄົນອື່ນ?

5. ເປັນຫຍັງການພົວພັນກັບຄຣິສຕຽນຄົນອື່ນໆ ຈຶ່ງມີຄວາມສຳຄັນແລະເປັນການເສີມຂຍາຍຊີວິດຄຣິສຕຽນໃນຕົວເຮົາເອງ?

*ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 5
# ຈະເຣີນໃຫຍ່ຂຶ້ນຮ່ວມກັນໃນພຣະຄຣິດ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ເອເຟໂຊ 4:1-16

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ 4:1-16

**ຈຸດສໍາຄັນຂອງບົດຮຽນນີ້:** ພວກເຮົາຄວນນໍາພາຊີວິດໃຫ້ສົມກັບການຊົງເອີ້ນຂອງພຣະຄຣິດໂດຍການຈະເຣີນໃຫຍ່ຂຶ້ນຮ່ວມກັນກັບພຣະອົງ.

**ຄໍາຖາມເພື່ອການຄົ້ນຄວ້າ:** ທ່ານໄດ້ຈະເຣີນໃຫຍ່ຂຶ້ນເປັນປະຈໍາໃນຊີວິດຄຣິສະຕຽນບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະບອກເຖິງຊີວິດອັນມີຄ່າທີ່ອາຈານໂປໂລໄດ້ຮ້ອງຂໍໃຫ້ຄຣິສຕຽນມີຊີວິດຢູ່ ແລະເອົາສິ່ງນັ້ນມາປະກອບໃຊ້ເຖິງສິ່ງອາຈານໂປໂລໄດ້ເທສນາ.

## ບົດນໍາ

ທ່ານອາຈານໂປໂລໄດ້ແນະນໍາຄຣິສຕະຈັກເມືອງເອເຟໂຊ ທີ່ມີຄຣິສຕຽນເປັນຄົນຕ່າງຊາດ ແລະພວກຢິວຮ່ວມກັນຢູ່. ເພິ່ນໄດ້ສອນຢ່າງລະມັດລະວັງເພື່ອຈະຊ່ອຍທັງສອງກຸ່ມໃຫ້ຈະເຣີນຂຶ້ນ ແລະເພື່ອບໍ່ໃຫ້ມີການເຂົ້າໃຈຜິດ ແລະກາຍເປັນສັດຕຣູກັນ.

ພວກເຮົາໄດ້ເຂົ້າປະຊຸມກັນເປັນກຸ່ມນ້ອຍເປັນເວລາຫລາຍອາທິດ, ມີຫລາຍຄົນໄດ້ມີຄວາມລຶ້ງເຄີຍກັນຂຶ້ນເພື່ອຈະເຮັດໃຫ້ມີຄວາມໄວ້ເນື້ອເຊື່ອໃຈກັນ. ພວກເຂົາພາກັນສຶກສາເຖິງຫລັກຄໍາສອນໃນພຣະຄັມພີຈາກທຸກໆຕອນ. ແລະພວກເຂົາໄດ້ສົນທະນາກັນເຖິງເຣື່ອງທີ່ພຣະເຈົ້າໄດ້ທໍາກັນຜ່ານທາງອົງພຣະຄຣິດເຈົ້າ, ເວົ້າເຖິງພຣະຄຸນ, ຄວາມເຊື່ອ, ແລະຄວາມພົ້ນ. ໃນທີ່ສຸດມີບາງຄົນໄດ້ຍົກຄໍາຖາມຂຶ້ນມາກ່າວວ່າ "ເປັນຫຍັງພວກເຮົາໄດ້ພາກັນເວົ້າເຖິງເຣື່ອງພຣະເຈົ້າເລື້ອຍໆ, ແລະເປັນຫຍັງພວກເຮົາຈຶ່ງບໍ່ພາກັນເອົາໃຈໃສ່ເຮັດໃຫ້ຊີວິດດີຂຶ້ນໃນໂລກນີ້ ບ່ອນເຮົາຢູ່ໃນປັດຈຸບັນນີ້ເພື່ອພຣະເຈົ້າຈະໄດ້ຮັບພຣະກຽດຕິຍົດ?"

ເປັນຄວາມຈິງ ການທີ່ຊ່ວຍໃຫ້ຄຣິສະຕຽນໃໝ່ເອົາໃຈໃສ່ມີຊີວິດດີຢູ່ເພື່ອພຣະເຈົ້ານັ້ນເປັນຄໍາສອນຂອງອາຈານໂປໂລ ໃນປຶ້ມເອເຟໂຊ ບົດ 4. ບົດກ່ອນນີ້ໄດ້ເວົ້າເຖິງລັກສະນະແລະພຣະປະສົງຂອງພຣະເຈົ້າຕໍ່ມະນຸດ, ໃນຕອນນີ້ອາຈານໂປໂລໄດ້ຊອກຫາຄວາມໝາຍຕໍ່ຊີວິດຂອງປະຊາຊົນຂອງພຣະເຈົ້າ.

ຈໍາໄວ້ວ່າຜູ້ຮັບຈົດໝາຍອາຈານໂປໂລໄດ້ຍິນຄໍາສອນອັນແປກໆນີ້ເປັນຄັ້ງທໍາອິດ ແລະພວກເຂົາຕ້ອງຮຽນເອົາຄໍາສອນເຫລົ່ານີ້ມາປະກອບໃຊ້ໃນຊີວິດປະຈໍາວັນ. ຄໍາຖາມມີຢູ່ວ່າ ເຮັດແນວໃດພວກເຂົາຈະເອົາຄໍາສອນຢ່າງນີ້ເຂົ້າມາໃຊ້ໃນການຕິດຕາມອົງພຣະຄຣິດ? ຕອນຕົ້ນຂອງບົດ 4 ນີ້ ອາຈານໂປໂລໄດ້ແນະນໍາແນວທາງແລະສອນໃຫ້ເອົາສິ່ງໄດ້ທີ່ຍິນນັ້ນມາໃຊ້ໃຫ້ມີຊີວິດເໝາະສົມທີ່ພຣະເຈົ້າປະທານພຣະຄຸນຜ່ານທາງອົງພຣະເຢຊູເຈົ້າ.

### 1. ໃຫ້ສົມກັບການຮຽກເອີ້ນ: (ເອເຟໂຊ 4:1-6)

ພຣະຄໍາຕອນນີ້ໄດ້ເລີ້ມດ້ວຍການທ້າທາຍໃຫ້ພວກເຂົາຈະເຣີນໃຫຍ່ຂຶ້ນໃຫ້ສົມກັບການ "ຮຽກເອີ້ນ" ຫລື ອາຊີບ ອາຈານໂປໂລມີຄວາມປາຖນາຢາກໃຫ້ທຸກໆຄົນທີ່ຕິດຕາມອົງພຣະເຢຊູໄປມີຊີວິດເໝາະສົມກັບສິ່ງພຣະເຈົ້າໄດ້ກະທໍາເພື່ອເຂົາ (ເອເຟໂຊ 1:11-14). ບໍ່ຕ້ອງສົງສັຍໃນຊີວິດຂອງອາຈານໂປໂລ ເພິ່ນໄດ້ຈື່ຈໍາປະສົບປະການກັບອົງພຣະເຢຊູເວລາເດີນທາງໄປເມືອງດາມາເຊ ເຖິງແມ່ນວ່າເວລານັ້ນເພິ່ນຍັງບໍ່ໄດ້ຮູ້ຈັກກັບອົງພຣະເຢຊູ ແຕ່ໄດ້ຕໍ່ສູ້. (ກິຈການ 9:

1-6). ອາຈານໂປໂລຮູ້ສຶກຕົວວ່າກ່ອນເພິ່ນໄດ້ເລືອກເອົາພຣະເຈົ້ານັ້ນ ພຣະເຈົ້າໄດ້ຊົງເລືອກເອົາເພິ່ນກ່ອນແລ້ວ. ໃນຕອນນີ້ເພິ່ນໄດ້ສັ່ງສອນຄົນທີ່ເຊື່ອໃຫ້ຖວາຍຕົວຢ່າງມີຊີວິດໃຫ້ສົມກັບການຮຽກເອີ້ນຈາກພຣະເຈົ້າ.

ໃນ ເອເຟໂຊ 2:1-22, ອາຈານໂປໂລໄດ້ເນັ້ນວ່າພຣະເຈົ້າໄດ້ກະທຳການຜ່ານທາງຂອງອົງພຣະເຢຊູວ່າ ຄຣິສຕຽນຕ່າງຊາດກໍໄດ້ມີສ່ວນໃນຄວາມຮັກຂອງພຣະອົງເໝືອນກັນ. ພວກຢິວກັບພວກຕ່າງຊາດໄດ້ນຳເຂົ້າເປັນຄົນພວກນຶ່ງພວກດຽວກັນໂດຍຄວາມຮັກແລະພຣະຄຸນຂອງພຣະເຈົ້າແລະພຣະເຢຊູຄຣິດ. ຕາມຄວາມຈິງແລ້ວພວກເຂົາໄດ້ຖືກເອີ້ນເອົາໃຫ້ມີຊີວິດໃໝ່. ການຮຽກເອີ້ນນີ້ບໍ່ແມ່ນການກະທຳຂອງມະນຸດ ແຕ່ແມ່ນຂອງພຣະຣາຊທານຈາກພຣະຄຸນຂອງພຣະເຈົ້າຕ່າງຫາກ. ດັ່ງນັ້ນ, ໃນພຣະຄັມພີຈຶ່ງໄດ້ເວົ້າຢ່າງແຈ່ມແຈ້ງໄວ້ໃນປຶ້ມ ເອເຟໂຊ 2:8-9) ວ່າ, "ກໍຍ້ອນພຣະຄຸນທາງຄວາມເຊື່ອ ສິ່ງເຫລົ່ານີ້ບໍ່ແມ່ນພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້ ຄວາມພົ້ນນັ້ນບໍ່ແມ່ນມີມາຍ້ອນການປະຕິບັດ ເພື່ອບໍ່ໃຫ້ຄົນນຶ່ງຄົນໃດອວດໄດ້." ຖ້າຫາກວ່າພຣະເຈົ້າໄດ້ປະທານຊີວິດໃຫ້ດ້ວຍພຣະທັຍອັນປະເສີດ ຈຶ່ງເປັນໜ້າທີ່ຂອງຄຣິສະຕຽນທີ່ຕ້ອງເຮັດໃຫ້ຊີວິດມີຄຸນຄ່າດ້ວຍການເຊື່ອຟັງ, ຈະເຣີນໃຫຍ່ຂຶ້ນ, ແລະມີຄວາມຮັກດ້ວຍໃຈຈິງ.

ເປົ້າໝາຍຂອງການມີຊີວິດຢ່າງມີຄຸນຄ່ານັ້ນຄື: "ຈົ່ງພຽນພະຍາຍາມເອົາສັນຕິສຸກຜູກມັດ" (ອຟຊ. 4:3) ໃຫ້ພວກເຮົາເຂົ້າໃຈວ່າໃນສັດຕະວັດທີນຶ່ງພວກຢິວແລະພວກຕ່າງຊາດມີບັນຫາໃຫຍ່ຕໍ່ກັນແລະກັນ. ຈຳໄດ້ບໍ່ຍິງສາວຊາມາເຣັຽທີ່ນ້ຳສ້າງ ເວລາອົງພຣະເຢຊູໄດ້ເດີນທາງໄປຍັງເມືອງນັ້ນ ພຣະອົງໄດ້ຂໍກິນນ້ຳກັບນາງ. ນາງໄດ້ຖາມພຣະເຢຊູວ່າ, ເປັນດ້ວຍເຫດໃດທ່ານຜູ້ເປັນຄົນຢິວຈຶ່ງມາຂໍກິນນ້ຳກັບຂ້ອຍຜູ້ເປັນຍິງຊາວຊາມາເຣັຽ? (ເພາະວ່າຢິວແລະຊາວຊາມາເຣັຽບໍ່ມີທຸຣະອັນໃດທີ່ຈະຄົບຄ້າສະມາຄົມຕໍ່ກັນ). (ໂຢຮັນ 4:9).

"ຖ່ອມໃຈລົງ" ແມ່ນການສັດຊື່ເຫັນສະພາບຂອງຕົນເອງ ແລະເອົາຄວາມຈອງຫອງນັ້ນອອກໄປຈາກຊີວິດ. ໃນເມື່ອພວກເຮົາໄດ້ເຫັນວ່າຕົນເອງເປັນຄົນຜິດບາບ ໄດ້ຮັບຄວາມພົ້ນດ້ວຍພຣະຄຸນຂອງພຣະເຈົ້າແລ້ວ ທີ່ສຸດພວກເຮົາບໍ່ຄວນປມາດຄົນອື່ນຜູ້ທີ່ໄດ້ຮັບຄວາມພົ້ນເໝືອນພວກເຮົາ.

"ອ່ອນສຸພາບ" ໄດ້ເກີດມາຈາກການໃຫ້ຄວາມໂຄຣົບຕໍ່ຄົນອື່ນໂດຍຮູ້ວ່າພຣະເຈົ້າອົງຍິ່ງໃຫຍ່ໄດ້ມີພຣະຄຸນຕໍ່ພວກເຮົາ. ພຣະເຢຊູໄດ້ໃຫ້ຕົວຢ່າງທີ່ດີໃນພຣະຄັມພີ ຄືພຣະອົງໄດ້ປະຕິບັດຕໍ່ຜູ້ທີ່ພຣະອົງຮັບໃຊ້ຢ່າງສເມີພາບຄືພວກເຂົາເປັນຄົນຜິດບາບ.

"ອົດທົນຫລືພຽນພະຍາຍາມ" ແມ່ນສິ່ງກົງກັນຂ້າມຂອງຄວາມມັກໂກດຮ້າຍງ່າຍໆ. ຄວາມຈິງແລ້ວ ຜູ້ທີ່ສແວງຫາທີ່ຈະມີຊີວິດໃຫ້ມີຄຸນຄ່ານັ້ນບໍ່ຕ້ອງລົດລະໃນການອົດທົນ ເຖິງແມ່ນຈະມີການຖືກປມາດຢາດທານຂຶ້ນ. ຜູ້ທີ່ມີອົງພຣະວິນຍານຂອງພຣະຄຣິດສະຖິດຢູ່ນຳຕ້ອງສືບຕໍ່ເຮັດສິ່ງທີ່ດີຕໍ່ຄົນອື່ນ.

ຄວາມເວົ້າທີ່ມີພະລັງອັນສຸດທ້າຍແມ່ນ "ຄວາມຮັກ" ຄວາມຮັກນີ້ເຮັດໃຫ້ຄຳເວົ້າຖ່ອມໃຈລົງ, ອ່ອນສຸພາບແລະອົດທົນສາມາດເຮັດໃຫ້ຄົນເອົາມາປະຕິບັດໄດ້ໃນຊີວິດ. ຄວາມຮັກເປັນຄຳເວົ້າທີ່ມີຄ່າສູງ ເຮັດໃຫ້ຄົນບໍ່ສາມາດຢຸດທີ່ຈະເຮັດຄວາມດີທີ່ສຸດຕໍ່ຄົນອື່ນໆ ຄື: <u>ອາກາເປ</u> ໃນພາສາກຣີກ ເປັນຄວາມຮັກທີ່ແຕກຕ່າງໃນພຣະຄັມພີໃໝ່. ຄວາມຮັກ ອາກາເປ ແມ່ນຄວາມຮັກຂອງພຣະເຈົ້າທີ່ໄດ້ສະແດງໃຫ້ມະນຸດເຫັນໂດຍທາງອົງພຣະເຢຊູເອງ.

ໃນເມື່ອເອົາຄຳເວົ້າເຫລົ່ານີ້ມາປະກອບໃຊ້ໃນຄຣິສຕະຈັກ ຜົນທີ່ໄດ້ຮັບກໍແມ່ນ "ສັນຕິສຸກ" ຄືການສະມາຄົມອັນແທ້ ຈິງ. ໃນເມື່ອຄວາມຈອງຫອງແລະກະທຳຜິດຕໍ່ຄົນອື່ນນັ້ນໄດ້ຖືກເອົາມາແທນດ້ວຍຄວາມຖ່ອມໃຈລົງ, ອ່ອນສຸພາບ, ອົດທົນ ແລະຄວາມຮັກແລ້ວ ສິ່ງປະເສີດໄດ້ເກີດຂຶ້ນຕໍ່ຄົນຂອງພຣະເຈົ້າ. ການທີ່ເປັນນ້ຳນຶ່ງໃຈດຽວກັນກໍເປັນຄວາມ ປາຖນາຂອງອາຈານໂປໂລ ຢາກໃຫ້ພວກຢິວແລະພວກຕ່າງຊາດຢູ່ຮ່ວມກັນ ແລະຮັບໃຊ້ໃນຄຣິສຕະຈັກໃຫ້ເກີດຜົນດີ. ບໍ່ໃຫ້ມີຄຣິສຕະຈັກຂອງພວກຢິວແລະພວກຕ່າງຊາດເກີດຂຶ້ນ ແຕ່ມັນເປັນຮ່າງກາຍດຽວກັນໃນຄຣິສຕະຈັກມີພຣະ ເຈົ້າອົງດຽວ, ມີຄວາມເຊື່ອດຽວ, ມີບັບຕິສະມາອັນດຽວ-ບໍ່ແມ່ນຕ່າງໆກັນໃນຕ່າງກຸ່ມ-ມີພຣະເຈົ້າອົງດຽວຜູ້ເປັນບິດາ ຕໍ່ຄົນທັງປວງ.

ການເປັນອັນນຶ່ງອັນດຽວໃນຄຣິສຕະຈັກນັ້ນໄດ້ພົບເຫັນໃນຈົດໝາຍຂອງອາຈານໂປໂລໄດ້ສົ່ງໄປຍັງເມືອງຄາລາເຕັຽໄດ້ກ່າວວ່າ, "ຈະບໍ່ເປັນຊາດຢິວຫລືຄົນຕ່າງຊາດ, ຈະບໍ່ເປັນຂ້ອຍຂ້າຫລືອິສລະ, ຈະບໍ່ເປັນຊາຍຫລືຍິງ ເພາະວ່າ

ເຈົ້າທັງປວງເປັນອັນນຶ່ງອັນດຽວກັນໃນພຣະຄຣິດຄືພຣະເຢຊູ. ຖ້າເຈົ້າທັງຫລາຍເປັນຂອງພຣະຄຣິດແລ້ວ ເຈົ້າກໍເປັນເຊື້ອສາຍຂອງອັບຣາຮາມ ຄືເປັນຜູ້ຮັບມໍຣະດົກຕາມພຣະສັນຍາ" (ຄາລາເຕັຽ 3:28-29)

ນັ້ນຈະເປັນຄໍາພະຍານອັນມີພະລັງຄືພວກຢິວແລະພວກຕ່າງຊາດ, ເຄີຍເປັນຄົນແປກແລະສັດຕູກັນ ດຽວນີ້ກາຍເປັນອັນນຶ່ງອັນດຽວກັນໃນຄວາມຮັກ ແລະເປັນຄອບຄົວດຽວຢ່າງຜູ້ທີ່ເຊື່ອໃນພຣະຄຣິດ. ການເປັນກາຍດຽວກັນນີ້ບໍ່ໄດ້ໝາຍເຖິງທຸກຄົນມີໜ້າຕາຄືກັນ. ແຕ່ມັນແມ່ນມີຊີວິດຢູ່ຮ່ວມກັນໃນຖ້າມກາງຄວາມແຕກຕ່າງ ໃຊ້ພຣະພອນທີ່ພຣະເຈົ້າໃຫ້ນັ້ນເພື່ອເສີມສ້າງຮ່າງກາຍຂອງພຣະຄຣິດໃຫ້ຈະເຣີນ ໃຫ້ສົມມາສົມຄວນຕໍ່ການຮຽກເອີ້ນຂອງພຣະເຈົ້າ. ຖ້າເຮັດຢ່າງນັ້ນ ພວກເຮົາຈະໄດ້ເຫັນຄຣິສຕະຈັກມີຊີວິດຢ່າງນັ້ນເກີດຂຶ້ນໃນທຸກວັນນີ້.

**ຂ. <u>ຂອງພຣະຣາຊທານທີ່ຊ່ອຍໃຫ້ຈະເຣີນໃຫຍ່ຂຶ້ນ</u>:** (ພຣະທັມເອເຟໂຊ 4:7-12)

ໃນຕອນນີ້ເນື້ອເຣື່ອງໄດ້ເຄື່ອນໄປຈາກນິສັຍໃຈຄໍຂອງສະມາຊິກ ເຂົ້າໄປຫາຂອງພຣະຣາຊທານທີ່ຊ່ອຍໃຫ້ຄຣິສຕຽນຈະເຣີນຂຶ້ນແລະມີຊີວິດຢູ່ເປັນຢ່າງດີ. ອາຈານໂປໂລໄດ້ອ້າງເຖິງປື້ມເພງສັຣເສີນ 68: 9, ແຕ່ມີຄວາມໝາຍຕ່າງກັນ. ນັກຂຽນໄດ້ເວົ້າເຖິງກະສັດໃນສມັຍບູຮານຜູ້ໄດ້ຮັບຊັຍຊະນະສົງຄາມ. ກະສັດເຈົ້າເອົາພວກຊະເລີຍເສິກແລະບັງຄັບໃຫ້ພວກເຂົາຍ່າງໄປນໍາຫ້ອງຖນົນດ້ວຍຄວາມອັບອາຍ, ແລະຍັງຮ້ອງຂໍຄ່າໄຖ່ຈາກຊາດທີ່ເສັຽຊັຍນັ້ນ. ຕອນນີ້ອາຈານໂປໂລໄດ້ສະແດງໃຫ້ເຫັນພຣະວິນຍານຂອງພຣະເຈົ້າ ຜູ້ຮູ້ເຫັນພວກເຮົາຖືກຈັບໄປເປັນຊະເລີຍເສິກຂອງຄວາມບາບຍ້ອນການບໍ່ເຊື່ອຟັງ ໃນທີ່ສຸດພຣະເຈົ້າໄດ້ຄອງຊັຍຊະນະຕໍ່ຄວາມບາບຂອງພວກເຮົາດ້ວຍອົງພຣະຄຣິດແລະພຣະອົງໄດ້ປະທານລາງວັນໃຫ້ເຮົາກາຍເປັນປະຊາຊົນຂອງພຣະອົງ.

ອົງພຣະເຢຊູຜູ້ເອົາຊັຍຊນະຕໍ່ຄວາມບາບຂອງພວກເຮົາໄດ້ປະທານສິ່ງຈໍາເປັນຕໍ່ຄົນຂອງພຣະອົງເພື່ອໃຫ້ພວກເຂົາມີຊີວິດໃໝ່. ພຣະບຸດຂອງພຣະເຈົ້າຜູ້ສະເດັດລົງມາມີປະສົບການເໝືອນມະນຸດຈົນເຖິງແກ່ຄວາມຕາຍ ແລະດຽວນີ້ໄດ້ສະເດັດຂຶ້ນໄປໃນສວັນຢ່າງຜູ້ມີຊັຍ. ພ ຣະອົງໄດ້ສໍາເຣັດເປົ້າໝາຍທີ່ພຣະເຈົ້າໄດ້ວາງໄວ້ສໍາລັບຄົນຂອງພຣະອົງ. (ອຟຊ. 4:9). ພຣະອົງໄດ້ມອບຂອງພຣະຣາຊທານໃຫ້ເພື່ອພວກເຮົາຈະໄດ້ຈະເຣີນຂຶ້ນ. ເປົ້າໝາຍຂອງພຣະເຈົ້າຄືໃຫ້ປະຊາຊົນຂອງພຣະອົງກາຍເປັນນໍ້ານຶ່ງໃຈດຽວກັນໃນຊີວິດ, ແລະພຣະເຈົ້າຈະເປັນຜູ້ຊ່ອຍໃນການເຮັດຢ່າງນັ້ນ.

ອາຈານໂປໂລໄດ້ເວົ້າເຖິງຂອງພຣະຣາຊທານສີ່ຢ່າງຕໍ່ຜູ້ນໍາ ເພື່ອຈະຊ່ອຍໃນການດໍາເນີນຊີວິດຂອງພວກເຂົາ. ເພິ່ນເລີ້ມຈາກຜູ້ເປັນ "ອັຄສາວົກ" ຜູ້ທີ່ໄດ້ເຫັນໄດ້ຍິນຄໍາສອນຂອງພຣະເຢຊູ ເປັນພະຍານແລະປະສົບເຫັນພຣະອົງອີກເວລາພຣະອົງໄດ້ຄືນມາຈາກຄວາມຕາຍ. ນັ້ນເປັນປະສົບການຄັ້ງທໍາອິດຂອງພວກອັຄສາວົກ. ອາຈານໂປໂລຖືວ່າຕົນເອງເປັນອັຄສາວົກສເມີ, ບໍ່ແມ່ນພວກທີ່ໄດ້ຕິດຕາມເວລາພຣະເຢຊູຢູ່ໃນໂລກນີ້, ແຕ່ແມ່ນຜູ້ໄດ້ພົບເຫັນພຣະເຢຊູຫລັງຈາກພຣະອົງໄດ້ຄືນມາຈາກຕາຍ ນັ້ນເປັນການອັສຈັນ.

ທີສອງໃນລາຍຊື່ນີ້ແມ່ນ "ຜູ້ປະກາດພຣະທັມ" ນີ້ບໍ່ແມ່ນຜູ້ເວົ້າເຖິງອະນາຄົດເທົ່ານັ້ນ ແຕ່ເປັນຜູ້ເທສນາພຣະຄໍາ. ພວກເຂົາໄດ້ເວົ້າເຖິງຜົນສະທ້ອນຂອງການບໍ່ເຊື່ອຟັງ ແຕ່ພວກເຂົາໄດ້ເອີ້ນໃຫ້ຄົນມີຄວາມສັດຊື່ຕໍ່ພຣະປະສົງຂອງພຣະເຈົ້າ.

"ຜູ້ປະກາດຂ່າວປະເສີດ" ແມ່ນຜູ້ເດີນທາງໄປທຸກໆແຫ່ງ ບ່ອນທີ່ອາຈານໂປໂລໄດ້ຂຽນຈົດໝາຍໄປເຖິງ. ພວກນີ້ແມ່ນພວກສາສນາທູດຜູ້ຮູ້ຈັກເຣື່ອງຂອງອົງພຣະເຢຊູ ແລະເປັນຜູ້ອະທິບາຍສິ່ງເຫລົ່ານີ້ແກ່ຄົນອື່ນໆ.

ສຸດທ້າຍ ອາຈານໂປໂລໄດ້ເວົ້າເຖິງ "ສິດຍາພິບານແລະອາຈານ" ຄໍາເວົ້າສອງຄໍານີ້ໄດ້ເວົ້າເຖິງໜ້າທີ່ສອງຢ່າງຂອງຄົນດຽວໃນຄຣິສຕະຈັກ. ສິດຍາພິບານຫລືອາຈານມີໜ້າທີ່ລ້ຽງດູຜູ້ເຂົ້າມາເຊື່ອໃໝ່. ຜູ້ທີ່ເຊື່ອໃໝ່ນີ້ອອກມາຈາກທໍານຽມຂອງສາສນາຕ່າງໆ ອາດບໍ່ຮູ້ຈັກຄົນຢິວ ຫລືຄວາມໝາຍວ່າເປັນຄຣິສຕຽນຄວນປະຕິບັດຢ່າງໃດ.

ໜ້າທີ່ທໍາອິດຂອງຜູ້ນໍາສີ່ຢ່າງນີ້ຄື ສ້າງຄຣິສຕະຈັກໃຫ້ແຂງແຮງຂຶ້ນ ເພື່ອການປະກາດໃນໂລກ. ໝາຍເຫດ: ຜູ້ນໍາເຫລົ່ານີ້ໄດ້ສົ່ງອອກໄປ "ເພື່ອເສີມສ້າງພຣະກາຍຂອງພຣະຄຣິດໃຫ້ຈະເຣີນຂຶ້ນ" (ອຟຊ. 4:12). ຈຸດປະສົງກໍເພື່ອເຮັດໃຫ້ພຣະນິມິດຂອງພຣະເຈົ້າໃນອົງພຣະຄຣິດນັ້ນກາຍເປັນຈິງຄືເປັນນໍ້ານຶ່ງໃຈດຽວກັນຖ້າມກາງຄວາມແຕກຕ່າງ, ໃຫ້ກາຍເປັນຜູ້ອາວຸດໂສໃນການສາມັກຄີທັມ ການຮັບໃຊ້ ແລະການເປັນພະຍານ.

**3. <u>ເປົ້າໝາຍຂອງຄຣິສຕຽນໃຫ້ຈະເຣີນຂຶ້ນນຳກັນໃນຄຣິສຕະຈັກ</u>:** (ເອເຟໂຊ 4:13-16)

ອາຈານໂປໂລໄດ້ສລຸບໂດຍກັບຄືນໄປຫາຄຳຂວັນທີ່ກ່າວເຖິງການເປັນອັນນຶ່ງອັນດຽວໃນຄວາມສາມັກຄີທັມ. ແຜນການອັນສັກສິດກໍຄື "ເສີມສ້າງພຣະກາຍຂອງພຣະຄຣິດ." ສິ່ງເຫລົ່ານີ້ໄດ້ບັນລຸຜົນໃນເມື່ອຄຣິສຕຽນກາຍເປັນຜູ້ອາວຸໂສໃນຄວາມສຳພັນຕໍ່ພຣະເຈົ້າແລະຕໍ່ກັນແລະກັນ. ນີ້ບໍ່ແມ່ນການເປັນຄືກັນທາງນອກ, ແຕ່ໝາຍເຖິງຜູ້ທີ່ເຊື່ອໄດ້ເປັນອັນນຶ່ງອັນດຽວກັນໃນການຖວາຍຕົວຫລາຍຂຶ້ນຕໍ່ພຣະຄຣິດ. ຫລາຍຄັ້ງການທີ່ເຮັດໃຫ້ພວກເຮົາຜິດຖຽງກັນໃນຊີວິດນີ້ກໍຍ້ອນເຮົາເປັນຄົນເຫັນແກ່ຕົວ. ອາຈານໂປໂລຮ້ອງຂໍໃຫ້ເພື່ອນຜູ້ທີ່ເຊື່ອໃນພຣະຄຣິດໃຫ້ "ຈະເຣີນໃຫຍ່ຂຶ້ນ" (ອຟຊ. 4:15)

ຄຣິສຕະຈັກມີກຽດສູງສຸດໃນເມື່ອສະມາຊິກມີຊີວິດຢູ່ໃຫ້ສົມກັບເປັນ "ຮ່າງກາຍຂອງພຣະຄຣິດ." ໃນເມື່ອພຣະຄຣິດໄດ້ເປັນສີສະຫລີຫົວ ສະມາຊິກທຸກໆຄົນກໍຕ້ອງໃຊ້ຂອງພຣະຣາຊທານ, ຄວາມສາມາດ, ແລະໂອກາດເພື່ອຈະເຮັດໃຫ້ການຮັບໃຊ້ຂອງຄຣິສຕະຈັກສຳເຣັດ.

## ຄວາມໝາຍ ແລະການນຳເອົາມາໃຊ້

ທຸກວັນນີ້ພວກເຮົາຢູ່ໃນຊ່ວງທີ່ສາມາດວັດແທກເປົ້າໝາຍຂອງການເປັນນ້ຳນຶ່ງໃຈດຽວກັນໃນຄຣິສຕະຈັກ. ຫລາຍເທື່ອພວກເຮົາມັກຕິດຕາມວິທີທາງເຫັນແກ່ຕົວ ແລະບໍ່ເອົາໃຈໃສ່ກັບຄວາມຕ້ອງການຂອງຄົນອື່ນ. ຄຣິສຕະຈັກໄດ້ປໂຍດໃນເມື່ອເອົາໃຈໃສ່ຊອກຫາທາງທີ່ຈະເຮັດໃຫ້ມີຄວາມສຳພັນດີຂຶ້ນ, ໝູນໃຈກັນ, ແລະເຮັດໃຫ້ກຸ່ມປະຊຸມເປັນອັນນຶ່ງອັນດຽວກັນໃນຄວາມຮັກ ແລະໃນພຣະຄຸນຂອງພຣະເຈົ້າ.

ຂ້າເຈົ້າໄດ້ຮັບໃຊ້ເປັນເວລາຫລາຍສິບປີ ໃນເມື່ອໄດ້ເຫັນຄົນຈາກຫລາຍໆບ່ອນໄດ້ນັ່ງນະມັສການ ພຣະເຈົ້າອົງທ່ຽງແທ້ຮ່ວມກັນໃນບ່ອນດຽວກັນ ຂ້າພະເຈົ້າມີຄວາມຍິນດີຫລາຍ ແລະຍົກຍ້ອງສັນລະເສີນພຣະເຈົ້າເພາະໄດ້ປະສົບເຫັນພາບດັ່ງນັ້ນ. ສະພານໄຕ່ຂ້າມໄປຫາກັນໄດ້ຖືກສ້າງຂຶ້ນໃນເມື່ອພວກເຮົາມີຊີວິດຢູ່ຕາມຂອງພຣະຣາຊທານ ແລະພຣະຄຸນຂອງພຣະເຈົ້າ. ແນວໃດກໍຕາມການເປັນອັນນຶ່ງອັນດຽວກັນນັ້ນເປັນພະຍານດີໃນຖ້າມກາງປະຊາຊົນຂອງພຣະເຈົ້າ ແລະເປັນພະຍານທີ່ມີອຳນາດຕໍ່ການປະກາດຂ່າວປະເສີດ.

**<u>ຄຳຖາມ:</u>**

1. ອັນໃດເປັນຄຸນນະວຸດທິດີ- "ການຖ່ອມຕົວ, ອ່ອນນ້ອມ, ອົດທົນແລະຊ່ວຍເຫລືອກັນດ້ວຍຄວາມຮັກ ເປັນສິ່ງທ້າທາຍໃນການຈະເຣີນໃຫຍ່ຂຶ້ນຢ່າງຄຣິສຕຽນຂອງທ່ານ? ວິທີໃດທ່ານຈະກາຍເປັນຜູ້ອາວຸໂສກັບຄຸນວຸດທິນັ້ນ?

2. ຄວາມຄິດກ່ຽວກັບ "ພວກຕ່າງຊາດແລະພວກຢິວ" ອາດຈະບໍ່ເປັນບັນຫາແບ່ງແຍກໃນຄຣິສຕະຈັກໃນທຸກວັນນີ້. ແຕ່ວ່າແມ່ນຄົນຊະນິດໃດໄດ້ເຮັດໃຫ້ພວກເຮົາແບ່ງແຍກກັນໃນຄຣິສະຈັກໃນທຸກມື້ນີ້?

3. ຢູ່ໃສຫລືໃນທາງໃດ ທ່ານຮູ້ສຶກວ່າເປັນການຕຽມພ້ອມເພື່ອຈະເຮັດໃຫ້ການຮັບໃຊ້ຂອງທ່ານໄດ້ຜົນ?

4. ໃນທາງໃດທ່ານໄດ້ຮັບພຣະພອນໂດຍມີໂອກາດໄດ້ຮັບໃຊ້ດ້ວຍພຣະຄຸນໃນຄວາມຮັກ ໃນການປະສົບການຂອງທ່ານ? ໃຫ້ບອກເຖິງຄົນບາງຄົນອອກມາເພື່ອທ່ານ ແລະເພື່ອນໃນຫ້ອງຮຽນຈະມີໂອກາດສະແດງຄວາມຮັກນັ້ນຕໍ່ພວກເຂົາ.

*ດຣ. ບຸນ ວົງສຸຣິດທ໌*

# ບົດຮຽນທີ 6
## ເຮັດຕາມແນວທາງແນະນຳ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເອເຟໂຊ 4:17-5:2, 11-16

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ 4:17-5:20

**ຈຸດສຳຄັນຂອງບົດຮຽນນີ້:** ພົ້ນດ້ວຍພຣະຄຸນຂອງພຣະເຈົ້າທາງຄວາມເຊື່ອເທົ່ານັ້ນ, ຄຣິສຕຽນຮຽນຮູ້ເຖິງພຣະຄຣິດ ແລະມີຊີວິດຢູ່ໃຫ້ຖືກຕ້ອງ.

**ຄຳຖາມເພື່ອການຄົ້ນຄວ້າ:** ເຮັດວິທີໃດທີ່ຈະເອົາຄຳສອນຢ່າງຄຣິສຕຽນມາໃຊ້ຕໍ່ການປະພຶດໃນສັງຄົມທີ່ໂຍະຍານໂດຍທີ່ບໍ່ເປັນຄົນສອງໜ້າໄດ້?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຍົກເອົາຄຳສອນໃນພຣະຄຳຕອນທີ່ທ້າທາຍຕໍ່ຊີວິດຂອງຂ້າພະເຈົ້າ ແລະເອົາມາປະກອບໃຊ້ໃນຊີວິດ.

## ບົດນຳ

ທ່ານອາຈານໂປໂລໄດ້ທ້າທາຍຕໍ່ຄຣິສຕຽນໃໝ່ຜູ້ຫາກໍອອກມາຈາກຊີວິດເກົ່າທີ່ເຄີຍນັບຖືພຣະຕ່າງໆ ແລະຍອມໃຫ້ອຳນາດຂອງພຣະເຢຊູຜູ້ຄືນມາຈາກຕາຍປ່ຽນແປງຊີວິດຂອງພວກເຂົາ ເພື່ອເປັນພະຍານໃນການດຳຣົງຊີວິດຢູ່.

ຫລາຍປີມາແລ້ວຂ້າພະເຈົ້າມີໂອກາດໄດ້ພາຄົນຈຳນວນນຶ່ງໄປປະເທດ ອັຟຣິກາ ເພື່ອຈະສອນຄະນະສິດຍາພິບານ ແລະຜູ້ນຳເຖິງເຣື່ອງຊັບສິນ. ຂ້າພະເຈົ້າຮູ້ວ່າເຣື່ອງຊັບສິນນີ້ມີຄວາມໝາຍຫລາຍກວ່າເງິນຄຳ. ຂ້າພະເຈົ້າໄດ້ຮຽນຈາກການໄປຄັ້ງນັ້ນແມ່ນ ວິທີຂອງຄົນໃນສັງຄົມຕ່າງໆມີຄວາມເຂົ້າໃຈເຣື່ອງຊັບສິນນີ້ແຕກຕ່າງກັນ. ພວກເຂົາມີຊັບສົມບັດບໍ່ຫລາຍທີ່ຈະຖວາຍໃນຄຣິສຕະຈັກ. ຊັບສິນມີຄວາມໝາຍຕໍ່ຄຣິສຕຽນເຫລົ່ານີ້ຄືເຂົາໄດ້ພົບຫົນທາງໃນຊີວິດໃໝ່. ພວກເຂົາເຈົ້າເຂົ້າໃຈວ່າ ສິ່ງທີ່ຄວນຖວາຍຕໍ່ພຣະເຈົ້າກ່ອນອື່ນນັ້ນແມ່ນຊີວິດທີ່ມີການປ່ຽນແປງເພື່ອມອບໃຫ້ພຣະເຈົ້າໃຊ້. ຫລາຍຄົນໄດ້ມາຮຽນໃນຫ້ອງຂ້າພະເຈົ້າໄດ້ສະແດງໃຫ້ເຫັນວ່າພຣະເຈົ້າໄດ້ປ່ຽນແປງຊີວິດໃຫ້ເປັນພະຍານທີ່ດີ ທີ່ກາຍເປັນນິສັຍໃໝ່ຂອງພວກເຂົາ.

ໃນພຣະຄັມພີຕອນນີ້ໄດ້ເວົ້າເຖິງຄົນທີ່ເຊື່ອຜູ້ທີ່ຫາກໍອອກມາຈາກທຳນຽມນັບຖືພຣະຕ່າງໆ ພວກເຂົາຢາກເຂົ້າໃຈວ່າຊີວິດທີ່ເປັນຄຣິສຕຽນນັ້ນຄວນເປັນແນວໃດ. ແນວໃດກໍຕາມພວກເຂົາໄດ້ຮັບຄວາມພົ້ນໂດຍພຣະຄຸນທາງຄວາມເຊື່ອໃນພຣະເຈົ້າ, ພວກເຂົາຄວນຮຽນຮູ້ວິທີທາງໃໝ່ເພື່ອຈະສະແດງເຖິງຄວາມສຳພັນໃໝ່ຕໍ່ພຣະເຈົ້າ.

ພວກເຮົາຫລາຍໆຄົນໄດ້ເຫັນພ້ອມວ່າຄວາມເຊື່ອຂອງຄຣິສຕຽນມີທັມຈະຣິຍາສູງ ໝາຍຄວາມວ່າການທີ່ເຮົາໄດ້ຕິດຕາມອົງພຣະເຢຊູໄປມີຜົນສະທ້ອນຕໍ່ການປະພຶດຂອງຜູ້ທີ່ເຊື່ອ. ນັ້ນໝາຍຄວາມວ່າເອົາຊີວິດແລະການຮັບໃຊ້ຂອງອົງພຣະເຢຊູມາປະກອບໃຊ້ຕໍ່ທຸກໆເຣື່ອງຂອງຊີວິດ ນັ້ນແມ່ນພາຣະຂອງຄຣິສຕຽນແຕ່ລະຄົນໃນທຸກໆສມັຍທີ່ຕ້ອງເຮັດ. ການເຮັດດັ່ງນີ້ ໄດ້ເປັນການທ້າທາຍຜູ້ເປັນນັກເທດ ແລະຄຣູສອນໃນສອງກໍຣະນີ.

ນຶ່ງ, ຕ້ອງລະວັງເພື່ອບໍ່ໃຫ້ເອົາຄຳສອນຂອງຄຣິສຕຽນເຮັດໃຫ້ເປັນກົດເກນທີ່ຈຳເປັນຕ້ອງເຮັດເພື່ອຈະໄດ້ຄວາມເຫັນພ້ອມຈາກພຣະເຈົ້າ. ພວກເຮົາມັກຊອກຫາກົດເກນ ຫລືຂໍ້ບັນຍັດເພື່ອເອົາປະກອບໃຊ້ໃນຊີວິດປະຈຳວັນ. ການເຮັດດັ່ງນັ້ນເປັນຜົນເສັຽຫາຍຜ່ານມາແລ້ວ ເຊັ່ນພວກຟາຣີຊາຍໃນສັດຕະວັດແຣກ.

ສອງ, ເປັນການທ້າທາຍບໍ່ໃຫ້ພວກເຮົາລົດຄວາມເຂົ້າໃຈເຖິງເຣື່ອງທັມຈະຣິຍາຂອງຄຣິສະຕຽນ ແລະພຣະຄຸນຂອງ ພຣະເຈົ້າອັນອັສຈັນ ໃຫ້ເຂົ້າໃຈງ່າຍ ເໝືອນດັ່ງຄຳຂວັນຕິດທ້າຍຣົຖ ຫລືຕິດໃນປ້າຍໂຄສະນາ. ຖ້າພວກເຮົາ

ເຮັດໃຫ້ ພຣະລັງຂອງຂ່າວປະເສີດທີ່ປ່ຽນຊີວິດຂອງມະນຸດນັ້ນລຶດລົງເພື່ອໃຫ້ຖືກກັບຄວາມຄິດຂອງຄົນເຮົາກໍບໍ່ມີປໂຍດອັນ ໃດ. ຄວາມຫຍຸ້ງຍາກໃນໂລກນີ້ບັງຄັບເຮົາໃຫ້ມີຈິດໃຈຖ່ອມລົງເພື່ອຈະຊອກສແວງຫາທາງດີໃຫ້ກຽດແດ່ພຣະ ເຈົ້າທີ່ພຣະອົງໄດ້ກະທຳໃນອົງພຣະເຢຊູຄຣິດ. ສິ່ງນີ້ເປັນການຊອກສແວງຫາທຸກໆວັນເວລາເທົ່າທີ່ເຮົາມີຊີວິດບໍ່ວ່າຈະຢູ່ໃນບ້ານ, ໃນບ່ອນເຮັດວຽກ, ຫລືໃນບ່ອນຊຸມນຸມຕ່າງໆ.

ຜູ້ຂຽນໄດ້ທ້າທາຍໃນພຣະຄຳຕອນນີ້ໃຫ້ຄົນທີ່ເຊື່ອໃໝ່ນັ້ນປະຊີວິດເກົ່າໆ ແລະນ້ອມຕົວເຂົ້າໄປໃນຄວາມສັມພັນໃໝ່ ຢ່າງມີພະລັງກັບພຣະເຈົ້າຜ່ານທາງອົງພຣະຄຣິດເຈົ້າ. ອາຈານໂປໂລ ຍອມຮັບສເມີວ່າເປັນອັນຕະລາຍທີ່ເອົາກົດເກນ ແລະການທຳດີມາໃຊ້ເພື່ອຈະໃຫ້ພຣະເຈົ້າຊອບພຣະທັຍ.

## 1. <u>ອອກຈາກຊີວິດເກົ່າແລະເຂົ້າໄປເຖິງຊີວິດໃໝ່ໃນພຣະຄຣິດ</u>: (ເອເຟໂຊ 4:17-24)

ອາຈານໂປໂລເລີ້ມຕົ້ນຮ້ອງຂໍ "ຢ່າດຳເນີນຊີວິດຕາມຄົນຕ່າງຊາດ" (ອຟຊ. 4:17). ຈຳໄດ້ບໍ່ວ່າຜູ້ຮັບຈົດໝາຍນີ້ແມ່ນຄົນຕ່າງຊາດ (ອຟຊ. 3:1). ໃນຂໍ້ 17, ຄຳວ່າຕ່າງຊາດມີຄວາມໝາຍຫລາຍກວ່າຄົນທີ່ບໍ່ແມ່ນພວກຢິວ. ພວກເຮົາອາດໃຊ້ຄຳເວົ້ານີ້ກັບຜູ້ຖືຮູບໂຄຣົບເພື່ອອ້າງເຖິງພວກຕ່າງຊາດນີ້ໄດ້ເໝືອນກັນ. ຊີວິດແລະຄຸນຄ່າຂອງພວກເຂົາກໍແຕກຕ່າງດ້ວຍການໂຄຣົບນັບຖືສາສນາທີ່ເປັນທຳນຽມຂອງພວກເຂົາ ເຫັນວ່າຜິດແປກແຕກຕ່າງກັບຄຳສອນໃນພຣະຄັມພີ. ຂໍ້ຄວາມເຫລົ່ານີ້ໄດ້ເປັນສິ່ງສຳຄັນໃນບົດ 2:12: "ຈົ່ງລະນຶກວ່າ ເມື່ອນັ້ນທ່ານທັງຫລາຍເປັນຄົນຢູ່ນອກພຣະຄຣິດ ຂາດຈາກການເປັນພົລເມືອງອິສຣາເອນ, ບໍ່ມີສ່ວນໃນບັນດາຄຳໝັ້ນສັນຍາທີ່ຊົງສັນຍາໄວ້ນັ້ນ, ຢູ່ໃນໂລກໂດຍບໍ່ມີຄວາມຫວັງ ແລະບໍ່ມີພຣະເຈົ້າ."

ລັກສະນະຊີວິດເກົ່າຂອງພວກຕ່າງຊາດກໍໄດ້ກ່າວເຖິງໃນຂໍ້ທີ່ກ່າວມານີ້ ກ່ອນພວກເຂົາໄດ້ເຂົ້າມາຮັບເອົາອົງພຣະເຢຊູ. ພວກເຂົາເຄີຍເປັນຂອງໂລກໂດຍທີ່ບໍ່ຮູ້ຈັກຫຍັງເຖິງອົງພຣະຄຣິດ. ມີຫລາຍໆຄຳເວົ້າທີ່ພັລນາເຖິງຊີວິດຂອງພວກຕ່າງຊາດກ່ອນມາຮູ້ຈັກກັບອົງພຣະຄຣິດ. ພວກເຂົາ "ໂດຍທີ່ຄວາມຄິດຂອງເຂົາມືດມົນໄປ" (4:18), ເພາະເປັນພາກສ່ວນຂອງການຮູ້ເທົ່າບໍ່ເຖິງການໃນຄວາມຈິງ. ຄຳວ່າ ຮູ້ເທົ່າບໍ່ເຖິງການມີຄວາມໝາຍວ່າ <u>ບໍ່ເອົາຫົວຊາຕໍ່ສະພາບການຫລືເບິ່ງຂ້າມໄປ.</u> (ກິຈການ 17:29-30). ສິ່ງທີ່ຕິດຕາມໄປກໍແມ່ນ "ໃຈແຂງກະດ້າງ" ບໍ່ເອົາຫົວ ຊາໃນການປະກອບຄວາມດີ. ນັ້ນຈຶ່ງເປັນຜົນສະທ້ອນບໍ່ໃຫ້ມີຊີວິດຕາມພຣະປະສົງຂອງພຣະເຈົ້າ.

ເຂົາບໍ່ມີຄວາມຮູ້ສຶກຢ້ານກົວຕໍ່ບາບ (ອຟຊ. 4:19) ເພື່ອຈະເຮັດຄວາມຜິດຄວາມບາບ, ຕາມຣາຄະຕັນຫາ. ບໍ່ມີໃຜຢາກຈະເຮັດບາບ, ທີແລກເວລາເຮັດບາບກໍເຫັນວ່າມີການຕໍ່ຕ້ານ ແລະເມື່ອເຮັດໄປເລື້ອຍໆກໍເຫັນວ່າມັນງ່າຍ ຈົນໃນທີ່ສຸດກໍເສັຽຄວາມຮູ້ສຶກທີ່ຈະເຮັດການດີ.

ພວກເຮົາຖືກເຕືອນເຖິງບາດກ້າວເຮັດຊົ່ວໃນເພງສັຣເສີນ 1:1: *"ຄວາມສຸກເປັນຂອງບຸກຄົນທີ່ບໍ່ເຮັດຕາມຄຳແນະນຳຂອງຄົນຊົ່ວ ຫລືບໍ່ປະພຶດຕາມແບບຢ່າງຂອງຄົນບາບ ຫລືບໍ່ຄົບພັນກັບຄົນປມາດພຣະເຈົ້າ."* ທຳອິດຄົນຍ່າງໄປກັບບາບ ຕໍ່ມາກໍຢືນນຳ ແລະຟັງເຖິງເຫດຜົນຂອງມັນ ໃນທີ່ສຸດກໍເລີຍເຂົ້າຮ່ວມເປັນສະມາຊິກ ໂດຍທີ່ບໍ່ຮູ້ສຶກຕົນວ່າຕົນເອງໄດ້ຫລົງຜິດໄປ (ໄດ້ເຮັດບາບໄປແລ້ວ).

ການເຂົ້າໄປປະກອບສ່ວນໃນພວກນັບຖືຮູບປັ້ນກໍໄດ້ສືບຕໍ່ໄປ "ມີລາຍເຊັນເຮັດຜິດບາບ" ກາຍເປັນຄົນໂລບມາກໂລພາແລະເຮັດສິ່ງຊົ່ວຊ້າທຸກປະການ. (ອຟຊ. 4:19). ນີ້ເນັ້ນເຖິງຄົນຜູ້ທີ່ສູນເສັຽທິດທາງແນວຄິດ, ພວກເຂົາບໍ່ມີຄວາມຮູ້ສຶກເສັຽໃຈຕໍ່ຄວາມບາບ ແລະເຮັດຜິດຕໍ່ຄົນອື່ນ. ໃນເມື່ອພວກເຂົາກາຍມາເປັນຜູ້ທີ່ເຊື່ອໃນອົງພຣະເຢຊູຄຣິດແລ້ວ ພວກເຂົາຈຳເປັນຕ້ອງໜີຈາກຊີວິດເກົ່າເຫລົ່ານັ້ນ ເໝືອນດັ່ງແກ້ເສື້ອເປື້ອນອອກ, ແລະເອົາເສື້ອຜ້າໃນຄວາມເຊື່ອໃໝ່ໃນອົງພຣະເຢຊູມາໃສ່ໃນຊີວິດ.

## 2. <u>ມີຊີວິດໃນແສງສະວ່າງ</u>: (ເອເຟໂຊ 4:25-5:2)

ການຮຽນແບບ ເປັນຄຳເວົ້າທີ່ພວກເຮົາຖືວ່າຕ້ອງລະມັດລະວັງ. ບາງເທື່ອເວົ້າເຖິງຕົ້ນໄມ້ປອມ, ອາຫານປອມ ແລະສິ່ງປອມອື່ນໆອາດເຮັດໃຫ້ເຮົາເຂົ້າໃຈຜິດ. "ການຮຽນແບບ" ເປັນຄືວ່າສິ່ງບໍ່ດີ, ຈອມປອມ, ບໍ່ເປັນຂອງຈິງ.

ແຕ່ ແນວໃດກໍຕາມ ຄຣິສຕຽນພວກເຮົາສອນໃຫ້ເອົາ "ແບບຢ່າງຂອງພຣະເຈົ້າ." (5:1) ໃນເມື່ອພວກເຮົາມີຊີວິດໃໝ່ ໃນອົງພຣະຄຣິດ. ບໍ່ໃຫ້ເປັນສິ່ງປອມ ຫລືບໍ່ຈິງໃນຊີວິດປະຈຳວັນ, ຜູ້ທີ່ເຊື່ອໄດ້ຖືກເອີ້ນໃຫ້ມີຊີວິດໃໝ່ ແລະຄົ້ນຫາຄວາມຈິງທັງສິ້ນ. ໃນຂໍ້ນີ້ຜູ້ທີ່ເຊື່ອໄດ້ພົບເຫັນການຊົງນຳພາໃນເມື່ອພວກເຂົາກຳລັງຄິດວ່າຈະເອົາຊີວິດໃນພຣະຄຣິດ ມາປະກອບໃຊ້ໄດ້ຢ່າງໃດ.

ສິ່ງສຳຄັນໃຫ້ຈຳໄວ້ວ່າຂໍ້ນີ້ໄດ້ເວົ້າເຖິງຄົນທັງຫລາຍທີ່ໄດ້ຮັບເອົາພຣະຄຸນຄວາມພົ້ນຂອງພຣະເຈົ້າທີ່ປະທານ ໃຫ້ໂດຍທາງອົງພຣະເຢຊູ. ບໍ່ແມ່ນໄດ້ເອີ້ນໃຫ້ມາເອົາສິ່ງຈອມປອມ ຫລືຊີວິດທີ່ບໍ່ຈິງ. ຢ່າລືມຂໍ້ກ່ອນທີ່ເປັນພື້ນຖານ ວ່າ "*ກໍຍ້ອນພຣະຄຸນທາງຄວາມເຊື່ອທ່ານທັງຫລາຍໄດ້ຮັບໂຜດໃຫ້ພົ້ນ ບໍ່ແມ່ນພວກທ່ານເຮັດເອົາເອງ, ແຕ່ພຣະເຈົ້າ ຊົງປະທານໃຫ້.*" (2:8-9). ບໍ່ແມ່ນການປະຕິບັດຕາມກົດເກນຕ່າງໆເພື່ອຈະໃຫ້ພຣະເຈົ້າຊອບພຣະທັຍ, ຄຳສອນໃນ ບົດ 4 ນີ້ແມ່ນສຳລັບຄົນທີ່ມີຊີວິດທີ່ດີເພື່ອເປັນພະຍານກັບສິ່ງທີ່ພຣະເຈົ້າໄດ້ກະທຳຕໍ່ຕົນເອງມາແລ້ວ. ຂໍ້ຄວາມເຫລົ່ານີ້ໄດ້ສອນແລະແນະນຳຜູ້ເຊື່ອໃໝ່, ຜູ້ທີ່ໄດ້ຍິນຂ່າວປະເສີດ ວ່າພຣະເຈົ້າໄດ້ຊົງຮັກພວກເຂົາ ແລະພວກເຂົາຕ້ອງມີຊີວິດ ຕາມພຣະປະສົງຂອງພຣະເຈົ້າ. ໃຫ້ພິຈາຣະນາເບິ່ງເລື່ອງທີ່ໄດ້ຍົກເອົາມາເວົ້າໃນທີ່ນີ້.

ຜູ້ທີ່ເຊື່ອຖືກທ້າທາຍໃຫ້ເປັນຄົນສັດຊື່: "*ຈົ່ງເລີກກ່າວຄຳຕົວະເສັຽ ທຸກຄົນຕ້ອງກ່າວຄວາມຈິງ*" (4:25). ຄົນສ່ວນຫລາຍໃນປະເທດທີ່ຈະເຣີນເປັນຄົນມັກເວົ້າຄວາມຈິງ, ແຕ່ໃນເມື່ອເຫັນວ່າຄົນທີ່ຕົນເອງໄວ້ວາງໃຈເວົ້າບໍ່ຈິງກໍມີຈິດ ໃຈຄຽດຮ້າຍເກີດຂຶ້ນ. ພຣະຄັມພີຕອນນີ້ໄດ້ສອນໃຫ້ເອົາຄວາມເວົ້າສອງລີ້ນແລະການປະພຶດອອກໄປຈາກຈິດໃຈ.

"*ຈະຮ້າຍກໍຮ້າຍໄດ້ແຕ່ຢ່າເຮັດບາບ*" (4:26) ຍອມຮັບເອົາຄວາມຮູ້ສຶກຂອງມະນຸດ. ອາຈານໂປໂລເຕືອນຄຣິສຕຽນບໍ່ໃຫ້ເອົາຄວາມຮ້າຍເຂົ້າມາໃນຊີວິດຈົນມັນເກີດລະເບີດຈົນເຮັດໃຫ້ຄົນອື່ນໄດ້ຮັບຜົນເສັຽຫາຍ. ເປັນການດີທີ່ ພວກເຮົາຈະສາລະພາບຄວາມຮ້າຍນັ້ນຕໍ່ກັນແລະກັນ, ຈັດການກັບມັນ ແລະປະມັນໄວ້ທາງຫລັງ.

ຄຣິສຕຽນໄດ້ໝູນໃຈໃຫ້ເຊົາເຮັດສິ່ງທີ່ໄດ້ກຳໄລຢ່າງບໍ່ສັດຊື່ ແລະມີຊີວິດດ້ວຍການລ້ຽງຊີບໃນທາງສັດຊື່ (4:28). ທ່ານເຄີຍໄດ້ພົບຄົນມັກອວດອ້າງຄວາມສັດຊື່ຂອງຕົນເອງບໍ່ ເຂົາບໍ່ຄິດຢາກໄດ້ຂອງຄົນອື່ນມາເປັນຂອງຕົນເອງ, ແຕ່ ວ່າເລື່ອງສໍ້ໂກງການເສັຽພາສີໃຫ້ຣັຖບານນັ້ນແມ່ນບໍ່ໄດ້ຄິດເຖິງ ການລັກໂລບຢ່າງນີ້ບໍ່ໄດ້ສະແດງເຖິງຊີວິດທີ່ມາຈາກ ພຣະເຈົ້າ.

"*ຢ່າໃຫ້ຄຳຫຍາບຊ້າອອກຈາກປາກຂອງເຈົ້າຈັກເທື່ອ, ແຕ່ໃຫ້ຄຳເວົ້າອັນດີທີ່ຈະຊ່ວຍຊູໃຫ້ຈະເຣີນຂຶ້ນ*" (4:29)ນັ້ນ ເປັນພະລັງຂອງພຣະຄັມທີ່ຊ່ວຍ ຫລືເຮັດໃຫ້ເຈັບປວດ. ຄຳເວົ້າປໂຍກນີ້ໄດ້ເຕືອນຜູ້ເປັນລູກວ່າ, "ຖ້າທ່ານບໍ່ສາ ມາດ ເວົ້າເຖິງສິ່ງທີ່ດີຂອງຄົນນຶ່ງຄົນໃດ ກໍຢ່າເວົ້າຫຍັງອີກຕໍ່ໄປ!" ໃນວັທນະທັມຂອງປະເທດນີ້ ຄວາມເວົ້າທີ່ເປິເປື້ອນໄດ້ ເວົ້າອອກມາເປັນປະຈຳ, ດັ່ງນັ້ນ, ຄົນຂອງພຣະເຈົ້າຕ້ອງເປັນຜູ້ບໍຣິສຸດ, ມີຄວາມເມດຕາ, ແລະຮັກພຣະເຈົ້າເປັນການ ສົມຄວນ.

ໃນທີ່ສຸດ ອາຈານໂປໂລ ໄດ້ຂຽນເປັນລາຍຊື່ອອກມາທີ່ພວກເຮົາຄວນຈະເອົາອອກໄປຈາກຊີວິດ ເພື່ອຈະແດງໃຫ້ ເຫັນວ່າເຮົາຄວນມີຊີວິດຢ່າງມີກຽດເຊັ່ນ: ໃຈຂົມຂື່ນ, ໃຈໂມໂຫໂຫໂສ, ໃຈຄຽດຮ້າຍນັ້ນ, ການອຶກກະທຶກຜິດຖຽງກັນ, ແລະການກ່າວສຽດສີ (4:31) ຕ້ອງໃຫ້ມີຄວາມເມດຕາ, ແລະເອັນດູ ຍົກໂທດໃຫ້ກັນ (4:32) ເພາະສິ່ງເຫລົ່ານີ້ເປັນ ສິ່ງທີ່ພຣະເຈົ້າໄດ້ກະທຳຕໍ່ພວກເຮົາໂດຍທາງພຣະເຢຊູຄຣິດ.

ການສັ່ງສອນຕອນນີ້ບໍ່ແມ່ນພຽງແຕ່ເຕືອນສະຕິເຮົາເຖິງຫົນທາງຄຣິສຕຽນເທົ່ານັ້ນ ບໍ່ແມ່ນຫລັກຄວາມເຊື່ອຊື່ໆ. ວິທີທາງຂອງພຣະຄຣິດແມ່ນໃຫ້ມີຊີວິດອອກມາຈາກຄວາມຮັກຂອງພຣະເຈົ້າ ໃນວິທີທາງທີ່ເຮົາໄດ້ກະທຳຕໍ່ຄົນອື່ນ. ວິທີທາງຂອງຄຣິສຕຽນຄືໃຫ້ຜລິດຄວາມຮັກເກີດຂຶ້ນ, ມີພຣະຄຸນ, ແລະເມດຕາຕໍ່ຄົນອື່ນ ຕໍ່ເພື່ອນມະນຸດທີ່ເຮົາໄດ້ ພົບພໍ້ແຕ່ລະວັນ ເພາະພວກເຂົາຢາກເຫັນພຣະຄຸນຂອງພຣະເຈົ້າຈາກຄົນຂອງພຣະອົງ.

ຜູ້ຂຽນໄດ້ທ້າທາຍຜູ້ຟັງຄຳສອນໃນຕອນນີ້ໃຫ້ "ເອົາຕົວຢ່າງຂອງພຣະເຈົ້າ" ເພື່ອເປັນຜົນສະທ້ອນຕໍ່ຄົນທີ່ຢູ່ຮ່ວມ ກັນ. ນີ້ບໍ່ແມ່ນພຽງແຕ່ເຮັດດີຂ້າງນອກ, ແຕ່ຈຳເປັນຕ້ອງເຮັດສິ່ງທີ່ພຣະເຈົ້າໂດຍທາງພຣະຄຣິດໄດ້ເປີດໃຫ້ຮູ້ເຖິງ

ຄວາມສັກສິດຂອງພຣະເຈົ້າຕໍ່ມະນຸດ. "ລູກທີ່ຮັກເອີຍ" (5:1) ໃຫ້ສະແດງສະພາບຂອງພຣະບິດາຂອງທ່ານໃນສວັນ ຄື "ມີຊີວິດໃນຄວາມຮັກ" ເໝືອນທີ່ອົງພຣະເຢຊູໄດ້ເຮັດມາແລ້ວ ຊຶ່ງເປັນນໍ້າພຣະທັຍຂອງພຣະຄຣິດເອງ, ຜູ້ທີ່ປະທານຕົນເອງໃຫ້ແກ່ພວກເຮົາລ້າໆ.

**3. ໃຊ້ເວລາໃຫ້ເປັນປໂຍດ:** (ເອເຟໂຊ 5:11-16)

ອາຈານໂປໂລໃນຕອນນີ້ເພິ່ນບໍ່ໄດ້ແນະນຳໃຫ້ເອົາຄວາມໂລບມາກໂລພາອອກໄປຈາກໂລກ, ແຕ່ເພິ່ນໄດ້ເນັ້ນເຖິງຄວາມສຳຄັນຂອງການມີຊີວິດໃໝ່ຂອງຜູ້ທີ່ເຊື່ອໃນພຣະຄຣິດ ແລະພວກເຂົາອອກມາຈາກການໂຄຣົບທຳນຽມຂອງພວກນັບຖືກພຣະອື່ນໆ. ພຣະເຢຊູໄດ້ສອນເຖິງຄວາມປຽບທຽບ ຂອງເກືອ ແລະແສງສະວ່າງ (ມັດທາຍ 5:13-14), ນັ້ນໝາຍຄວາມວ່າຜູ້ເປັນສາວົກຂອງພຣະເຢຊູຕ້ອງເປັນພະຍານເຖິງອຳນາດຂອງຂ່າວປະເສີດ ແລະສາມາດປ່ຽນສະພາບການໃນໂລກທີ່ເຂົາຢູ່ໄດ້. ມີຫົນທາງດຽວທີ່ຄຣິສຕະຈັກ ແລະຄຣິສຕຽນຈະໄດ້ປະກາດໃນໂລກນີ້ ຄືໃຫ້ພວກເຂົາມີຊີວິດຢູ່ທີ່ເປັນໜ້ານັບຖື ແລະເຕັມໄປດ້ວຍຄວາມເມດຕາຕໍ່ຄົນອື່ນ. ນັ້ນແມ່ນວິທີທາງຂອງອົງພຣະເຢຊູຄຣິດໄດ້ປະຕິບັດ.

ໃນເອເຟໂຊ 5:14, ເປັນຄຳກາບກອນໄດ້ຊັກຊວນໃຫ້ຜູ້ທີ່ເຊື່ອຕື່ນຈາກນອນ ແລະຍອມໃຫ້ແສງສະວ່າງຂອງອົງພຣະຄຣິດສ່ອງເຂົ້າໄປໃນຊີວິດ. ຄຳເວົ້າເຖິງແສງສະວ່າງນັ້ນເປັນພາບສະແດງເຖິງຄວາມຈິງຂອງພຣະເຈົ້າທີ່ໄດ້ສຳແດງໃນອົງພຣະເຢຊູຄຣິດທີ່ກົງກັນຂ້າມກັບຄວາມມືດໃນຊີວິດຂອງພວກບໍ່ຮູ້ຈັກກັບພຣະເຈົ້າ.

ສິ່ງສຳຄັນແມ່ນໃຫ້ມີຊີວິດຢູ່ໃນຄວາມຈິງຂອງພຣະເຈົ້າ ທີ່ພຣະອົງໄດ້ເອີ້ນເອົາພວກເຮົາທຸກໆຄົນໃຫ້ໃຊ້ເວລາຢ່າງເປັນປໂຍດ (5:16). ບໍ່ມີຜູ້ໃດໃນກຸ່ມພວກເຮົາຮູ້ວ່າຕົນເອງຈະມີໂອກາດກາຍເປັນເກືອແລະແສງສະວ່າງຂອງພຣະເຈົ້າ. ພວກເຮົາບໍ່ຄວນລັງເລໃຈໃນການຕິດຕາມແລະຮັບໃຊ້ອົງພຣະຜູ້ເປັນເຈົ້າ.

## ຄວາມໝາຍ ແລະການນຳເອົາມາໃຊ້

ເປັນເວລາຫຼາຍປີຂ້າພະເຈົ້າມີໂອກາດໄດ້ຮັບໃຊ້ໃນສູນກາງໃຫຍ່ ໄດ້ເຮັດວຽກຮ່ວມກັບສິດຍາພິບານແລະຄຣິສຕະຈັກແລະເຫັນວ່າພວກເຂົາເຈົ້າມີຄວາມຂັດແຍ້ງກັນພໍສົມຄວນ. ຫລາຍຄັ້ງມີການຂັດແຍ້ງກັນເກີດຂຶ້ນກໍເພາະການປະພຶດແລະປະຕິບັດບໍ່ດີໂດຍໃຊ້ຄຳເວົ້າຫຍາບຊ້າ ເມື່ອເປັນດັ່ງນີ້ ຂ້າພະເຈົ້າກໍແປກໃຈຖາມຕົນເອງເບິ່ງວ່າ ຄຣິສຕຽນແທ້ຢູ່ໃສ. ເຣື່ອງເກົ່າໆຄວນຈະລືມໄປແລ້ວນັ້ນກໍຍັງເກັບເອົາມາເວົ້າເປັນເຫດໃຫ້ມີບັນຫານຳກັນອີກ. ຜູ້ໃດກໍຢາກໄດ້ຄົນເຂົ້າມາທາງຕົນເອງເພື່ອຈະໄດ້ຊະນະຢ່າງໂດຍບໍ່ຄິດໃຫ້ຖ້ອນຖີ່. ຄຳເວົ້າທີ່ໂຫດຮ້າຍທຳລາຍຄວາມສັມພັນ ແລະປົວບໍ່ໄດ້. ປັນຍາໃນບົດຮຽນນີ້ສາມາດນຳພາພວກເຮົາແກ້ບັນຫາໄດ້ໃນເມື່ອມັນມາເຖິງຢ່າງຫລີກບໍ່ໄດ້.

ບົດຮຽນອັນລໍ້າຄ່າທີ່ໄດ້ຮຽນຈາກຫລາຍໆປີທີ່ເຮັດວຽກໃນສູນກາງຄື ຄົນເຮົາຕ້ອງເຮັດໃຫ້ຜູ້ອື່ນນັບຖືກ່ອນຈະເປັນຜູ້ນຳໃນກຸ່ມໄດ້. ການນຳພາບໍ່ແມ່ນໜ້າທີ່ຕ້ອງບັງຄັບເອົາ, ໃຫ້ປ່ອນບັດເອົາ, ຫລືວາງມືໃສ່. ຜູ້ນຳຕ້ອງເຮັດໃຫ້ຜູ້ອື່ນເຊື່ອຖື ໃນເມື່ອຮັບໃຊ້ໃນກຸ່ມນັ້ນ. ເຊັ່ນດຽວກັນກັບການເປັນພະຍານ ຜູ້ທີ່ເຊື່ອຕ້ອງເຮັດໃຫ້ຄົນນັບຖືກ່ອນເວົ້າຄຳພະຍານຂອງຕົນເອງຕໍ່ໂລກ. ວິທີທີ່ດີທີ່ສຸດທີ່ຈະເປັນພະຍານໃຫ້ແກ່ໂລກທີ່ແຂງກະດ້າງ ຄືໃຫ້ພວກເຮົາມີຊີວິດຢູ່ເປັນຢ່າງດີໃນອົງພຣະຜູ້ເປັນເຈົ້າ. ພຣະເຢຊູ ໄດ້ເປັນພະຍານຕໍ່ຝູງຊົນຕາມສະພາບທີ່ເຂົາຢູ່, ພຣະອົງຊົງຮັກພວກ ເຂົາ, ແລະໃນທີ່ສຸດພຣະອົງກໍໄດ້ປະທານຊີວິດຂອງພຣະອົງໃຫ້ແກ່ພວກເຂົາ.

**ຄຳຖາມ:**

1. ພຣະຄັມພີໄດ້ເວົ້າເຖິງຮູບພາບຂອງ "ຄວາມມືດ" ແລະ ແສງສະວ່າງ" ໃນເມື່ອໄດ້ຍິນສິ່ງນີ້ແລ້ວທ່ານຄິດເຫັນຮູບພາບອັນໃດເຂົ້າມາໃນສມອງ?

2. ເຮັດແນວໃດຄຣິສຕຽນຈະດຳລົງຊີວິດດີ ແລະມີການຮັບໃຊ້ໄດ້ເພື່ອຈະບໍ່ເຮັດໃຫ້ຄວາມຈິງຂອງຂ່າວປະເສີດ ທີ່

ອອກມາຈາກພຣະຄຸນຂອງພຣະເຈົ້ານັ້ນໝົດຣາຄາໄປ?

3. ເຮັດແນວໃດຄຣິສຕຽນຈະໄດ້ຮັບຜົນສຳເຣັດທີ່ພຣະຄັມພີໄດ້ທ້າທາຍວ່າ, "ຢ່າຮ້າຍຢູ່ຈົນເຖິງຕາເວັນຕົກ" (ເອຟຊ. 4:26)

4. ໃນວິທີທາງໃດທີ່ສະມາຊິກໃນຫ້ອງຮຽນຂອງທ່ານຄວນຈະຊ່ວຍກັນເຮັດໃຫ້ໄດ້ບັນລຸຜົນໃນຄວາມຈະເຣີນໃຫຍ່ຂຶ້ນໃນຊີວິດໃໝ່ທີ່ພຣະຄັມພີໄດ້ສອນນັ້ນ?

*ດຣ. ບຸນ ວົງສຸຣິດທ໌*

# ບົດຮຽນທີ 7
# ເປັນຄຣິສຕຽນທີ່ມີຄວາມສັມພັນອັນດີໃນຄອບຄົວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເອເຟໂຊ 5:21-6:9

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ 5:21-6:9

**ຈຸດສຳຄັນຂອງບົດຮຽນນີ້:** ຄວາມສຳພັນໃນບ້ານເປັນຄຳສັ່ງເດັດຂາດເພາະຄວາມຢຳເກງອົງພຣະຄຣິດ.

**ຄຳຖາມເພື່ອການຄົ້ນຄວ້າ:** ຄວາມເຊື່ອຂອງຄຣິສຕຽນໄດ້ເປັນຜົນຕໍ່ຄວາມສຳພັນໃນບ້ານ ຫລືບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະບອກເຖິງຄວາມແຕກຕ່າງທີ່ເປັນຜົນດີໄດ້ເກີດຂຶ້ນໃນຄອບ ຄົວ ຖ້າຂ້າພະເຈົ້າໄດ້ປະຕິດບັດຕາມຄຳສັ່ງຂອງພຣະຄຣິດ ເພາະຄວາມຢຳເກງຕໍ່ພຣະອົງ.

## ບົດນຳ

ຕາມທັມມະຊາດແລ້ວຄວາມສັມພັນໃນຄອບຄົວນັ້ນເລິກທາງດ້ານວິນຍານ, ແລະໃນພຣະຄັມພີຕອນນີ້ໄດ້ເຕືອນພວກເຮົາໃຫ້ເຫັນຄຸນຄ່າເບື້ອງຕົ້ນຂອງຄວາມຮັກແລະຄວາມນັບຖື ທີ່ອົງພຣະຄຣິດໄດ້ສິດສອນໃນຄອບຄົວ.

ການທີ່ຄອບຄົວເຂົ້າມາພົບກັນນັ້ນເປັນໂອກາດພິເສດດີເພື່ອສລອງຄວາມຍິນດີ. ໃນເມື່ອເຫັນສິ່ງນີ້ໄດ້ເກີດຂຶ້ນຖ້າມກາງພວກເຮົາ ພວກເຮົາກໍມີຄວາມຊື່ນຊົມຍິນດີຫລາຍທີ່ສຸດ. ໃນເມື່ອໄດ້ຍິນສຽງຫົວ, ສຽງຄົນເວົ້າເຖິງສິ່ງດີທີ່ໄດ້ເກີດ ຂຶ້ນນຳ ພວກເຮົາໃນອາດີດ, ເຫັນພວກເຮົາມີຄວາມຮັກແພງກັນ ສິ່ງນັ້ນເປັນສິ່ງປະເສີດຍິ່ງ. ເຖິງແມ່ນໃນເວລາທຸກລຳບາກ ຖ້າເມື່ອເຫັນພີ່ນ້ອງໃນຄອບຄົວມາເຕົ້າໂຮມກັນ ພວກເຮົາກໍມີກຳລັງໃຈຂຶ້ນທີ່ຈະຕໍ່ສູ້ກັບບັນຫາ ນັ້ນໄດ້ດີແລະເປັນພະຍານດີເໝືອນກັນ.

ຄວາມສັມພັນອັນດີໃນຄອບຄົວນັ້ນມາຈາກໃສ? ຫລາຍເທື່ອພວກເຮົາໄດ້ຍິນເຖິງຄຸນຄ່າຂອງຄອບຄົວຈາກນັກການເມືອງ ພວກເຮົາໄດ້ເຫັນວ່າຄອບຄົວນັ້ນມີຄວາມສັມພັນດີບໍ່ແມ່ນມາຈາກການເຮຣາມ່ວນຊື່ນ ເທົ່ານັ້ນ. ພຣະຄັມພີຕອນຕໍ່ໄປນີ້ໄດ້ສອນໃຫ້ພວກເຮົາໃຫ້ເຫັນວ່າອັນໃດເປັນພື້ນຖານອັນດີຂອງຄອບຄົວຄຣິສຕຽນ. ຖ້າຈະເວົ້າໄປແລ້ວກໍແມ່ນພຣະວິນຍານຂອງອົງພຣະຄຣິດທີ່ເຮັດໃຫ້ທຸກາງພາກສ່ວນໃນຄອບຄົວມີພະລັງຂຶ້ນ.

**ເບິ່ງຄອບຄົວໃນສັຕະວັດທີນຶ່ງ.**

ຜູ້ຂຽນໄດ້ສອນເຖິງພຣະຄຳຕອນນີ້ວ່າ ຄອບຄົວໃນສັຕະວັດທີນຶ່ງນັ້ນເປັນໄປຢ່າງໃດ ເມື່ອແປພຣະຄັມພີຈຳເປັນຕ້ອງເຂົ້າໃຈເຖິງປະຫວັດເບື້ອງຫລັງຂອງພຣະຄັມພີກ່ອນ ຈຶ່ງຈະສາມາດຕີຄວາມໝາຍໃຫ້ຖືກຕ້ອງ.

ຄຣິສຕຽນໃໝ່ຜູ້ອາສັຍຢູ່ທະວີບອາຊີນ້ອຍ ພວກເຂົາໄດ້ມີຊີວິດຢູ່ຮ່ວມກັນໂດຍຖືວ່າຄອບຄົວມີຄວາມສັມພັນ. ພວກນັກປາດແລະຄຣູສອນໄດ້ເວົ້າເຖິງຄຸນຄ່າອັນສູງຂອງຄອບຄົວ. ຕາມທຳນຽມນັ້ນ ກົດໝາຍໄດ້ມອບໜ້າທີ່ໃຫ້ຜູ້ເປັນສາມີ ເປັນຫົວໜ້າຫລືຜູ້ນຳໃນຄອບຄົວນັ້ນມີສິດເຕັມຕົວ. ດັ່ງນັ້ນ, ຈຶ່ງໄດ້ແນະນຳໃຫ້ຄຣິສຕຽນເຂົ້າໃຈເຖິງຄວາມສຳຄັນທີ່ອົງພຣະຄຣິດໄດ້ສອນທີ່ດີງກັບຄອບຄົວໃນສັຕະວັດທີນຶ່ງ.

ພວກທີ່ບໍ່ເປັນຄຣິສຕຽນໃນເວລານັ້ນເຫັນວ່າຄຣິສຕຽນເປັນສັດຕຣູຕໍ່ຄວາມສງົບສຸກຂອງສັງຄົມ. ອາຈານໂປໂລໄດ້ສອນວ່າ ຄຣິສຕຽນກໍມີພາກສ່ວນເຮັດໃຫ້ສັງຄົມ ບ້ານເມືອງຈະເຣີນຂຶ້ນ, ມີຄວາມສງົບສຸກ ແລະເປັນຄອບຄົວທີ່ມີລະບຽບດີຕາມທຳນຽມ.

ພື້ນຖານຂອງພຣະຄຳຕອນນີ້ ອາຈານໂປໂລໄດ້ສອນຄຣິສຕຽນໃນເວລານັ້ນວ່າຜູ້ເປັນຂ້າທາດກໍໃຫ້ເຊື່ອຟັງຜູ້ເປັນເຈົ້ານາຍຂອງຕົນເອງ ແລະຜູ້ເປັນເຈົ້ານາຍຄວນຈະປະຕິບັດຢ່າງໃດຕໍ່ຜູ້ເປັນຂ້າທາດ (ເອເຟໂຊ 6:5-9). ໃນເວລານັ້ນ ການທີ່ມີຂ້າທາດນັ້ນເປັນຂອງທັມະດາ, ພວກເຮົາໄດ້ຮຽນຮູ້ວ່າການມີຂ້າທາດນັ້ນເປັນການໂຫດຮ້າຍ. ຄຣິສຕຽນບໍ່ຄວນເອົາສິ່ງນີ້ມາໃຊ້ໃນທຸກວັນນີ້ ເຖິງແມ່ນວ່າອາຈານໂປໂລບໍ່ໄດ້ຫ້າມໃນເຣື່ອງນີ້ກໍຕາມ. ໃນທຳນອງດຽວກັນໃນຫລາຍໆຄອບຄົວໃນທຸກມື້ນີ້ ບໍ່ແມ່ນທຸກໆຄອບຄົວມີພໍ່ ຫລືແມ່ ຢູ່ຮ່ວມກັນ. ບໍ່ແມ່ນທຸກຄົນຄູ່ຍິງຊາຍຢູ່ຮ່ວມກັນເປັນຜົວເມັຽອັນຖືກຕ້ອງ ແລະບໍ່ແມ່ນທຸກໆຄູ່ຜົວເມັຽມີລູກເຕົ້າໄດ້. ຕ້ອງລະວັງໃນການຕີຄວາມໝາຍຂໍ້ນີ້ ແລະພິຈາຣະນາໃຫ້ດີກ່ອນຈະເອົາພຣະຄຳຂໍ້ນີ້ມາປະກອບໃຊ້ໃນທຳນຽມຕ່າງໆຂອງຄົນເຮົາ.

ຫລັກການທີ່ໄດ້ກ່າວໃນຂໍ້ນີ້ເປັນສິ່ງສຳຄັນຕໍ່ສັງຄົມ ເພາະຄວາມສັມພັນທີ່ດີ ແລະບໍຣິສຸດເຮັດໃຫ້ບ້ານເມືອງມີສັນຕິສຸກ. ເປັນຄວາມຈິງ ພຣະຄັມຕອນນີ້ ໄດ້ເວົ້າເຖິງຄວາມສັມພັນທີ່ພວກເຮົາຄວນເອົາມາປະກອບໃຊ້. ພຣະຄັມຕອນນີ້ໄດ້ສືບຕໍ່ມາຈາກບົດທີ 5 ທີ່ເວົ້າເຖິງການປະຕິດບັດໃນຄຣິສຕະຈັກ. ໃນຄຣິສຕະຈັກຄວນເປັນບ່ອນທີ່ຄົນທັງຫລາຍໄດ້ເຫັນອົງພຣະຄຣິດ, ເຮັດໃຫ້ຊີວິດດີຂຶ້ນແລະສ່ອງແສງສະວ່າງອັນດີຕໍ່ຊີວິດຕາມທີ່ພຣະເຈົ້າມີພຣະປະສົງໃຫ້ເຮັດ.

## 1. <u>ພື້ນຖານຄວາມສັມພັນຂອງຄຣິສະຕຽນ</u>: (ເອເຟໂຊ 5:21)

ຂໍ້ນີ້ໄດ້ເປັນຂົວຕິດຕໍ່ທີ່ເວົ້າເຖິງຊີວິດຄຣິສຕຽນຜູ້ມີຄວາມເຊື່ອໃນໝູ່ບ້ານ ແລະຄວາມສັມພັນໃນຄອບຄົວໃຫ້ເສີມເຂົ້າກັນ. ການທີ່ມີຊີວິດດີ, ຢຳເກງໃນບ່ອນນະມັສການ ເປັນການສະແດງເຖິງການຂອບພຣະຄຸນທີ່ພຣະເຈົ້າປະທານຄຸນສົມບັດອັນດີທີ່ໄດ້ກ່າວໃນບົດທີ 5:1-12. ຂໍ້ 21 ໄດ້ປູພື້ນຖານໃນຊີວິດຂອງຜູ້ທີ່ເຊື່ອໃຫ້ *"ຍອມຟັງຊຶ່ງກັນແລະກັນເນື່ອງດ້ວຍຄວາມຢຳເກງພຣະຄຣິດ."* ຄຳສອນນີ້ບໍ່ແມ່ນພຽງແຕ່ຄົນຈຳນວນໃດຈຳນວນນຶ່ງ ແຕ່ແມ່ນທຸກໆຄົນທີ່ເຂົ້າມາຮັບເອົາອົງພຣະຄຣິດ ແລະເປັນສະມາຊິກຂອງຄຣິສຕະຈັກ ແລະຜູ້ມີຄວາມເຊື່ອນຳກັນ.

ການທີ່ມີຈິດໃຈຖ່ອມຕົວເພື່ອໃຫ້ມີຄວາມສັມພັນອັນດີໃນຄອບຄົວນັ້ນ ແມ່ນສິ່ງທີ່ອາຈານໂປໂລໄດ້ຂຽນຂຶ້ນມາເພື່ອເຕືອນແລະໃຫ້ຄຳແນະນຳໃນພຣະທັມໂຣມ 12:3 ເຣື່ອງການສົ່ງເສີມຮ່າງກາຍຂອງພຣະຄຣິດໃຫ້ຈະເຣີນຂຶ້ນ. *"ເຮົາບອກພວກທ່ານທຸກໆຄົນວ່າຢ່າຄິດຖືຕົວເກີນທີ່ຕົນເປັນຢູ່"* ການຖ່ອມໃຈນັ້ນເປັນສິ່ງຜູ້ທີ່ເຊື່ອຕ້ອງມີໃນຊີວິດເພື່ອຈະໃຫ້ກຽດແກ່ຄົນອື່ນໄດ້. ການອວດຕົວແລະບໍ່ເຫັນໃຈຄົນອື່ນເປັນສິ່ງທີ່ບໍ່ດີ ທີ່ພຣະເຈົ້າບໍ່ຊົງພໍພຣະທັຍ.

<u>ໝາຍເຫດ</u>: ອາຈານໂປໂລ ຮ້ອງຂໍໃຫ້ຄົນໃນເມືອງເອເຟໂຊຍອມຕໍ່ກັນແລະກັນ *"ເພາະເປັນການຢຳເກງອົງພຣະຜູ້ເປັນເຈົ້າ."* ເພື່ອຈະເຂົ້າໃຈອາຈານໂປໂລກ່ຽວກັບຄວາມສັມພັນໃນຄອບຄົວນັ້ນຕ້ອງເບິ່ງອົງພຣະຄຣິດ ແລະຄຣິສຕະຈັກ. ຢ່າພາກັນຄິດວ່າການທີ່ອົງພຣະເຢຊູຊົງເປັນສີສະຂອງຄຣິສະຈັກນັ້ນ ພຣະອົງຊົງໃຊ້ອຳນາດເກີນຂອບເຂດ. ການທີ່ຍອມຮັບເອົາອົງພຣະຄຣິດເປັນອົງພຣະຜູ້ເປັນເຈົ້າ ຄືການເຂົ້າຮ່ວມຄວາມສັມພັນກັບພຣະອົງດ້ວຍການຂອບພຣະຄຸນ ແລະສົມຄວນທີ່ມີຄວາມຍິນດີຊົມຊື່ນ. ຄວາມສັມພັນນີ້ໄດ້ສ້າງໃຫ້ຜູ້ທີ່ເຊື່ອຈະເຣີນຂຶ້ນ ບໍ່ແມ່ນປມາດຄົນອື່ນ.

ຄຣິສຕຽນຍອມຟັງຊຶ່ງກັນແລະກັນຍ້ອນມີຄວາມຢຳເກງອົງພຣະຄຣິດນັ້ນເປັນຂັ້ນຕົ້ນຂອງຊີວິດໃນການສ້າງຄອບຄົວ. ການທີ່ເຂົ້າໃຈຜິດເຖິງຄວາມຮັກຂອງອົງພຣະຄຣິດແລະການໄຖ່ຂອງພຣະອົງ ອາດເປັນເຫດໃຫ້ເຮົາມີນິສັຍຜິດທີ່ບໍ່ຄວນມີຂຶ້ນໃນຄອບຄົວຂອງຊາວຄຣິສຕຽນ.

## 2. <u>ສາມີພັຣຍາ</u>: (ເອເຟໂຊ 5:21-33)

ໃນບໍ່ນານມານີ້ມີການຍົກເອົາເຣື່ອງຄວາມສັມພັນຂອງຄົນທີ່ເຊື່ອໃນພຣະເຈົ້າມາເວົ້າ, ພວກເຂົາເຈົ້າໄດ້ສົນທະນາວ່າໃນຄອບຄົວແມ່ນໃຜເປັນຜູ້ນຳ. ຍັງມີອີກກຸ່ມນຶ່ງໄດ້ເວົ້າເຖິງພຣະຄັມພີຕອນນີ້ໃນປຶ້ມເອເຟໂຊ ພວກເຂົາພາກັນເວົ້າວ່າ ຜູ້ເປັນຜົວມີສິດເຕັມຕົວໃນຄອບຄົວ ຜູ້ເປັນເມັຽເປັນຄົນສນັບສນູນການຕັດສິນໃຈຂອງຜົວ. ຍັງມີອີກພວກນຶ່ງກ່າວ

ວ່າ ຜູ້ເປັນເມັຽກໍມີສິດເທົ່າທຽມກັບຜົວ.  ພວກເຫລົ່ານີ້ໄດ້ອ້າງເຖິງພຣະຄັມພີໃນປື້ມ ຄາລາເຕັຽ 3:28, ທີ່ກ່າວ ວ່າ *"ບໍ່ມີຢິວຫລືພວກຕ່າງຊາດ, ບໍ່ມີຂ້າໃຊ້ ຫລືເຈົ້ານາຍ, ບໍ່ມີຍິງ ບໍ່ມີຊາຍ ເພາະທຸກຄົນເປັນອັນນຶ່ງອັນດຽວກັນໃນອົງພຣະຄຣິດ."* ແນ່ນອນ ພວກເຮົາອາດຈະບໍ່ເຫັນຄໍາຕອບທີ່ແນ່ນອນຈາກພຣະຄໍາຕອນນີ້, ແຕ່ພວກເຮົາອາດເຂົ້າໃຈໄດ້ວ່າຄວາມສັມພັນອັນດີຂອງຜູ້ເປັນຜົວເມັຽນັ້ນຈໍາເປັນຕ້ອງມີການໃຫ້ກຽດກັນ.

ການທີ່ຍອມຕໍ່ກັນຢ່າງເປັນເອກກະສັນນັ້ນ (5:21), ໃຫ້ເບິ່ງຄໍາແນະນໍາຈາກພຣະຄໍາຕອນນີ້ຕໍ່ຄູ່ຜົວເມັຽ. ພວກເຮົາເຂົ້າໃຈວ່າທັງສອງຄົນຊອກສແວງຫາຄໍາແນະນໍາວ່າຄຣິສຕຽນຄວນມີຄວາມສັມພັນອັນໃດເກີດຂຶ້ນ ໃນຊີວິດການເປັນຜົວເມັຽໃນຄອບຄົວ. ຄໍາແນະນໍາຈາກພຣະຄັມພີໄດ້ກ່າວເຖິງສອງຄົນໄດ້ຖວາຍຊີວິດຕໍ່ອົງພຣະຄຣິດ ແລະຕໍ່ກັນແລະກັນ. ຄວາມສັມພັນຂອງຜົວເມັຽໃນຄຣິສຕະຈັກສາມາດເປັນຄໍາພະຍານອັນດີເພື່ອພຣະຄຣິດຜູ້ຊົງເປັນສີສະຂອງຄຣິສຕະຈັກແລະເປັນອົງພຣະຜູ້ເປັນເຈົ້າໃນຊີວິດຂອງພວກເຂົາ.

ຜູ້ເປັນເມັຽໃຫ້ຍອມຟັງຜົວ ເໝືອນດັ່ງຍອມຕໍ່ອົງພຣະຄຣິດ (5:22-24). ການທີ່ຍອມຕໍ່ອົງພຣະຄຣິດ ບໍ່ແມ່ນມີຄວາມຢ້ານ ຫລືພ່າຍແພ້, ແຕ່ເປັນການມີຄວາມຍິນດີທີ່ໄດ້ຮັກພຣະອົງ. ດັ່ງນັ້ນຜູ້ເປັນພັຣຍາໄດ້ຮັກສາມີຜູ້ມີຄວາມສົນໃຈຕໍ່ຄວາມສຸກທຸກຂອງຕົນແລະຍອມຟັງຄໍາແນະນໍາຂອງຜົວ. ພາສາກຣີກທີ່ກ່າວວ່າ <u>ຍອມຟັງ</u> ບໍ່ແມ່ນເວົ້າເຖິງຄວາມຕໍ່າຕ້ອຍຂອງຄວາມເປັນຄົນ ແຕ່ໄດ້ເວົ້າເຖິງຍອມຟັງຜູ້ມີຄ່າແລະສົມຄວນຟັງ.  ເໝືອນພຣະເຈົ້າຊົງຮັກເຮົາຊຶ່ງເປັນຄວາມຮັກທີ່ຄິດເຖິງຄົນອື່ນສເມີ.

ໃຫ້ຜູ້ເປັນສາມີຮັກຜູ້ເປັນພັຣຍາເໝືອນມີຄວາມຮັກຕໍ່ອົງພຣະເຢຊູ ບໍ່ແມ່ນໃຊ້ອໍານາດບັງຄັບຜູ້ເປັນເມັຽ ອີງຕາມພຣະຄັມພີ (ອຟຊ 5:25-30). ເຫັນວ່າຂໍ້ນີ້ເປັນຂໍ້ສໍາຄັນຕໍ່ຄຣິສຕຽນທີ່ບອກສອນກັນໃນສັຕະວັດທີນຶ່ງ, ຕາມທໍານຽມພວກເຂົານັ້ນ ການແຕ່ງງານບໍ່ຂຶ້ນຢູ່ກັບຄວາມຮັກ. ຜູ້ຊາຍເອົາຜູ້ຍິງມາເປັນເມັຽເພາະຢາກໄດ້ລູກສືບເຊື້ອສາຍ ແຕ່ຊີວິດແຕ່ງງານຂອງຄຣິສຕຽນຕ້ອງຂຶ້ນຢູ່ກັບຄວາມຮັກ ຄວາມສັມພັນທີ່ດີ  ບອກສອນໃຫ້ຜູ້ເປັນຜົວທີ່ມີທໍານຽມແຕກຕ່າງກັບຄໍາສອນຈາກພຣະຄຣິດ. ຕົວຢ່າງທີ່ດີເຣື່ອງຄວາມຮັກນັ້ນກໍເຫັນໄດ້ຈາກອົງພຣະເຢຊູຜູ້ "ຮັກຄຣິສຕະຈັກແລະຍອມຖວາຍຊີວິດເພື່ອຄຣິສຕະຈັກນັ້ນ." (5:25).

ຕາມບ້ານນ້ອຍເມືອງໃຫຍ່ ພວກທີ່ຖືກທໍາຮ້າຍຮ່າງກາຍໄດ້ອອກຈາກບ້ານຂອງຕົນເອງໄປອາສັຍຕາມສະຖານທີ່ຢູ່ຊົ່ວຄາວເພື່ອຫລີກຈາກອັນຕະລາຍຢ່າງນີ້.  ສະຖານທີ່ດັ່ງກ່າວນີ້ເປັນບ່ອນລີ້ພັຍຂອງພວກຜົວເມັຽທີ່ທໍາຮ້າຍຮ່າງກາຍກັນ. ໃນເມື່ອໄດ້ເຫັນຜູ້ຍິງຖືກຜົວຕີຈົນຊໍ້າກໍ່າໃນຫ້ອງສຸກເສີນຕາມໂຮງພະຍາບານ ແລະຕາມສະຖານທີ່ພັກຊົ່ວຄາວນັ້ນ ເປັນສິ່ງເຕືອນໃຫ້ຮູ້ວ່າຄວາມເຈັບປວດໄດ້ເກີດຂຶ້ນ ກໍເພາະບໍ່ໄດ້ເອົາຫລັກການຂອງຄຣິສຕຽນໄປໃຊ້ໃນການເປັນຜົວເມັຽກັນ.

ຂໍ້ 28 ໄດ້ຮ້ອງຂໍໃຫ້ຜູ້ເປັນຜົວ "ສາມີຈົ່ງຮັກພັຣຍາຂອງຕົນເໝືອນກັບຮັກຮ່າງກາຍຂອງຕົນເອງ." ໃນສມັຍກຣີກມີບາງຄົນໄດ້ຖືວ່າຮ່າງກາຍມີບາບ ແລະຄວາມຕ້ອງການຂອງຮ່າງກາຍຈໍາເປັນຕ້ອງລະງັບໄວ້. ສໍາລັບອາຈານໂປໂລ ຄວາມຄິດຢ່າງນີ້ນັ້ນບໍ່ຖືກ ເພາະເພິ່ນໄດ້ເວົ້າເຖິງຮ່າງກາຍຂອງຄົນເປັນພາກສ່ວນຂອງອົງພຣະຄຣິດ, ເພິ່ນຍັງໄດ້ຍົກຄວາມສັມພັນຂອງຄົນໄວ້ສູງຕໍ່ຄຣິສຕະຈັກແລະຕໍ່ການແຕ່ງງານ. ຊີວິດຄຣິສຕຽນຄວນຢູ່ໃນໂລກນີ້ ເພື່ອເປັນແບບຢ່າງ.

ຄູ່ແຕ່ງງານຕ້ອງພາກັນຕັດສິນໃຈວ່າຈະເອົາຕົວຢ່າງອັນໃດມາໃຊ້ ເພື່ອຈະໃຫ້ກຽດຕໍ່ຄວາມສໍາພັນໃນຊີວິດແຕ່ງງານ. ອັນໃດທີ່ພວກເຂົາຈະພາກັນເອົາໃຊ້ໃນຊີວິດແຕ່ງງານ ພວກເຂົາຕ້ອງເຂົ້າໃຈແນ່ນອນວ່າມັນຕ້ອງເປັນສິ່ງດີເພື່ອຈະໄດ້ ເຫັນຄວາມຮັກຂອງພຣະຄຣິດຕໍ່ຄຣິສະຈັກໃນນັ້ນ.  ຖ້າມີຄວາມຮັກຢ່າງນັ້ນແລ້ວ ບໍ່ອາດມີການທໍາຮ້າຍຮ່າງກາຍເກີດຂຶ້ນ,  ມີແຕ່ຄວາມຮັກ ຄວາມສັມພັນອັນດີ ແລະໃຫ້ກຽດກັນແລະກັນເກີດຂຶ້ນໃນເມື່ອຄຣິສຕຽນສອງຄົນໄດ້ເອົາແບບ ຢ່າງຂອງພຣະຄຣິດມາໃຊ້ໃນຊີວິດ.

ເທົ່າທີ່ໄດ້ຮັບໃຊ້ເປັນເວລາຫລາຍປີ, ຄວາມຊົງຈໍາຂອງຂ້າພະເຈົ້າໄດ້ກັບໄປຫາຄູ່ແຕ່ງງານຫລາຍ ໆຄູ່. ໄດ້ເຫັນພວກເຂົາມີບັນຫາເພາະການສູນເສັຽລູກນ້ອຍ ໄດ້ຍົກຍ້າຍ ມີພະຍາດ ແລະຄວາມຜິດຫວັງ, ແຕ່ພວກເຂົາກໍມີກໍາລັງໃຈ

ຕໍ່ສູ້ກັບບັນຫາໄດ້ເພາະພວກເຂົາໄດ້ແບ່ງປັນປະສົບປະການໃນຊີວິດ. ຄວາມສຳພັນຂອງພວກເຂົາໄດ້ເຂັ້ມແຂງຂຶ້ນ ຄວາມຮັກກໍທະວີຄູນຂຶ້ນ ເພາະພວກເຂົາໄດ້ແບ່ງປັນສິ່ງທີ່ດີຕໍ່ກັນດ້ວຍຄວາມອົດທົນ.

**3. <u>ເດັກໃນເຮືອນຂອງຄຣິສຕຽນ</u>:** (ເອເຟໂຊ 6:1-4)

ເປັນຄຳສັ່ງໃຫ້ລູກຟັງຄວາມຜູ້ເປັນພໍ່ແມ່ນັ້ນເປັນຫລັກສິດທິໃນພຣະຄັມພີເດີມ, ເປັນຄຳສັ່ງທຳອິດໃນພຣະບັນຍັດສິບປະການ (ອົບພະຍົບ 20:12, ພຣະບັດຍັດທີສອງ 5:16). ເອເຟໂຊ 6:1 ໄດ້ກ່າວວ່າ ການເຊື່ອຟັງອັນນີ້ແມ່ນ " ໃຊ້ຕໍ່ອົງ ພຣະຜູ້ເປັນເຈົ້າ." ລູກບໍ່ໄດ້ຟັງຄວາມຜູ້ເປັນພໍ່ແມ່ເພື່ອຈະໃຫ້ພວກເຂົາດີໃຈນຳ ຫລືຖືກກັນດີເທົ່ານັ້ນ. ແຕ່ການເຊື່ອຟັງ ນີ້ແມ່ນໜ້າທີ່ຮັບຜິດຊອບຕໍ່ພຣະເຈົ້າຕ່າງຫາກ.

ລູກຕ້ອງເຊື່ອຟັງຜູ້ເປັນພໍ່ແມ່ ບໍ່ແມ່ນຢາກໃຫ້ພໍ່ແມ່ສະບາຍ, ແຕ່ເປັນການສ້າງໃຫ້ຊີວິດຜູ້ຍັງອ່ອນໃນຄອບຄົວຮຽນຮູ້ແລະປະສົບການກັບຄວາມຮັກ ແລະເຫັນຕົວຢ່າງຂອງຜູ້ເປັນພໍ່ແມ່.

ພໍ່ໄດ້ມີສ່ວນພິເສດເພາະພຣະຄັມພີໄດ້ເວົ້າວ່າ ພໍ່ເປັນຫົວໜ້າຂອງຄອບຄົວ. ຄືຄວາມສຳພັນຂອງຜົວເມັຽ, ຜູ້ເປັນພໍ່ບໍ່ແມ່ນເປັນຜູ້ມີສິດຫລືອຳນາດເຫນືອ ແຕ່ເພື່ອໃຫ້ຜູ້ເປັນພໍ່ສະແດງຄວາມຮັກຢ່າງພຣະຄຣິດໃນຄອບຄົວ. ພໍ່ມີໂອກາດທີ່ຈະປະໃຫ້ລູກຜູ້ເກີດມາໃໝ່ໆຕາຍໄດ້, ແລະອະນາຄົດຂອງເດັກນັ້ນກໍຂຶ້ນຢູ່ໃນກຳມືຂອງຜູ້ເປັນພໍ່ຄືກັນ.

ຄຳເຕືອນ. ຜູ້ເປັນພໍ່ຕ້ອງລະວັງບໍ່ໃຫ້ໃຊ້ກຳລັງຕໍ່ລູກຂອງຕົນຮ້າຍແຮງເກີນໄປ. ແນ່ນອນ ອາຈານໂປໂລ ໄດ້ຮູ້ໄດ້ເຫັນມາຫລາຍແລ້ວເຣື່ອງພໍ່ທີ່ປະຕິບັດບໍ່ດີຕໍ່ລູກ ຄືເຮັດໃຫ້ເດັກນ້ອຍຢ້ານ ຈົນພວກເຂົາບໍ່ສາມາດມີຄວາມເຊື່ອໃນອົງພຣະຄຣິດເປັນພຣະຜູ້ຊ່ວຍ ຜູ້ຊົງຮັກພວກເຂົາ.

## ຄວາມໝາຍແລະການນຳເອົາມາໃຊ້

ຄຸນນະພາບຄວາມຮັກຂອງຄອບຄົວຄຣິສຕຽນເປັນພື້ນຖານໃນການສ້າງໃຫ້ມີຄວາມສຳພັນອັນດີ. ແນ່ນນອນຄອບຄົວຄຣິສຕຽນຕ້ອງປະກອບດ້ວຍຄວາມຮັກແລະພຣະຄຸນ ເພື່ອຄົນໃນຄອບຄົວຈະມີໂອກາດກາຍມາເປັນຜູ້ທີ່ມີຄວາມເຊື່ອໃນອົງພຣະຄຣິດ ແລະສາມາດເປັນພະຍານຕໍ່ຄົນອື່ນໄດ້.

ຄອບຄົວທີ່ຢູ່ປະເທດອະເມຣິກາຍອມມີຄວາມຫຍຸ້ງຍາກສັບສົນ. ບໍ່ມີເວລາໃຫ້ກັນ, ເສຖກິດຝືດເຄືອງ, ສັງຄົມບັງຄັບໃຫ້ຄອບຄົວອົດທົນດົນນານ. ໃນຖ້າມກາງຄວາມຫຍຸ້ງຍາກສັບສົນ ພວກເຂົາຕ້ອງການເອົາຄວາມຮັກເປັນຈຸດໃຫຍ່ເພື່ອສ້າງຄວາມສຳພັນອັນດີໃນຄອບຄົວ. ຊີວິດໃນຄອບຄົວເປັນຜົນສະທ້ອນຕໍ່ທຸກໆຄົນໃນສັງຄົມ.

ຄຣິສະຕຽນໄດ້ເລີ້ມຕົ້ນຈາກກຸ່ມຄົນທີ່ມີຄວາມເຊື່ອ ຜູ້ຍອມຢູ່ໃຕ້ອຳນາດຂອງອົງພຣະຄຣິດ ແລະຜົນສະທ້ອນໄດ້ຂຍາຍໄປຢ່າງກວ້າງໄກ. ຊີວິດທີ່ໄດ້ຖືກຊົງປ່ຽນແປງນັ້ນໄດ້ນຳຄວາມເຊື່ອມາເຖິງບ້ານເຮືອນ ແລະມີຄວາມສຳພັນອັນດີໃນຄອບຄົວ. ຊີວິດທີ່ໄດ້ຮັບການປ່ຽນແປງນັ້ນຍັງໄດ້ຂຍາຍໄປໃນກຸ່ມໝູ່ບ້ານແລະມີຄວາມຮັບຜິດຊອບແລະເຮັດໃຫ້ສັງຄົມດີຂຶ້ນ.

ໃນເມື່ອອ່ານພຣະຄັມພີຕອນນີ້ ເຮັດໃຫ້ພວກເຮົາທຸກຄົນມີຄວາມຮູ້ສຶກເສັຽໃຈ ເພາະຫລາຍໆເທື່ອພວກເຮົາບໍ່ສາມາດເອົາຄຳສອນນີ້ມາໃຊ້ໃນຊີວິດ ໃນເມື່ອເຮົາເຮັດຜິດຕໍ່ ສາມີ ພັນລະຍາ, ຕໍ່ລູກ ຫລື ຕໍ່ພໍ່ແມ່. ບ່ອນໃດມີຄວາມຮັກ ມີຄວາມສຳພັນອັນດີເກີດຂຶ້ນ ທີ່ນັ້ນກໍກາຍເປັນບ່ອນໄດ້ຮັບການຟື້ນແປງ ແລະຄືນດີກັນໃນຄອບຄົວ.

**<u>ຄຳຖາມ:</u>**

1. ໃຫ້ທ່ານທວນຄຶດເຖິງຫລາຍໆຄອບຄົວໃນຄຣິສຕະຈັກຂອງທ່ານ, ມີຄອບຄົວຊະນິດໃດທີ່ທ່ານໄດ້ເຫັນວ່າຍັງໃຊ້ວິທີການຄອບຄົວໃນສັດຕະວັດທີນີ່ງບໍ່?

2. ໃນພຣະຄັມພີຂອງບິດຣຽນວັນນີ້ໄດ້ກ່າວຂ້ອງກັບປະເພດໃດ ຄົນໂສດຫລືຜູ້ແຕ່ງງານແຕ່ບໍ່ມີລູກ? ພວກເຂົາມີຂໍ້

ແກ້ຕົວບໍ່ໃນການສ້າງຄອບຄົວ ຫລືພວກເຂົາໄດ້ເຫັນເດັກນ້ອຍຖືກທຳຮ້າຍຮ່າງກາຍໃນປະເທດອະເມຣິກາແລ້ວບໍ່?

3. ທ່ານຄິດຢ່າງໃດຊີວິດໃນຄອບຄົວນັ້ນສາມາດປ່ຽນແປງຄຸນນະພາບໃນກຸ່ມສັງຄົມບໍ່?

4. ໃຫ້ທ່ານທວນຄິດເຖິງຊີວິດເບື້ອງຫລັງທີ່ເປັນຜົນສະທ້ອນຕໍ່ຄວາມສັມພັນໃນຊີວິດຂອງທ່ານ. ທ່ານຢາກແບ່ງປັນສິ່ງທີ່ເກີດຂຶ້ນນັ້ນກັບສະມາຊິກໃນຫ້ອງຮຽນບໍ່?

*ດຣ. ບຸນ ວົງສຸຣິດທ໌*

# ບົດຮຽນທີ 8
# ເບິ່ງຊີວິດຈາກທັສນະຂອງນິຣັນດອນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຟີລິບປອຍ 1:12-14, 19-26

**ພູມຫລັງຂອງພຣະຄັມພີ:** ຟີລິບປອຍ 1: 1-26

**ຈຸດສຳຄັນຂອງບົດຮຽນນີ້:** ດຳເນີນຊີວິດຈາກທັສນະຂອງນິຣັນດອນ ໝາຍເຖິງການຖວາຍກຽດ ແລະການປະກາດພຣະຄຣິດ, ໄວ້ວາງໃຈໃນພຣະອົງບໍ່ວ່າພວກເຮົາຈະປະເຊີນກັບສະພາບການຢ່າງໃດໃນຊີວິດ.

**ຄຳຖາມເພື່ອການຄົ້ນຄວ້າ:** ແມ່ນຫຍັງແດ່ທີ່ໃຫ້ຄວາມໝາຍ ແລະທັສນະກັບຊີວິດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອອະທິບາຍວ່າ ການເອົາພຣະຄຣິດເປັນຈຸດສຳຄັນໃນຊີວິດຂອງໂປໂລໄດ້ຊ່ວຍຫຍັງລາວແດ່ ແລະເພື່ອຮຽນຮູ້ວ່າສິ່ງເຫລົ່ານັ້ນຈະຊ່ວຍພວກເຮົາໄດ້ຢ່າງໃດ.

## ຄຳນຳ

ຢູ່ໃນຄຸກ, ໂປໂລໄດ້ເວົ້າວ່າ ບໍ່ວ່າຄຳພິພາກສາຂອງສານຈະອອກມາປະເພດໃດ, ຊີວິດຂອງລາວຈະຖວາຍໃຫ້ພຣະຄຣິດ. ໂປໂລດຳເນີນຊີວິດຈາກທັສນະຂອງນິຣັນການ.

ຄວາມຊື່ນຊົມຍິນດີໃນພຣະເຈົ້າເປັນຄຳຂວັນຂອງຈົດໝາຍທີ່ໂປໂລໄດ້ຂຽນເຖິງຊາວຟີລິບປອຍ. ທ່ານໄດ້ຂຽນຈົດໝາຍນີ້ໃນປີ ຄ. ສ 62 ຫລັງຈາກທີ່ທ່ານໄດ້ຮັບລາຍງານຈາກເອປາໂຟດິໂຕ ກ່ຽວກັບຄຣິສຕະຈັກຟີລິບປອຍ (ຟລປ 2:30; 4:18). ໂປໂລຂຽນຈົດໝາຍນີ້ເພື່ອໜູນໃຈພວກຜູ້ເຊື່ອທັງຫລາຍຊຶ່ງສ່ວນຫລາຍແມ່ນຄົນຕ່າງຊາດ. ກຸ່ມຜູ້ເຊື່ອນີ້ໄດ້ຮັບຄວາມລຳບາກເພາະຄວາມເຊື່ອ. ໂປໂລໄດ້ບອກພວກເຂົາເຈົ້າເຖິງສະພາບຂອງທ່ານ ແລະໜູນໃຈໃຫ້ທຸກຄົນໄດ້ເປັນເໝືອນພຣະຄຣິດຫລາຍຂຶ້ນ. ທ່ານໄດ້ແບ່ງປັນວ່າເຄັດລັບຂອງຊີວິດ ຄືການເບິ່ງທຸກຢ່າງຈາກທັສນະຂອງນິຣັນການ, ໂດຍໃຫ້ຄວາມຊື່ນຊົມຍິນດີໃນພຣະເຈົ້າເປັນນິສັຍ.

**1. <u>ການຂຍາຍຕົວຢ່າງອັສຈັນຂອງຂ່າວປະເສີດໃນຂະນະທີ່ໂປໂລຖືກຄຸມຂັງ</u>:** (ຟີລິບປອຍ1:12-14)

ໂປໂລໄດ້ກ່າວໃນຂໍ້ 13 ວ່າ "ເຫດການທີ່ເກີດຂຶ້ນແກ່ເຮົານັ້ນກໍກັບໃຫ້ຂ່າວປະເສີດແຜ່ກວ້າງອອກໄປ, ຈົນປາກົດທົ່ວໄປໃນໝູ່ຜູ້ຄຸມແລະຄົນອື່ນໆ." ໂປໂລເລົ່າວ່າ ຂ່າວປະເສີດໄດ້ແຜ່ກວ້າງອອກໄປຫລັງຈາກທີ່ຄົນທັງຫລາຍໄດ້ຮູ້ເຣື່ອງຂອງທ່ານ (1: 12). ພວກຜູ້ຄຸມ ຫລືທະຫານໂຣມທີ່ຮັກສາໂປໂລໄດ້ຍິນຂ່າວປະເສີດ ເພາະການພົບພໍ້ກັບທ່ານເປັນປະຈຳ (1:13). ນອກນັ້ນ ຄຣິສຕຽນທີ່ມາຢ້ຽມຢາມທ່ານກໍເກີດມີຄວາມໝັ້ນໃຈໃນອົງພຣະຜູ້ເປັນເຈົ້າຫລາຍຂຶ້ນ ແລະໄດ້ພາກັນປະກາດຂ່າວປະເສີດແບບບໍ່ມີຄວາມຢ້ານ (1:14).

ປະວັດເຣື່ອງການເປັນພຍານໃຫ້ກັບພຣະຄຣິດຂອງໂປໂລໄດ້ເກີດມີຂຶ້ນກ່ອນທີ່ທ່ານຈະມາເຖິງກຸງໂຣມ. ໃນພຣະທັມກິຈການ 22 ແລະ 23, ທ່ານໄດ້ມີໂອກາດເປັນພຍານຕໍ່ໜ້າພວກຜູ້ອະວຸໂສ ແລະຕໍ່ໜ້າເຟລິກ; ໂປໂລໄດ້ເວົ້າເຣື່ອງພຣະຄຣິດຕໍ່ໜ້າກະສັດອາຄຣິປາ (ກກ 25--26). ພຣະເຈົ້າໄດ້ເປີດໂອກາດໃຫ້ທ່ານໄດ້ເວົ້າເຖິງການກັບໃຈຂອງຕົນ ແລະເຣື່ອງພຣະຄຣິດໃຫ້ກະສັດ ແລະຄົນທັມມະດາຟັງ. ທ່ານໄດ້ມາເຖິງໂຣມເພາະການຂໍອຸທອນໄປເຖິງກາຍຊາ (ກກ 25: 12). ລະຍະທີ່ເດີນທາງມາເຖິງກຸງໂຣມ, ໂປໂລກໍໄດ້ປະກາດພຣະຄຣິດມາຈົນຕລອດທາງ.

**2. <u>ພຣະນາມຂອງພຣະຄຣິດຖືກຍົກຍ້ອງຈາກສິ່ງທີ່ເກີດຂຶ້ນກັບໂປໂລ</u>:** (ຟີລິບປອຍ1:19-21)

ໂປໂລໄດ້ໃຫ້ຕົວຢ່າງເຣື່ອງການແຜ່ກວ້າງອອກໄປຂອງຂ່າວປະເສີດເຣື່ອງພຣະເຢຊູຄຣິດ ແບບບໍ່ມີໃຜຢຸດໄດ້ໃນ 1: 15-18, *"ຖ້າຢ່າງນັ້ນຈະເປັນປະການໃດ ເຖິງແມ່ນວ່າເຂົາຈະປະກາດພຣະຄຣິດດ້ວຍປະການໃດກໍຕາມ ຈະເປັນດ້ວຍການແກ້ງເຮັດຫລືໃຈຈິງກໍດີ ແຕ່ເຂົາກໍຍັງປະກາດເຣື່ອງພຣະຄຣິດ."* ຄຣູສອນບາງຄົນໄດ້ປະກາດພຣະຄຣິດ "ດ້ວຍການແກ້ງເຮັດ" ແຕ່ບາງຄົນປະກາດ "ດ້ວຍຄວາມຈິງໃຈ." ເຖິງຢ່າງໃດກໍຕາມ, ໂປໂລຊົມຊື່ນຍິນດີເພາະຂ່າວປະເສີດຂອງພຣະຄຣິດໄດ້ຖືກປະກາດອອກໄປ.

ແຕ່ 1: 19-26, ໂປໂລໄດ້ຂຽນດ້ວຍຄວາມໝັ້ນໃຈໃນສອງຢ່າງ ຊຶ່ງເຮັດໃຫ້ລາວມີກຳລັງໃຈ. ຂໍ້ 19, ລາວບອກວ່າ "ການນີ້ຈະເປັນເຫດໃຫ້ເຮົາເຖິງການປົດປ່ອຍ." ໂປໂລໝັ້ນໃຈ, "ເຮົາຮູ້ວ່າ," ວ່າລາວຈະຖືກປົດປ່ອຍຈາກການຄຸມຂັງ. ໃນຂໍ້ 20 ແລະ 21, ໂປໂລໄດ້ສະແດງເຖິງຄວາມບໍ່ໝັ້ນໃຈວ່າການປົດປ່ອຍຂອງຕົນຈະເປັນໃນປະເພດໃດ; ຊຶ່ງໝາຍຄວາມວ່າຈະຖືກປົດປ່ອຍໄປຢູ່ກັບພຣະຄຣິດຊົ່ວນິຣັນ ຫລືປົດປ່ອຍອອກມາຢູ່ໃນໂລກນີ້ເພື່ອການຮັບໃຊ້ພຣະຄຣິດຕໍ່ໄປ. ແຕ່ທ່ານກ່າວວ່າ " ພຣະຄຣິດຈະຊົງຮັບພຣະກຽດໃນຮ່າງກາຍຂອງເຮົາສເມີ ເຖິງແມ່ນເຮົາຈະມີຊີວິດຢູ່ຫລືຕາຍກໍຕາມ" (1:20).

**3. <u>ຄວາມພຍາຍາມຂອງໂປໂລທີ່ຈະໃຫ້ພຣະຄຣິດເປັນຈຸດສຳຄັນ:</u>** (ຟີລິບປອຍ1:21-26)
ບາງຄົນອ່ານພຣະທັມຕອນນີ້ອາດຈະຄິດວ່າ ເປັນຄວາມສັບສົນໃນຈິດໃຈຂອງຄົນທີ່ໄດ້ດຳເນີນຊີວິດມາຢ່າງໂຊກໂຊນ; ແຕ່ສຳລັບໂປໂລ ທ່ານບໍ່ໄດ້ຄິດເຊັ່ນນັ້ນ ເພາະທ່ານໄດ້ກ່າວໄວ້ວ່າ *"ເພາະຖ້າເຮົາມີຊີວິດ ພຣະຄຣິດເປັນຊີວິດນັ້ນ ຖ້າເຮົາຕາຍກໍເປັນປໂຍດແກ່ເຮົາ "*(1:21). ສຳລັບທ່ານໂປໂລແລ້ວ, ຊີວິດຄືການໃຫ້ພຣະຄຣິດເປັນຈຸດສຳຄັນຢູ່ຕລອດເວລາ ແລະຊີວິດຄືການບອກໂລກໃຫ້ຮູ້ເຖິງເຣື່ອງຂອງພຣະອົງ.

ຄົນທັງຫລາຍທີ່ຢູ່ອ້ອມຮອບໂປໂລໃນກຸງໂຣມ ເບິ່ງຊີວິດຢູ່ພຽງການເປັນຢູ່ເທົ່ານັ້ນ. ສຳລັບຄົນທີ່ບໍ່ຮູ້ພຣະເຈົ້າ "ຄວາມຕາຍ" ເປັນການໄດ້ປໂຍດ ເພາະຊີວິດທີ່ທຸກທໍຣະມານໄດ້ສິ້ນສຸດລົງ. ໂປໂລໄດ້ສແດງໃຫ້ເຫັນວ່າທ່ານໄດ້ຢູ່ກັບພຣະຄຣິດທັງໃນຊີວິດນີ້ ແລະຊີວິດຫລັງຈາກຄວາມຕາຍ. ການຕາຍຝ່າຍເນື້ອໜັງ ເປັນທາງນຳໄປສູ່ຊີວິດທີ່ດີກວ່າສຳລັບໂປໂລ ແລະສຳລັບຄຣິສຕຽນທັງຫລາຍ. ທຸກຢ່າງຈະຄົບບໍຣິບູນເພື່ອພວກເຮົາໄດ້ພົບກັບພຣະຄຣິດ.

ໃນຂໍ້ 22-26, ໂປໂລໄດ້ເວົ້າເຖິງຊີວິດຕໍ່ໄປຢູ່ໃນໂລກນີ້ສຳລັບທ່ານ. ໂປໂລສລຸບວ່າ "ຖ້າຈະຍັງມີຊີວິດຢູ່ໃນຮ່າງກາຍນີ້ເຮົາກໍຈະເຮັດງານໃຫ້ເກີດຜົນ." ໂປໂລເວົ້າຕໍ່ໄປວ່າ "ເມື່ອເຮົາແນ່ໃຈຢ່າງນີ້ແລ້ວເຮົາກໍຊາບວ່າ ເຮົາຈະຍັງຢູ່ກັບພວກເຈົ້າທັງຫລັງ" (25). ໂປໂລໝູນໃຈຊາວຟີລິບປອຍວ່າ ພຣະເຈົ້າຈະຊົງໃຫ້ທ່ານຢູ່ຕໍ່ໄປ ເພາະເຂົາຍັງ "ເປັນສິ່ງຈຳເປັນ" ສຳລັບຄຣິສຕຽນທັງຫລາຍໃນສມັຍນັ້ນຢູ່. ໂປໂລໄດ້ລໍຄອຍການພົບພໍ້ກັບຊາວຟີລິບປອຍອີກ ດ້ວຍຄວາມຊົມຊື່ນຍິນດີ "ເພື່ອຄວາມພາກພູມໃຈຂອງເຈົ້າທັງຫລາຍເພາະດ້ວຍເຮົານັ້ນ ຈະທະວີຫລາຍຂຶ້ນໃນພຣະເຢຊູຄຣິດ" (26).

**<u>ຄວາມໝາຍສຳລັບທ່ານ ແລະພາກປະຕິບັດ</u>**
ຊີວິດທີ່ດຳເນີນໄປໃນທັສນະຂອງນິຣັນການ, ເຖິງຈະມີອຸປສັກ, ຈະເບິ່ງຂ້າມສະພາບການໃນປັດຈຸບັນ ເພື່ອຫາໂອກາດໃຫ້ຂ່າວປະເສີດເຣື່ອງພຣະເຢຊູຄຣິດໄດ້ແຜ່ກວ້າງອອກໄປທົ່ວໂລກ. ການມີທັສນະໃນທຳນອງນີ້ຈະຊ່ວຍພວກເຮົາໃຫ້ມີຄວາມສັມພັນອັນເລິກເຊິ່ງກັບພຣະຄຣິດ.

ພວກເຮົາສາມາດເວົ້າເໝືອນດັ່ງໂປໂລທີ່ວ່າ "ເພາະວ່າຖ້າເຮົາມີຊີວິດພຣະຄຣິດເປັນຊີວິດນັ້ນ ຖ້າເຮົາຕາຍກໍເປັນປໂຍດແກ່ເຮົາ" ຫລືບໍ່? ພວກເຮົາພາກັນຈ້ອງເບິ່ງສະພາບການໃນຊີວິດຈົນເກີນໄປບໍ່? ຫລືພວກເຮົາສາມາດເບິ່ງຂ້າມ

ສະພາບການນັ້ນ ແລ້ວປະກາດຂ່າວປະເສີດ? ພວກເຮົາຈະຕ້ອງໃຫ້ພຣະຄຣິດເປັນຈຸດສຳຄັນໃນຊີວິດ ເພື່ອເຮົາຈະໄດ້ດຳເນີນຊີວິດຈາກທັສນະຂອງນິຣັນການ. ທ່ານພ້ອມທີ່ຈະດຳເນີນຊີວິດໂດຍຈະເບິ່ງຂ້າມສະພາບການຂອງທ່ານໃນປັດຈຸບັນແລ້ວຫລືບໍ່?

**<u>ຄຳຖາມ:</u>**

1. ໂປໂລຖືກຄຸກຢູ່ໃສ? ເພາະຫຍັງ?

2. ໂປໂລໄດ້ບອກໃນຂໍ້ 14 ວ່າ ພວກຜູ້ເຊື່ອໄດ້ປະກາດຂ່າວປະເສີດດ້ວຍຄວາມກ້າຫານເພາະສິ່ງທີ່ເກີດຂຶ້ນກັບທ່ານ. ສິ່ງເຫລົ່ານັ້ນເກີດຂຶ້ນໄດ້ແນວໃດ?

3. ຄຳເວົ້າຂອງໂປໂລໃນຂໍ້ 21 ຖືກກັບຕົວທ່ານເອງຫລືບໍ່?

4. ທັສນະຂອງທ່ານກ່ຽວກັບຊີວິດ ແລະຄວາມຕາຍແຕກຕ່າງຈາກທັສນະໃນເຣື່ອງນີ້ຂອງບຸກຄົນທີ່ບໍ່ຮູ້ພຣະຄຣິດຢ່າງໃດແດ່?

5. ທ່ານເຄີຍຮູ້ຜູ້ໃດແດ່ທີ່ຕົກຢູ່ໃນຄວາມລຳບາກ ແຕ່ກໍໄດ້ປະກາດຂ່າວປະເສີດຖ້າມກາງບັນຫາເຫລົ່ານັ້ນ?

<u>ທັສນະກ່ຽວກັບຄວາມຕາຍຂອງ ກຣີກ-ໂຣມັນ</u>

ຄົນໃນສມັຍຂອງໂປໂລມີທັສນະຫລາຍໆຢ່າງກ່ຽວກັບຄວາມຕາຍ ແລະຊີວິດຫລັງຈາກຕາຍ. ນັກປັສຍາຊາວກຣີກຊື່ ປະເລໂຕ (428-348 ກ່ອນ ຄ. ສ) ຂຽນໄວ້ວ່າ ຄວາມຕາຍ "ເປັນສິ່ງທີ່ດີ." ເພາະທ່ານເຂົ້າໃຈວ່າສະພາບຂອງຄວາມຕາຍມີຢູ່ສອງຢ່າງເຊັ່ນ: ຕາຍແລ້ວບໍ່ຮູ້ສຶກຫຍັງ ແລະການຕາຍແມ່ນການຍ້າຍຈາກບ່ອນນຶ່ງໄປອີກບ່ອນນຶ່ງ. ສິ່ງທີ່ໜ້າສົນໃຈກໍຄືທ່ານໄດ້ຂຽນໄວ້ວ່າຖ້າຕາຍໄປແລ້ວ ບໍ່ຮູ້ສຶກຫຍັງເລີຍ ເໝືອນກັບການນອນຫລັບແລະບໍ່ໄດ້ຝັນເຖິງຫຍັງ, ການຕາຍກໍນັບວ່າເປັນເຣື່ອງທີ່ດີ ແລະເປັນການໄດ້ປໂຍດ. ປໂຍດໃນທີ່ນີ້ໝາຍເຖິງການບໍ່ຮູ້ສຶກຫຍັງເລີຍ ເຊັ່ນວ່າ ຕາຍແລ້ວກໍແລ້ວກັນໄປຊື່ໆ.

ປະລູຕາກ (ຄ. ສ 46-120), ນັກປະວັດສາດທີ່ຢູ່ໃນສມັຍຂອງໂປໂລ, ໄດ້ວາດພາບການຕາຍໄວ້ດັ່ງນີ້: ຫລັງຈາກຕາຍ, ວິນຍານ ຊຶ່ງເປັນຢູ່ຊົ່ວນິຣັນດອນ ຖືກປ່ອຍອອກໄປເໝືອນນົກທີ່ຖືກຂັງຢູ່ໃນຄອກແລ້ວຖືກປ່ອຍອອກ. ທ່ານກ່າວວ່າ ວິນຍານທີ່ຖືກຂັງໄວ້ດົນໆໃນຮ່າງກາຍ ແລະໄດ້ຮັບການຝຶກຫັດຈາກກິຈກັມ ແລະນິສັຍຕ່າງໆ ກໍຈະຮີບເອົາຮ່າງກາຍໃໝ່ ແລ້ວກັບມາຫຍຸ້ງກ່ຽວກັບໂລກທີ່ສັບສົນນີ້ອີກ. ສລຸບແລ້ວທັສນະກ່ຽວກັບຄວາມຕາຍໃນທຳນອງນີ້ ກໍບໍ່ໄດ້ຊ່ວຍພວກເຮົາສິ່ງໃດເລີຍ ເພາະການຕາຍທີ່ຄິດວ່າເປັນປໂຍດກໍບໍ່ມີປໂຍດຫຍັງ.

*ດຣ. ສິດນີ ຄາມ*

# ບົດຮຽນທີ 9
# ຕິດຕາມແບບຢ່າງຊີວິດຂອງພຣະຄຣິດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຟີລິບປອຍ 2:1-11

**ພູມຫລັງຂອງພຣະຄັມພີ:** ຟີລິບປອຍ 1:27-2:18

**ຈຸດສຳຄັນຂອງບົດຮຽນນີ້:** ເວລາພວກເຮົາດຳເນີນຊີວິດຕາມການນຳພາຂອງພຣະຄຣິດ, ພວກເຮົາຈະຕິດຕາມແບບຢ່າງການຖ່ອມຕົວຂອງພຣະອົງ.

**ຄຳຖາມເພື່ອການຄົ້ນຄວ້າ:** ເປັນຫຍັງການຖ່ອມຕົວຈຶ່ງເປັນເຣື່ອງຍາກ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອປຽບທຽບຄວາມຖ່ອມຕົວທີ່ເຫັນໃນພຣະຄຣິດ ກັບການປະພຶດຕົວຂອງຄົນທົ່ວໄປ ແລະຕັດສິນໃຈວ່າຂ້ອຍຈະເອົາແບບຢ່າງຂອງພຣະຄຣິດມາປະຕິບັດ.

## ຄຳນຳ

ໂປໂລຊັກຊວນຄຣິສຕຽນທັງຫລາຍໃຫ້ດຳເນີນຊີວິດສົມກັບຂ່າວປະເສີດ. ຊີວິດຄຣິສຕຽນຈະຕ້ອງປະກອບດ້ວຍຄວາມສາມັກຄີ ແລະການຖ່ອມຕົວ. ໂປໂລບອກພວກຜູ້ເຊື່ອໃຫ້ເບິ່ງຕົວຢ່າງການຖ່ອມຕົວຂອງພຣະຄຣິດ. ການຮັບໃຊ້ຊຶ່ງກັນແລະກັນແບບຖ່ອມຕົວ ເປັນເຣື່ອງຍາກສົມຄວນໃນສັງຄົມທີ່ພວກເຮົາຢູ່. ໂປໂລຮູ້ສະພາບດີ ໂດຍສະເພາະໃນສັງຄົມຄົນໂຣມໃນຕອນນັ້ນ ເພາະທ່ານເອງກໍຖືກຈຳຈອງເພາະການປະກາດຂ່າວປະເສີດ (ໂຣມ 1:13).

ໃນຟີລິບປອຍ 1:27-30, ໂປໂລຊັກຊວນຄຣິສຕຽນທັງຫລາຍໃຫ້ "ດຳເນີນຊີວິດໃຫ້ສົມຄວນກັບຂ່າວປະເສີດເຣື່ອງພຣະຄຣິດ. ໃນກຸ່ມຄົນເຊື່ອ, ຄຣິສຕຽນຈະຕ້ອງດຳເນີນຊີວິດທີ່ສະແດງເຖິງຄວາມສາມັກຄີ; ທຸກຄົນຈະຕ້ອງຮັບໃຊ້ຊຶ່ງກັນແລະກັນດ້ວຍຄວາມຖ່ອມຕົວ.

## 1. ໜູນໃຈໃຫ້ສາມັກຄີ: (ຟີລິບປອຍ 2:1-4)

ໂປໂລເລີ້ມຕົ້ນຟີລິບປອຍບົດທີສອງດ້ວຍຄຳວ່າ "ເຫດສັນນັ້ນ" ຊຶ່ງອີງໃສ່ຄວາມສັດຊື່ໃນການຮັບໃຊ້ຂອງທ່ານໂດຍທົ່ວໄປຊຶ່ງເວົ້າກ່ອນແລ້ວໃນບົດທີນຶ່ງ ແລະສະເພາະໃນຂໍ້ 1: 27-30. ໃນ 2:1, ໂປໂລໃຊ້ຄຳວ່າ "ຖ້າ" ຫລາຍເທື່ອ. "ຖ້າ" ໃນ ທີ່ນີ້ມີຄວາມໝາຍຄ້າຍກັບຄຳວ່າ "ເພາະ." ຄຳຊັກຊວນໃນ 2:2 ແລະຕໍ່ໄປແມ່ນອີງໃສ່ສິ່ງທີ່ກ່າວເຖິງໃນຂໍ້ທີນຶ່ງ.

ກຸນແຈສຳລັບຄວາມສາມັກຄີມີຢູ່ສີ່ຢ່າງ: ຜູ້ເຊື່ອຈະຕ້ອງມີຄວາມຄິດດຽວກັນ, ຄວາມຮັກດຽວກັນ, ຄວາມສາມັກຄີໃນດ້ານຈິດວິນຍານ ແລະຄວາມປະສົງ (2:2). ໂປໂລກ່າວວ່າຄວາມຍິນດີຂອງທ່ານຈະຄົບເຕັມ ຖ້າພວກຜູ້ເຊື່ອມີຄວາມເປັນນ້ຳນຶ່ງໃຈດຽວກັນ. ສະນັ້ນຊາວຟີລິບປອຍຈະຕ້ອງຫລີກເວັ້ນເຮັດສິ່ງທີ່ເກີດມາຈາກການຊີງດີ ຫລືຖືດີກັນ; ຜູ້ເຊື່ອທັງຫລາຍບໍ່ຄວນອວດຕົວ ຫລືສແວງຫາກຽດຕິຍົດສຳລັບຕົວເອງ (2:3); ແຕ່ໃຫ້ເຮັດທຸກຢ່າງດ້ວຍການຖ່ອມຕົວ ແລະຈົ່ງເຫັນແກ່ປໂຍດຂອງຄົນອື່ນ (2:4).

## 2. ຕົວຢ່າງຂອງພຣະຄຣິດເຣື່ອງການຖ່ອມໃຈ: (ຟີລິບປອຍ 2:5-8)

ໂປໂລຊັກຊວນຊາວຟີລິບປອຍໃຫ້ມີນ້ຳໃຈເໝືອນພຣະຄຣິດ (2:5); ແລະໃນພຣະທັມຕໍ່ໆໄປທ່ານໄດ້ອະທິບາຍ ນ້ຳໃຈທີ່ມີໃນພຣະເຢຊູຄຣິດ. ນັກສາສນາສາດຫລາຍຄົນສລຸບວ່າ 2:6-11 ແມ່ນບົດເພັງ; ແຕ່ບໍ່ມີໃຜຮູ້ແນ່ນອນວ່າໃຜເປັນຜູ້ຂຽນ; ໂປໂລຂຽນຂຶ້ນເອງ ຫລືວ່າທ່ານໄດ້ເອົາມາຈາກຄົນອື່ນ? ບົດເພັງມາຈາກໃສຄົງບໍ່ສຳຄັນຫລາຍເທົ່າຄຳສອນທີ່

ຊາວຟີລິບປອຍຈະຕ້ອງມີຕລອດເວລາຄື ນ້ຳໃຈເໝືອນຢ່າງທີ່ມີໃນພຣະເຢຊູຄຣິດ.

ພຣະເຢຊູຊົງເປັນພຣະເຈົ້າແລະຊົງມີຖານະເທົ່າທຽມກັບພຣະບິດາ ແຕ່ພຣະອົງບໍ່ໄດ້ "ຍຶດໜວງໄວ້" (2:6). ພຣະເຢຊູຊົງເປັນພຣະເຈົ້າ ແຕ່ພຣະອົງຍອມລົງມາເປັນມະນຸດ ແລະຮັບ "ສະພາບຂ້ອຍຂ້າ" (2:7). ພຣະເຢຊູຊົງເປັນພຣະເຈົ້າ, ພຣະອົງຍອມລົງມາເປັນມະນຸດ, ແລະພຣະອົງຍອມເຊື່ອຟັງ "ຈົນເຖິງຄວາມມໍຣະນາ... ທີ່ໄມ້ກາງແຂນ" (2:8). ພຣະເຢຊູຊົງຍອມຖ່ອມຕົວຈົນເຖິງທີ່ສຸດ; ພຣະອົງເຫັນຄວາມພົ້ນຂອງມະນຸດຊາດສຳຄັນກວ່າຄວາມເຈັບປວດທີ່ພຣະອົງຊົງໄດ້ຮັບເພາະໂທດກັມຂອງຄວາມຜິດບາບ; ໂປໂລໄດ້ປະພຶດຕາມຕົວຢ່າງການຖ່ອມໃຈຂອງພຣະເຢຊູຄຣິດ ເພື່ອເປັນແບບຢ່າງໃຫ້ຄຣິສຕຽນໃນເມືອງຟີລິບປອຍ.

## 3. ພຣະບິດາຊົງຍົກພຣະຄຣິດຂຶ້ນ: (ຟີລິບປອຍ 2:9-11)

ໃນຂໍ້ 9, ໂປໂລປະກາດວ່າ "ເຫດສັນນັ້ນພຣະເຈົ້າຈຶ່ງໄດ້ຊົງຍົກພຣະອົງຂຶ້ນເຖິງທີ່ສຸດ" ເພາະພຣະຄຣິດໄດ້ເຮັດທຸກຢ່າງດ້ວຍຄວາມສມັກໃຈຈົນ "ເຖິງຄວາມມໍຣະນາທີ່ໄມ້ກາງແຂນ." ພຣະເຢຊູຊົງໄດ້ຮັບພຣະນາມ "ຊື່ງຢູ່ເໜືອນາມທັງປວງ." ພຣະເຢຊູຊົງໄດ້ຮັບພຣະກຽດ ແລະຕຳແໜ່ງສູງກວ່າທຸກໆຄົນ.

ເພາະຖານະອັນສູງສົ່ງຂອງພຣະເຢຊູຄຣິດ, "ທຸກຫົວເຂົ່າໃນສວັນ, ເທິງແຜ່ນດິນໂລກ, ແລະໃຕ້ພື້ນດິນກໍດີ ຈະໄດ້ຄຸລົງຂາບ" ພຣະອົງ (2:10). ໃນຂະນະດຽວກັນ, ທຸກຢ່າງທີ່ສາມາດສັຣເສີນ ຈະຕ້ອງຍອມຮັບວ່າ "ພຣະເຢຊູຄຣິດຊົງເປັນອົງພຣະຜູ້ເປັນເຈົ້າ" (2:11). ພຣະເຢຊູໄດ້ຮັບຕຳແໜ່ງທີ່ບໍ່ມີໃຜສາມາດໃຫ້ໄດ້ ນອກຈາກອົງພຣະຜູ້ເປັນເຈົ້າ. ເມື່ອພວກເຮົາສາຣະພາບຮັບພຣະເຢຊູຄຣິດເປັນພຣະເຈົ້າໃນຊີວິດ, ພວກເຮົາກໍໄດ້ຖວາຍພຣະກຽດແກ່ພຣະບິດາເຈົ້າ.

## ຄວາມໝາຍສຳລັບພວກເຮົາ ແລະການປະຕິບັດ

ໃນຟີລິບປອຍ 2: 1-11, ໂປໂລໄດ້ຊັກຊວນພວກຄຣິສຕຽນທີ່ຟີລິບປອຍໃຫ້ສແວງຫາຄວາມເປັນນ້ຳນຶ່ງໃຈດຽວກັນ, ກຸນແຈສຳຄັນຄືການເຫັນຄົນອື່ນດີກວ່າຕົວເອງ ແລະເຫັນວ່າຄວາມຕ້ອງການຂອງຄົນອື່ນສຳຄັນກວ່າຂອງຕົນເອງ.

ຄວາມຕັ້ງໃຈປະເພດນີ້ເປັນສິ່ງຈຳເປັນສຳລັບການຖ່ອມໃຈ. ແບບຢ່າງການຖ່ອມໃຈຂັ້ນສູງສຸດ ແມ່ນການຖ່ອມໃຈຂອງພຣະເຢຊູຄຣິດ. ເພາະພຣະຄຣິດໄດ້ຊົງຖ່ອມຕົວລົງຈົນຍອມຮັບຖານະເປັນມະນຸດ, ເຖິງຂັ້ນຂ້ອຍຂ້າ, ແລະຍອມຮັບຄວາມອັບອາຍ ແລະການຕາຍຢ່າງເຈັບປວດ, ພຣະອົງສາມາດເຂົ້າໃຈຄວາມລຳບາກຂອງພວກເຮົາແຕ່ລະຄົນ. ຖ້າພວກເຮົາເອີ້ນຕົວເອງວ່າຜູ້ຕິດຕາມພຣະເຢຊູຄຣິດ, ພວກເຮົາຄວນຈະເຮັດຕາມແບບຢ່າງຂອງພຣະອົງໂດຍການຍອມເປັນພວກຜູ້ຖ່ອມຕົວ.

ພວກເຮົາບໍ່ໄດ້ຢູ່ໂດດດ່ຽວໃນຄວາມພຍາຍາມທີ່ຈະດຳເນີນຊີວິດແບບຖ່ອມຕົວ. ພວກເຮົາມີແບບຢ່າງຂອງພຣະເຢຊູຄຣິດ ແລະພວກເຮົາມີພຣະວິນຍານບໍຣິສຸດເປັນຜູ້ຊ່ວຍ ແລະເປັນຜູ້ເລົ້າໂລມ. ຊີວິດທີ່ຖ່ອມຕົວລົງ ກໍຄືຊີວິດທີ່ຍອມໃຫ້ອະພັຍ, ຊີວິດທີ່ມີຄວາມຮັກແລະການຄືນດີ, ແລະຊີວິດທີ່ສະແດງຄວາມປະເສີດຂອງພຣະເຢຊູຄຣິດ.

## ຄຳຖາມ:

1. ການຕິດຕາມຜູ້ທີ່ຖືກເຮັດໃຫ້ລະອາຍ ມີຄວາມໝາຍແນວໃດ?

2. ຟີລິບປອຍ 2:8 ຊ່ວຍຄວາມເຂົ້າໃຈ ໂຣມ 1:16 ທີ່ໂປໂລໄດ້ຂຽນໄວ້ວ່າ "ເພາະວ່າເຮົາບໍ່ມີຄວາມລະອາຍໃນຂ່າວປະເສີດ" ໄດ້ແນວໃດແດ່?

3. ທ່ານເຄີຍມີປະສົບການໃນທຳນອງນີ້ຫລືບໍ່? ຫລາຍຄົນໄດ້ມາຮູ້ພຣະຄຣິດເພາະມີບາງຄົນຍອມຖ່ອມຕົວລົງ ແລະ ໄດ້ຕິດຕາມແບບຢ່າງຂອງ ພຣະເຢຊູຄຣິດ ແລະຂອງໂປໂລ.

4. ພວກເຮົາຈະເປັນຜູ້ນຳທີ່ດີໃນຄອບຄົວ ແລະໃນຄຣິສຕະຈັກໂດຍການຍອມຖ່ອມຕົວລົງໄດ້ວິທີໃດ? ການຍອມຖ່ອມຕົວສາມາດເຮັດໃຫ້ຜູ້ນຳທຳງານບໍ່ເກີດຜົນບໍ່?

5. ມີຫຍັງແດ່ 5 ຢ່າງທີ່ພວກເຮົາສາມາດຝຶກຕົວເອງເພື່ອໃຫ້ເປັນຜູ້ຖ່ອມຕົວ ໃນອາທິດຈະມານີ້?

## ຄວາມລະອາຍຂອງໄມ້ກາງແຂນ

ຊາວອາຊີເຣັຽ, ຊາວຟີນີຊຽນ, ແລະຊາວເປີຊຽນ ໃຊ້ການຄຶງເທິງໄມ້ກາງແຂນເພື່ອການລົງໂທດຂ້ອຍຂ້າຜູ້ທີ່ບໍ່ເຊື່ອຟັງ. ໃນສັດຕະວັດທີນຶ່ງ, ຊາວໂຣມໄດ້ໃຊ້ການຄຶງເທິງໄມ້ກາງແຂນສຳລັບໂທດໃຫຍ່ງຂອງພວກຂ້ອຍຂ້າ ແລະພວກຄົນຕ້ອຍຕ່ຳໃນສັງຄົມ ທີ່ເປັນຂະໂມຍ ແລະເປັນຜູ້ກະບົດ.

ຊາວໂຣມມີຄວາມຊຳນານຫລາຍເຣື່ອງການຄຶງຄົນເທິງໄມ້ກາງແຂນ. ພວກເຂົາຈະເອົາຜູ້ກະທຳຜິດແຂວນໄວ້ເພື່ອໃຫ້ຄົນທັງຫລາຍໄດ້ເຫັນ ແລະຈະແກ້ເສື້ອຜ້າອອກໝົດ; ນ້ຳແລະເລືອດຈະໄຫລອອກຈາກເນື້ອກາຍຂອງນັກໂທດ. ຫລັງຈາກນັກໂທດໄດ້ຕາຍແລ້ວ ຄອບຄົວກໍຈະປະຕິເສດຊາກສົບ ເພາະເປັນການອັບອາຍ. ເຈົ້າໜ້າທີ່ຈະນຳເອົາຊາກສົບຂອງຄົນຕາຍໄປຖິ້ມໃສ່ຂຸມລວມໃຫຍ່ ຊຶ່ງມີຊາກສົບຢູ່ກ່ອນແລ້ວ.

ການຄຶງໄວ້ເທິງໄມ້ກາງແຂນສ່ວນຫລາຍແມ່ນໃຊ້ຕົ້ນໄມ້. ໃນສມັຍພຣະສັນຍາເດີມ ຊາກສົບຈະຖືກແຂວນໄວ້ເທິງຕົ້ນໄມ້. ຊາກສົບທີ່ຖືກແຂວນໄວ້ທີ່ເທິງຕົ້ນໄມ້ ຖືວ່າຖືກສາບແຊ່ງ (ບັນຍັດທີສອງ 21:22-23). ໃນສັງຄົມຂອງຊາວຢິວໃນສມັຍນັ້ນ, ການມີສ່ວນພົວພັນກັບຄົນທີ່ຖືກຄຶງທີ່ໄມ້ກາງແຂນ ຖືວ່າເປັນເຣື່ອງທີ່ໜ້າລະອາຍທີ່ສຸດ.

## ການຖ່ອມຕົວ

ການຖ່ອມຕົວແບບບໍ່ຈິງໃຈ ແມ່ນຫວັງຜົນໃນບັ້ນປາຍ. ການຖ່ອມຕົວທີ່ແທ້ຈິງ ແມ່ນປະກອບດ້ວຍຂອງພຣະຣາຊທານຂອງຕົວເອງ ແລະຈຸດປະສົງໃນພຣະກາຍຂອງພຣະຄຣິດ. ການຖ່ອມຕົວທີ່ແທ້ຈິງແມ່ນເຫັນຄົນອື່ນກ່ອນ.

*ດຣ. ສິດນີ ຄານ*

# ບົດຮຽນທີ 10
# ສແວງຫາເປົ້າໝາຍສູງສຸດ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ຟີລິບປອຍ 3:1-14

**ພູມຫລັງຂອງພຣະຄັມພີ:** ຟີລິບປອບ 3:1-4: 1

**ຈຸດສໍາຄັນຂອງບົດຮຽນນີ້:** ຊີວິດຄຣິສຕຽນທີ່ສັດຊື່ແລະຊົມຊື່ນຍິນດີໝາຍເຖິງການສແວງຫາເປົ້າໝາຍທີ່ສູງສຸດ, ເປົ້າໝາຍຢາກຈະຮູ້ພຣະຄຣິດຢ່າງບໍຣິບູນ, ຈົນເຖິງຂັ້ນເປັນເໝືອນພຣະອົງໃນການທຸກທໍຣະມານແລະການຕາຍ.

**ຄໍາຖາມເພື່ອການຄົ້ນຄວ້າ:** ທ່ານມີເປົ້າໝາຍໃນຊີວິດຢ່າງໃດແດ່ ທີ່ທ່ານກໍາລັງສແວງຫາ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອໝັ້ນໃຈວ່າເປົ້າໝາຍໃນຊີວິດຂອງຂ້ອຍແມ່ນການຢາກຮູ້ພຣະຄຣິດຢ່າງບໍຣິບູນ.

## ຄໍານໍາ

ໂປໂລບອກພວກຜູ້ເຊື່ອໃຫ້ລະວັງຄຣູສອນປອມທັງຫລາຍທີ່ເມືອງຟີລິບປອຍ. ພວກຕໍ່ຕ້ານກຸ່ມນີ້ຊື່ງອາດຈະແມ່ນຄົນຢິວທີ່ເປັນຄຣິສຕຽນແລ້ວ ແຕ່ມີຄຸນຄ່າທີ່ກົງກັນຂ້າມກັບຄຸນຄ່າອັນຍິ່ງໃຫຍ່ເຣື່ອງການຮູ້ພຣະຄຣິດຢ່າງບໍຣິບູນ.

ໃນຟີລິບປອຍບົດທີສາມນີ້ ໂປໂລພຍາຍາມວາດພາບການແຂ່ງຂັນກິລາ ເພື່ອໜູນໃຈຜູ້ເຊື່ອທັງຫລາຍໃຫ້ມຸ້ງໜ້າໄປສູ່ຫລັກຊັຍຂອງຊີວິດ. ເໝືອນກັບນັກກິລາທີ່ແຂ່ງຂັນຢູ່, ພວກຜູ້ເຊື່ອທີ່ຟີລິບປອຍຕ້ອງໄດ້ບຸກບັ່ນເພື່ອຈະໄປເຖິງຫລັກຊັຍ. ໂປໂລອະທິບາຍໃນຈົດໝາຍເຖິງຊາວຟີລິບປອຍວ່າທ່ານເອງກໍກໍາລັງບຸກບັ່ນຕໍ່ໄປ ແລະບໍ່ເຄີຍຍອມແພ້. ທ່ານມຸ້ງໜ້າຕໍ່ໄປຖ້າມກາງອຸປສັກຫລາຍໆຢ່າງເຊັ່ນການຖືກຈໍາຈອງ ແລະການຖືກຕໍ່ຕ້ານຈາກຄຣູສອນປອມ. ທ່ານຊັກຊວນພວກຜູ້ເຊື່ອໃຫ້ຕໍ່ສູ້ຕໍ່ໄປ; ໂປໂລເອງກໍມີຄວາມຕ້ອງການຢາກຈະຮູ້ພຣະຄຣິດໃຫ້ບໍຣິບູນ ເພາະນັ້ນຄືລາງວັນທີ່ທ່ານຕ້ອງການ.

### 1. ຄຸນຄ່າເມື່ອເບິ່ງໂລກນີ້: (ຟີລິບປອຍ 3:1-6)

ໂປໂລເລີ້ມບົດຮຽນພາກນີ້ດ້ວຍຄໍາວ່າ "ສຸດທ້າຍນີ້" ເໝືອນກັບວ່າທ່ານຈະມ້ວນທ້າຍ; ແຕ່ຄວາມຈິງແລ້ວພວກເຮົາຍັງມີຟີລິບປອຍບົດທີສີ່ຢູ່. "ສຸດທ້າຍນີ້" ໃນຕອນນີ້ໝາຍເຖິງ "ສະນັ້ນ" ຫລາຍກວ່າຢ່າງອື່ນ. ໂປໂລໄດ້ແນະນໍາພວກຜູ້ເຊື່ອໃຫ້ "ຊົມຊື່ນຍິນດີໃນອົງພຣະຜູ້ເປັນເຈົ້າ" ເຖິງວ່າຄວາມລໍາບາກຈະເກີດຂຶ້ນກັບທ່ານ. ຫລັງຈາກນັ້ນໂປໂລກໍໄດ້ເຕືອນຊາວຟີລິບປອຍເຣື່ອງຄຣູສອນປອມ.

ໃນຂໍ້ 2, ໂປໂລໄດ້ໃຊ້ຄໍາວ່າ "ຈົ່ງລະວັງ" ເຖິງສາມຄັ້ງ; ທ່ານໄດ້ເອີ້ນວ່າພວກໝາ, ຄົນທີ່ເຮັດຊົ່ວ, ແລະພວກທີ່ຖືການປາດເນື້ອໜັງ. ພວກເຮົາພໍສັງເກດໄດ້ວ່າໂປໂລກໍາລັງໂມໂຫໜັກ; ໝາເປັນສັດເປື້ອນ ແລະໝາຍເຖິງຄົນຢູ່ນອກພຣະສັນຍາ; ຄົນທີ່ເຮັດການຊົ່ວໝາຍເຖິງພວກທີ່ເຮັດວຽກຮັບໃຊ້ອໍານາດມືດ; ພວກທີ່ຖືການປາດເນື້ອໜັງໝາຍເຖິງຜູ້ທີ່ຮັບພິທີຕັດ. ໂປໂລຖືວ່າການປາດເນື້ອໜັງບໍ່ມີປໂຍດຫຍັງສໍາລັບຄວາມພົ້ນ ແລະການເກີດໃໝ່ໃນອົງພຣະຄຣິດ.

ໂປໂລອາດຈະເຕືອນພວກຜູ້ເຊື່ອເຣື່ອງຄຣິສຕຽນຢິວທີ່ຍັງບໍ່ໄດ້ຢູ່ໃນຄຣິສຕະຈັກ; ຄຣູສອນພວກນີ້ໄດ້ເດີນທາງໄປສອນຕາມສະຖານທີ່ຕ່າງໆ ແລະພວກເຂົາໄດ້ນໍາເອົາປະເພນີໃນພຣະສັນຍາເດີມມາປະປົນກັບຄໍາສອນຂອງພຣະເຢຊູຄຣິດ; ຄົນພວກນີ້ເຊື່ອວ່າພິທີຕັດເປັນເຣື່ອງຈໍາເປັນສໍາລັບຄວາມລອດພົ້ນ. ໂປໂລສອນວ່າຊີວິດນິຣັນໄດ້ມາຈາກການຮູ້ຈັກພຣະຄຣິດເທົ່ານັ້ນ.

ໃນຂໍ້ 3 ແລະ 4, ໂປໂລອະທິບາຍພິທີຕັດທີ່ແທ້ຈິງວ່າແມ່ນການຮູ້ຈັກພຣະຄຣິດແລະການນະມັສການພຣະເຈົ້າດ້ວຍຈິດວິນຍານ. ຄຣູສອນປອມອວດເຣື່ອງເນື້ອໜັງ; ຖ້າຈະອວດເຣື່ອງເນື້ອໜັງ, ໂປໂລເອງກໍບໍ່ນ້ອຍໜ້າຜູ້ໃດ ເພາະທ່ານກໍເປັນຄົນຢິວ, "ຄົນເຮັບເຣີເກີດຈາກຊາວເຮັບເຣີ" (3:5). ໂປໂລເຄີຍຢູ່ໃນຄະນະຟາຣີຊາຍ, ເຄີຍເປັນຜູ້ຂົ່ມເຫງຄຣິສຕະຈັກ, ແລະເປັນຜູ້ເຄີຍຖືພຣະບັນຍັດແບບບໍ່ມີທີ່ຕິຕຽນໄດ້ (3:6). ເວົ້າງ່າຍໆກໍຄືວ່າ, ພວກຄຣູສອນປອມຈະປຽບກັບໂປໂລ ແລ້ວຍັງໄກກັນຫລາຍ.

**2. ຄຸນຄ່າເມື່ອເບິ່ງໄມ້ກາງແຂນ:** (ຟີລິບປອຍ 3: 7-11)
ໃນຂໍ້ 7, ໂປໂລປຽບທຽບສິ່ງທີ່ໂລກຖືວ່າເປັນປະໂຍດຫລາຍ ກັບຄຸນຄ່າຂອງການຮູ້ຈັກພຣະຄຣິດເປັນການສ່ວນຕົວ; ທ່ານເຫັນວ່າທຸກຢ່າງໄຮ້ປະໂຍດ ເມື່ອປຽບໃສ່ການຮູ້ຈັກພຣະເຢຊູຄຣິດ; ໂປໂລບໍ່ໄດ້ເວົ້າວ່າທຸກຢ່າງບໍ່ດີ ແຕ່ການຮູ້ພຣະຄຣິດເປັນທາງສ່ວນຕົວເປັນປະໂຍດຫລາຍເຫລືອລົ້ນ ກວ່າສິ່ງທີ່ຄິດວ່າມີຄຸນຄ່າໃນຊີວິດຂອງທ່ານ.

ຟີລິບປອຍ 3: 8-11 ໃຫ້ຂໍ້ມູນເພີ້ມເຕີມເຣື່ອງສິ່ງທີ່ໂປໂລໄດ້ສລະ; ໂປໂລກ່າວວ່າ "ເຮົາຈຶ່ງໄດ້ຍອມສລະສິ່ງສາຣະພັດ ແລະຖືວ່າສິ່ງເຫລົ່ານັ້ນເປັນເໝືອນຂີ້ເຫຍື້ອ ເພື່ອຈະໄດ້ອົງພຣະຄຣິດມາເປັນປະໂຍດແກ່ເຮົາ" (8). ຄວາມຊອບທັມບໍ່ສາມາດໄດ້ມາດ້ວຍການກະທຳຂອງມະນຸດ "ແຕ່ມີມາດ້ວຍຄວາມເຊື່ອໃນພຣະຄຣິດ ເປັນຄວາມຊອບທັມທີ່ມາຈາກພຣະເຈົ້າຊຶ່ງອາສັຍຄວາມເຊື່ອ" (9).

ເປົ້າໝາຍສຳຄັນໃນຊີວິດຂອງໂປໂລແມ່ນການ "ຮູ້ຈັກພຣະເຢຊູຄຣິດ." ທ່ານຕ້ອງການ "ຮູ້ຈັກຣິດອຳນາດ" ທີ່ເຮັດໃຫ້ພຣະຄຣິດຊົງຄືນພຣະຊົນ;" ເພາະສິ່ງເຫລົ່ານີ້, ໂປໂລພ້ອມທີ່ຈະຮ່ວມທຸກກັບພຣະຄຣິດ ແລະຍອມຕາຍເໝືອນພຣະອົງ (10). ທ່ານໝັ້ນໃຈວ່າທ່ານຈະເປັນຂຶ້ນມາຈາກຕາຍເໝືອນກັບພຣະອົງ (11). ໂປໂລລໍຄອຍການກັບມາຄັ້ງທີສອງຂອງພຣະຄຣິດ; ໃນເວລານັ້ນ ຄົນທີ່ຕາຍໃນພຣະຄຣິດຈະຖືກບັນດານໃຫ້ເປັນຄືນມາເພື່ອຈະຢູ່ກັບພຣະອົງຕລອດໄປ.

**3. ຄຸນຄ່າເມື່ອເບິ່ງເປົ້າໝາຍສູງສຸດ:** (ຟີລິບປອຍ 3:12-14)
ເປົ້າໝາຍສູງສຸດສຳລັບຊີວິດໂປໂລແມ່ນການຮູ້ຈັກພຣະຄຣິດຢ່າງຄົບບໍຣິບູນ. ໃນຂໍ້ 12, ທ່ານບອກວ່າ "ບໍ່ໃຊ້ວ່າເຮົາໄດ້ຮັບແລ້ວ ຫລືວ່າເຖິງທີ່ສຳເຣັດແລ້ວ." ພວກເຮົາບໍ່ຮູ້ວ່າຄຣູສອນປອມໃນຕອນນັ້ນໄດ້ອ້າງຕົວເອງວ່າສຳເຣັດແລ້ວຫລືບໍ່ ແຕ່ຮູ້ສຶກວ່າຄວາມເວົ້າຂອງໂປໂລໃນຕອນນີ້ອາດຈະແນໃສ່ພວກເຂົາທັງຫລາຍ. ຄວາມສຳເຣັດທີ່ກຳລັງເວົ້າກັນໃນເວລານີ້ ບໍ່ມີໃຜຈະໄປເຖິງໄດ້ ຖ້າປາສຈາກຄວາມສັມພັນສ່ວນຕົວກັບພຣະເຢຊູຄຣິດ.

ໃນຂໍ້ 13-14, ໂປໂລກັບມາໃຊ້ຄຳປຽບທຽບເຣື່ອງການແຂ່ງກິລາ; ການແຂ່ງຂັນຂອງໂປໂລແມ່ນການຮູ້ຈັກພຣະຄຣິດຢ່າງຄົບບໍຣິບູນ ເພື່ອຈະໄດ້ເປັນຜູ້ໃຫຍ່ແລ້ວໃນຄວາມເຊື່ອ. ໂປໂລບໍ່ຍອມຫລຽວຫລັງກັບ ແຕ່ໄດ້ "ມຸ້ງໜ້າໄປສູ່ຫລັກຊັຍເພື່ອຈະໄດ້ຮັບລາງວັນ. ແມ່ນຫຍັງຄືລາງວັນທີ່ໂປໂລຕ້ອງການ? ລາງວັນສຳລັບຊີວິດຄຣິສຕຽນກໍຄືການຮູ້ຈັກພຣະຄຣິດຢ່າງຄົບບໍຣິບູນ. ເມື່ອການແຂ່ງຂັນສິ້ນສຸດລົງ, ພຣະເຈົ້າຈະຊົງເອີ້ນເອົາຜູ້ຊັຍຊະນະທັງຫລາຍຂຶ້ນໄປເບື້ອງເທິງ.

<u>**ຄວາມໝາຍສຳລັບພວກເຮົາ ແລະພາກປະຕິບັດ**</u>
ໃນພຣະທັມຟີລິບປອຍ 3:1-14, ໂປໂລໄດ້ແບ່ງປັນທັສນະໃນຊີວິດສ່ວນຕົວຂອງທ່ານຊຶ່ງເປັນເຣື່ອງທີ່ພວກເຮົາຈະຕ້ອງຮູ້ຈັກ ເພາະຊີວິດນີ້ຈະຕ້ອງຢູ່ໄປໂດຍເອົາຄຸນຄ່າຕ່າງໆປຽບທຽບໃສ່ເປົ້າໝາຍສູງສຸດຊຶ່ງແມ່ນການຮູ້ຈັກພຣະຄຣິດຢ່າງຄົບບໍຣິບູນ. ບໍ່ມີຄຸນຄ່າໃດໆໃນໂລກ, ບໍ່ວ່າຈະເປັນນໍຣະດົກ ຫລືສິ່ງທີ່ຫາມາໄດ້, ທີ່ຈະມາເທົ່າທຽມກັບການຮູ້ຈັກພຣະຄຣິດຢ່າງຄົບບໍຣິບູນ.

ການເບິ່ງທຸກຢ່າງທີ່ຜ່ານມາເໝືອນຂີ້ເຫຍື້ອ ຊ່ວຍໂປໂລໃຫ້ດຳເນີນຊີວິດຕາມເປົ້າ; ໂປໂລບໍ່ເຄີຍຫລຽວຫລັງ ຫລືຄິດເສັຽດາຍ, ແຕ່ທ່ານໄດ້ມຸ້ງໜ້າໄປສູ່ຫລັກຊັຍດ້ວຍຄວາມຊົມຊື່ນຍິນດີ; ທ່ານໄດ້ເຊີນຄຣິສຕຽນຟີລິບປອຍໃຫ້ເອົາແບບຢ່າງຂອງທ່ານ.

ພວກເຮົາກໍເຊັ່ນກັນ, ພວກເຮົາຄວນມຸ້ງໜ້າໄປ, ປັກຕາໃສ່ການຮູ້ພຣະຄຣິດໃຫ້ບໍຣິບູນ. ພວກເຮົາສາມາດເວົ້າແບບດຽວກັບໂປໂລໄດ້ບໍ່ວ່າ "ສິ່ງສາຣະພັດເປັນສິ່ງທີ່ໄຮ້ປໂຍດ"? ພວກເຮົາໄດ້ສລະດ້ວຍຄວາມຍິນດີຫລືບໍ່? ເພາະພວກເຮົາຮູ້ວ່າແຕ່ລະບາດກ້າວທີ່ພວກເຮົາມຸ້ງໜ້າໄປ ຊ່ວຍພວກເຮົາໃຫ້ໃກ້ການຮູ້ພຣະຄຣິດຢ່າງບໍຣິບູນອີກບາດກ້າວນຶ່ງ, ຖ້າພວກເຮົາຖືວ່າທຸກຢ່າງທີ່ຜ່ານມາ (ກ່ອນຮູ້ຈັກພຣະເຢຊູຄຣິດ) ແມ່ນໄຮ້ປໂຍດທັງໝົດ.

**<u>ຄຳຖາມ:</u>**

1. ໃນຟີລິບປອຍ 3:8, ໂປໂລບອກວ່າ ທ່ານ "ຖືວ່າສິ່ງສາຣະພັດເປັນຂອງໄຮ້ປໂຍດ." ສິ່ງເຫລົ່ານີ້ປາກົດວ່າໄປໄກເກີນກວ່າເຊື້ອຊາດຍິວແລະຄວາມສຳເຣັດສ່ວນຕົວ. ທ່ານບອກວ່າທ່ານໄດ້ສລະຫລາຍກວ່ານັ້ນອີກ. ທ່ານຄິດວ່າໂປໂລໝາຍເຖິງຫຍັງ? ທັສນະຂອງໂປໂລກ່ຽວພັນຫຍັງກັບທັສນະຂອງພວກເຮົາ?

2. ມີວິທີໃດແດ່ທີ່ຈະຊ່ວຍພວກຜູ້ເຊື່ອທັງຫລາຍ ໃຫ້ຮູ້ຈັກພຣະຄຣິດຢ່າງສົມບູນແຕ່ລະມື້ໄປ?

3. ມີສິ່ງໃດແດ່ໃນຊີວິດ (ເຊັ່ນ ວຽກງານ ຫລືການຄົບຄ້າສະມາຄົມ) ທີ່ສາມາດກາຍເປັນສິ່ງມີຄຸນຄ່າສຳລັບພວກເຮົາ ແລະເຮັດໃຫ້ພວກເຮົາປ່ອຍພຣະຄຣິດເປັນເປັນພຣະລອງລົງມາ?

4. ພວກເຮົາຈະຫລີກເວັ້ນຈາກການໄວ້ວາງໃຈໃນສິ່ງຂອງຕ່າງໆໃນໂລກໄດ້ຢ່າງໃດ ເພື່ອຈະຕັ້ງໃຈໃສ່ສິ່ງທີ່ມີຄຸນຄ່າທີ່ແທ້ຈິງເຣື່ອງໄມ້ກາງແຂນຂອງພຣະເຢຊູຄຣິດ?

*ດຣ. ສິດນີ ຄານ*

# ບົດຮຽນທີ 11
# ຊື່ນຊົມຍິນດີໃນພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຟີລິປອຍ 4:4-20

**ພູມຫລັງຂອງພຣະຄັມພີ:** ຟີລິປອຍ 4:4-20

**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອເຮົາຈະຮຽນຮູ້ໃນການຊື່ນຊົມຍິນດີໃນພຣະເຈົ້າໃຫ້ຫລາຍ.

**ຄຳຖາມເພື່ອການຄົ້ນຄວ້າ:** ເຮົາຈະມີຄວາມຍິນດີໄດ້ຢ່າງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອອະທິບາຍເຣື່ອງຄວາມຊື່ນຊົມຍິນດີຢ່າງແທ້ຈິງ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.
- ມະນຸດທຸກຄົນເປັນສິພຣະທັດຂອງພຣະເຈົ້າ.
- ຊ່ອຍຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ກາຍເປັນຜູ້ນຳ.

## ບົດນຳ

ໂປໂລໄດ້ຂຽນຈົດໝາຍນີ້ໃນຂະນະທີ່ເພິ່ນຖືກກັກຂັງຢູ່ ແຕ່ເພິ່ນກໍມີຄວາມຊົມຊື່ນຍິນດີໃນອົງພຣະຜູ້ເປັນເຈົ້າ ເພາະເພິ່ນບໍ່ໄດ້ເອົາໃຈໃສ່ໃນການເປັນຢູ່ໃນເວລານີ້ ເພິ່ນໄດ້ເບິ່ງເຫັນສິ່ງທີ່ດີຢູ່ຂ້າງໜ້າຄືໜ້າທີ່ອັນສຳຄັນຂອງເພິ່ນທີ່ຈະຕ້ອງປະກາດໃຫ້ພວກຕ່າງຊາດ ຈຶ່ງເຮັດໃຫ້ເພິ່ນມີຄວາມຊົມຊື່ນຍິນດີ. ເມື່ອເພິ່ນຍິນດີເພິ່ນຈຶ່ງຮຽກຮ້ອງຄຣິສຕຽນເມືອງຟີລິປອຍໃຫ້ຊົມຊື່ນຍິນດີ ແຕ່ເພິ່ນຍັງຂ້ອງໃຈກັບຜູ້ຍິງສອງຄົນທີ່ບໍ່ມີຄວາມປອງດອງກັນໃນໂບດຫລັງນັ້ນ.

## 1. ຊັກຊວນໃຫ້ຊົມຊື່ນຍິນດີ: ( ຟີລິບປອຍ 4:4-7 )

ໂປຂຽນຈົດໝາຍເຖິງພີ່ນ້ອງຄຣິສຕຽນໃນເມືອງຟີລິບປອຍ ເພື່ອຊັກຊວນເລົ້າໂລມໃຫ້ເຂົາມີຄວາມຊົມຊື່ນຍິນໃນພຣະເຈົ້າທຸກສະພາບການ, ໂປໂລບໍ່ແມ່ນແຕ່ຊັກຊວນແລະຂໍຮ້ອງເທົ່ານັ້ນເພິ່ນຍັງເປັນຕົວຢ່າງແລະສອນເຂົາເໝືອນຄຣູສອນທີ່ມີໃຈອ່ອນສຸພາບປະຕິບັດຕົນໃຫ້ເຂົາເຫັນເປັນຕົວຢ່າງອີກ (ຂໍ້ 5ກ) ໃຈອ່ອນສຸພາບເປັນຄຸນສົມບັດຂອງຄຣິສຕຽນທີ່ຈະຕ້ອງປະຕິບັດທັງໃນໂບດແລະນອກໂບດເພາະຄຣິສຕຽນເຂົ້າໃຈວ່າພຣະເຈົ້າຊົງຢູ່ໃກ້ (ຂໍ້ 5ຂ). ແມ່ນແທ້ຄຣິສຕຽນຈະມີໃຈອ່ອນສຸພາບໄດ້ທຸກບ່ອນທຸກທີ່ ແລະທຸກສະຖານະການກໍຕໍ່ເມື່ອຄຣິສຕຽນຄິດວ່າພຣະເຈົ້າຊົງຢູ່ໃກ້, ຄວາມຄິດທີ່ໂປໂລໄດ້ຊັກຊວນຄຣິສຕຽນເມືອງຟີລິປອຍໃຫ້ມີຄວາມຊົມຊື່ນຍິນນັ້ນໂດຍໃຫ້ຄິດວ່າພຣະເຈົ້າຊົງຢູ່ໃກ້ຫລືພຣະເຈົ້າກຳລັງຈະສະເດັດມາ. ໂປໂລບໍ່ໄດ້ມີຄວາມທຸກໂສກໃນຄຸກຄຸມຂັງແຖມຍັງຂຽນຈົດໝາຍດ້ວຍໃຈອ່ອນສຸພາບກໍເພາະເພິ່ນເອງຮູ້ແນ່ແກ່ໃຈວ່າ ພຣະເຈົ້າຈະສະເດັດມາໃຫ້ກຳລັງໃຈ ຫລືຫາກພຣະອົງພໍພຣະທັຍກໍຈະຊົງຊ່ອຍໃຫ້ພົ້ນຈາກຄຸກແຫ່ງນີ້ ແຕ່ເຖິງແມ່ນວ່າພຣະອົງຈະບໍ່ຊົງຊ່ອຍໃຫ້ພົ້ນກໍຕາມ ເພາະບາງທີອາດເປັນນ້ຳພຣະທັຍພຣະອົງເພື່ອຈະໃຫ້ໂປໂລໄດ້ປະກາດເຣື່ອງຂອງພຣະອົງທີ່ຄຸມຂັງກໍອາດເປັນໄດ້, ດັ່ງນັ້ນໂປໂລຈຶ່ງກ່າວວ່າ *"ຢ່າທຸກຮ້ອນໃຈດ້ວຍ*

*ສິ່ງໃດເລີຍ ແຕ່ຈົ່ງທູນເຣື່ອງຄວາມປາຖນາຂອງພວກເຈົ້າທຸກຢ່າງຕໍ່ພຣະເຈົ້າ ດ້ວຍການໄຫວ້ວອນແລະການອ້ອນວອນຂໍ ພ້ອມກັບການຂອບພຣະຄຸນ* "(ຂໍ້ 6). ຊຶ່ງມີຄວາມໝາຍວ່າບໍ່ມີເຫດຜົນທີ່ຈະທຸກຮ້ອນໃຈເລີຽ ແຕ່ຄວນອ້ອນວອນບອກເຣື່ອງຄວາມທຸກຮ້ອນໃຈທັງໝົດກັບພຣະເຈົ້າແທນທີ່ຈະທຸກຮ້ອນໃຈລ້າໆ. ຜູ້ທີ່ຮູ້ຈັກກັບພຣະເຈົ້າຢ່າງແທ້ຈິງຈະຕ້ອງທູນເຣື່ອງລາວຕ່າງໆຕໍ່ພຣະເຈົ້າແລ້ວເຊົາກັງວົນທຸກຮ້ອນໃຈ ແຕ່ກັບຊົມຊື່ນຍິນດີໃນຊີວິດຂອງຕົນທຸກສະພາບການຂອງຊີວິດ.

ໃນຂະນະທີ່ຄຣິສຕຽນກຳລັງມີຄວາມທຸກຮ້ອນໃຈນັ້ນ ໂປໂລໄດ້ແນະນຳທາງອອກໃຫ້ພີ່ນ້ອງເມືອງຟີລິບປອຍສາມປະການທີ່ພໍສລຸບໄດ້ດັ່ງນີ້: 1. ຖ່ອມໃຈອ້ອນວອນ. ໒.ຂອບພຣະຄຸນ. ໓. ທູນຂໍເຣື່ອງໃນໃຈ. ຄຳແນະນຳຂອງໂປໂລຍັງໃຊ້ໄດ້ເທົ່າທຸກວັນນີ້, ເມື່ອຄຣິສຕຽນຖ່ອມຕົວອ້ອນວອນໂດຍການຂອບພຣະຄຸນແລະທູນຂໍເຣື່ອງໃນໃຈແລ້ວຈະມີການອັສຈັນເກີດຂື້ນດັ່ງທີ່ຈະເຫັນໃນຂໍ້ຕໍ່ໄປວ່າ "*ແລ້ວສັນຕິສຸກອັນມາແຕ່ພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈແລະຄວາມຄຶດຂອງເຈົ້າທັງຫລາຍໄວ້ໃນພຣະເຢຊູຄຣິດ* "(ຂໍ້ 7). ຄຳທີ່ໜ້າສັງເກດແມ່ນວ່າສັນຕິສຸກເກີນກວ່າຄວາມເຂົ້າໃຈຈະເຝົ້າຮັກສາຈິດໃຈແລະຄວາມຄຶດຂອງເຈົ້າທັງຫລາຍ ຊຶ່ງ ສັນຕິສຸກທີ່ຈະມານັ້ນບໍ່ມີໃຜສາມາດແປໄດ້ເພາະເປັນສັນຕິສຸກເກີນກວ່າຄວາມເຂົ້າໃຈຂອງມະນຸດ.

**໒. <u>ຈິດຈໍ່ຕໍ່ສັນຕິສຸກ:</u>** ( ຟີລິບປອຍ 4:8-9 )
ໂປໂລເລີ້ມຕົ້ນໃນ 4:1 ວ່າ "*ພີ່ນ້ອງທີ່ຮັກຂອງເຮົາ ຜູ້ເປັນທີ່ປາຖນາ ເປັນທີ່ຍິນດີ ແລະເປັນພວງມາລັຍຂອງເຮົາ ພວກທີ່ຮັກຂອງເຮົາເອີຍ, ຈົ່ງຕັ້ງຫມັ້ນຢູ່ໃນອົງພຣະຜູ້ເປັນເຈົ້າ* " ນັ້ນມີໃຈຄວາມທີ່ສຳຄັນໃນຂໍ້ 8 ທີ່ໂປໂລໄດ້ຂຽນລົງເປັນລາຍການດັ່ງນີ້; 1. *ສິ່ງທີ່ສັດຈິງ* 2. *ສິ່ງໃດທີ່ຫນ້ານັບຖື* 3. *ສິ່ງໃດທີ່ຍຸດຕິທັມ* 4. *ສິ່ງໃດທີ່ບໍຣິສຸດ* 5. *ສິ່ງທີ່ຫນ້າຮັກ* 6. *ສິ່ງໃດທີ່ຫນ້າຍິນດີ* 7. *ສິ່ງທີ່ລ້ຳເລີດ* 8. *ແລະຖ້າມີສິ່ງໃດທີ່ຄວນແກ່ການສັຣເສີນ ຈົ່ງພິຈາຣະນາເຖິງສິ່ງເຫລົ່ານີ້.* ທັງໝົດນີ້ໂປໂລຄວນຈະສັ່ງໃຫ້ປະຕິບັດ ແຕ່ເພິ່ນໄດ້ຂໍໃຫ້ພິຈາຣະນາຕຶກຕອງເສັຽກ່ອນ ຫາກຄຣິສຕຽນປະຕິບັດຕາມສິ່ງໂປໂລແນະນຳແລ້ວຈະກາຍເປັນພວງມາລັຍຄ້ອງຄໍສຳລັບຕົນ ແລະຍັງຈະ ເປັນພວງມາລັຍສຳລັບໂປໂລອີກ ດ້ວຍວ່າສິດເຮັດດີອາຈານກໍໄດ້ຮັບກຽດດ້ວຍ.

ສຳລັບຄົນໜຸ່ມນ້ອຍໃນສມັຍນີ້ ໂດຍສເພາະແມ່ນຄົນທີ່ເກີດໃໝ່ໃຫຍ່ລຸນໃນຕ່າງປະເທດອາດບໍ່ເຂົ້າໃຈເຣື່ອງຂອງພວງມາລັຍຄ້ອງຄໍ ເພາະວ່າໃນຕ່າງປະເທດບໍ່ຄ່ອຍນິຍົມໃຊ້ພວກມາລັຍ ແຕ່ໃຊ້ ໂທຣຟີ Trophy ເປັນຣາງວັນແກ່ຜູ້ຊະນະດັ່ງທີ່ທ່ານໄດ້ເຫັນໂທຣຟີໃນບ້ານເຮືອນ, ໃນໂບດຫລືບ່ອນອື່ນໆຊຶ່ງເປັນການບົ່ງບອກວ່າບ້ານຫລັງນັ້ນ, ໂບດຫລັງນັ້ນຫລືບ່ອນທີ່ທ່ານໄດ້ເຫັນໂທຣຟີນັ້ນ ຕ້ອງມີອັນໃດອັນນຶ່ງດີ ເພາະການທີ່ຈະໄດ້ ໂທຣຟີ ມາອັນນຶ່ງ ບໍ່ແມ່ນຂອງງ່າຍ. ທຳນອງດຽວກັນກ່ອນທີ່ຄຣິສຕຽນຜູ້ໃດຜູ້ນຶ່ງຈະໄດ້ພວງມາລັຍມາຄ້ອງຄໍກໍຈະຕ້ອງປະຕິບັດຕາມຄຳສອນໃນພຣະຄັມພີສົມຄວນ.

ທ່ານຄົງຈະເຫັນໂບດແຕ່ລະໂບດມີການສຳມະນາ, ສຶກສາພຣະຄັມພີຢູ່ເລື້ອຍໆ ຫາກຈະນັບທັງມານັ່ງຫ້ອງຮຽນວັນອາທິດແຕ່ລະວັນທິດແລ້ວຜູ້ນຶ່ງຈະນັ່ງໃນຫ້ອງຮຽນບໍ່ຕ່ຳກວ່າ ໕໒ ຊົ່ວໂມງຕໍ່ນຶ່ງປີ ເພາະປີນຶ່ງມີ ໕໒ ອາທິດ ຫາກເປັນຄຣິສຕຽນມາແລ້ວສິບປີກໍຈະໄດ້ນັ່ງຮຽນພຣະຄັມພີຢູ່ ໕໒໐ ຊົ່ວໂມງ. ອີງຕາມຊົ່ວໂມງທີ່ນັ່ງຫ້ອງຮຽນແລ້ວບຸກຄົນເຫຼົ່ານີ້ສົມຄວນຈະເປັນຄຣູກັນໝົດແລ້ວ ທັງນີ້ກໍເພາະວ່າຄຣິສຕຽນເຮົາຮຽນຮູ້ແລ້ວກໍຈິງ ແຕ່ຍັງບໍ່ໄດ້ປະຕິບັດຕາມສິ່ງທີ່ຮຽນມາ ເພາະວ່າການປະຕິບັດນັ້ນກໍປະເສີດກວ່າຮຽນຮູ້. ດ້ວຍເຫດນີ້ໂປໂລຈຶ່ງເຕືອນວ່າ; "*ຈົ່ງເຮັດທຸກສິ່ງທີ່ພວກເຈົ້າໄດ້ຮຽນຮູ້ ໄດ້ຮັບໄວ້ ໄດ້ຍິນ ແລະໄດ້ເຫັນໃນເຮົາແລ້ວ ແລະພຣະເຈົ້າຜູ້ໂຜດປະທານສັນຕິສຸກຈະຊົງສະຖິດຢູ່ນຳເຈົ້າທັງຫລາຍ* "(ຂໍ້ 9ຂ) ໂປໂລເອງໄດ້ປະຕິບັດເປັນຕົວຢ່າງດັ່ງທີ່ເຂົາໄດ້ເຫັນໃນຕົວເພິ່ນແລ້ວ.

3. <u>ເຕັມໃຈທຸກສະພາບການ:</u> (ຟີລິບປອຍ 4:10-13 )

ຕໍ່ມາໂປໂລໄດ້ສະແດງຄວາມຊົມຊື່ນຍິນດີພີ່ນ້ອງຟີລິປອຍໄດ້ພາກັນຄຶດຮອດເພິ່ນຄືໃນຂະນະທີ່ເພິ່ນຢູ່ໃນຄຸກຄຸມຂັງນັ້ນ ໄດ້ມີພີ່ນ້ອງລາງຄົນໄປຢ້ຽມຢາມ ແລະມີພີ່ນ້ອງລາງຄົນໄດ້ອ້ອນວອນເພື່ອເພິ່ນ, ໂປໂລຍັງບອກອີກວ່າໃນຂະນະທີ່ຢູ່ໃນຄຸກຄຸມຂັງນັ້ນເພິ່ນກໍໄດ້ຮຽນຮູ້ຫລາຍຢ່າງເຊັ່ນ; ຮຽນຮູ້ປະສົບການຕົກຕໍ່າ ແລະອຸດົມສົມບູນມີຄວາມແຕກຕ່າງກັນຢ່າງໃດ, ເພິ່ນໄດ້ຮຽນຮູ້ຈັກກັບຄວາມອຶດຫິວ ແລະຄວາມອີ່ມທ້ອງມີຄວາມແຕກຕ່າງກັນຢ່າງໃດ (ຂໍ້ 12-13)ເພິ່ນຍັງບອກອີກວ່າການທີ່ເພິ່ນສາມາດທົນຕໍ່ສິ່ງທັງປວງດ້ວຍຄວາມຊົມຊື່ນຍິນດີນີ້ ບໍ່ແມ່ນຍ້ອນວ່າເພິ່ນເກ່ງແຕ່ຢ່າງໃດ ແຕ່ເປັນເພາະວ່າເພິ່ນເອງອາສັຍຄວາມສັດທາໃນພຣະເຈົ້າເພິ່ນຈຶ່ງສາມາດເຮັດທຸກສິ່ງໄດ້ *"ເຮົາສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກໍາລັງເຮົາ"* (ຂໍ້ 13). ຮຽນຮູ້ທີ່ໂປໂລກ່າວເຖິງນັ້ນເປັນການຮຽນແບບຖ່ອມຕົວຮຽນຮູ້ທີ່ຈະຢູ່ກັບທຸກສະພາບການທີ່ເກີດຂຶ້ນໃນຊີວິດ ເວົ້າອີກຢ່າງນຶ່ງແມ່ນຍອມຮັບສິ່ງທີ່ເກີດຂຶ້ນ ວ່າເປັນບົດຮຽນສໍາລັບຊີວິດ ຄໍາວ່າຍອມຮັບນີ້ມີຄວາມໝາຍວ່າບໍ່ຈົ່ມ, ບໍ່ໂວຍວາຍແລະບໍ່ທໍ້ຖອຍຕໍ່ບັນຫານັ້ນເອງ. ນີ້ແຫລະຄືເຄັດລັບທີ່ໂປໂລຕໍ່ສູ້ກັບບັນຫາຊີວິດໂດຍອາສັຍກໍາລັງຊຶ່ງມາຈາກພຣະເຈົ້າ. ໂປໂລບໍ່ໄດ້ປະກາດວ່າເພິ່ນ ຕໍ່ສູ້ກັບບັນຫານີ້ດ້ວຍຕົວຂອງເພິ່ນເອງ ແຕ່ເພິ່ນປະກາດວ່າ *"ເຮົາສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກໍາລັງເຮົາ"* (ຂໍ້ 13) ຈຶ່ງເປັນຕົ້ນເຫດໃຫ້ເພິ່ນມີກໍາລັງວັງຊາຜ່ານຜ່າອຸປສັກມາຈົນເຖິງວັນນີ້ດ້ວຍຄວາມເຕັມໃຈໃນ ທຸກສະຖານະການຂອງຊີວິດ.

4. <u>ເຫັນຄວາມຮັກຈາກຟີລິບປອຍ:</u> (ຟີລິບປອຍ 4:14-20 )

ໃນຕອນທ້າຍໂປໂລໄດ້ກ່າວເຖິງເຄື່ອງຝາກຈາກພີ່ນ້ອງໃນເມືອງຟີລິບປອຍທີ່ໄດ້ຝາກນໍາ ເອປາໂຟດິໂຕ ໄປໃຫ້ເພິ່ນ, ຄວາມຈິງແລ້ວໂປໂລບໍ່ໄດ້ຊື່ນຊົມຍິນດີນໍາຂອງຝາກນັ້ນເທົ່າໃດ ແຕ່ເພິ່ນໄດ້ຊື່ນຊົມຍິນດີກັບຄວາມຮັກທີ່ພີ່ນ້ອງຟີລິບປອຍທີ່ສະແດງອອກໂດຍການຝາກສິ່ງຂອງໄປໃຫ້ ດັ່ງນັ້ນໂປຈຶ່ງກ່າວວ່າ *"ບໍ່ໃຊ່ວ່າເຮົາປາຖນາຈະໄດ້ຮັບຂອງທານຈາກເຈົ້າທັງຫລາຍ ແຕ່ເຮົາປາຖນາຢາກໃຫ້ພວກເຈົ້າໄດ້ຜົນກໍາໄລເພີ້ມຂຶ້ນໃນບັນຊີຂອງພວກເຈົ້າ"* (ຂໍ້ 17). ຄໍາວ່າບໍ່ໃຊ່ວ່ານັ້ນເປັນພາສາເວົ້າຂອງລາວໂບຮານໃຊ້ກັນຢູ່ເລື້ອຍໆ <u>ຕົວຢ່າງ:</u> ບໍ່ໃຊ່ແມ່ນແຕ່ຂ້ອຍຜູ້ດຽວ ຍັງມີຜູ້ອື່ນອີກຕັ້ງຫລາຍຄົນ. ເປັນຄໍາເນັ້ນໜັກໃນຄໍາປະຕິເສດ ຫາກຈະເວົ້າແບບທັມມະດາຈະເວົ້າວ່າ <u>ບໍ່ແມ່ນແຕ່ຂ້ອຍຜູ້ດຽວ</u> ອາດເຂົ້າໃຈງ່າຍກວ່າແຕ່ບໍ່ມີນໍ້າໜັກເພີ້ມ. ໂປໂລກ່າວວ່າ *"ບໍ່ໃຊ່ວ່າເຮົາປາຖນາຈະໄດ້ຮັບຂອງທານຈາກເຈົ້າທັງຫລາຍ* ມີຄວາມໝາຍວ່າເຮົາຫວັງໃຈຈະຮັບຂອງຝາກຈາກເຈົ້າທັງຫລາຍເລີຍ ແລະຍັງຫວັງໃຈຈະໃຫ້ພວກທ່ານມີຜົນກໍາໄລຫລືຢາກໃຫ້ເຂົາມີຫລາຍ ແຕ່ເຂົາພັດເອົາອອກຈາກບັນຊີຂອງເຂົ ແລ້ວແບ່ງປັນໃຫ້ ໂປໂລ, ດ້ວຍການເສັຍສະລະຂອງພີ່ນ້ອງຟີລິບປອຍຕັ້ງແຕ່ເລີ້ມແຮກຈົນເຖິງເວລານີ້ໂປໂລຈຶ່ງກ່າວວ່າ *"ບໍ່ໃຊ່ວ່າເຮົາປາຖນາຈະໄດ້ຮັບຂອງທານຈາກເຈົ້າທັງຫລາຍ"* (ຂໍ້ 14). ຄໍາເວົ້າອັນສັ້ນໆຂອງໂປໂລມີຄວາມໝາຍຢ່າງຫລວງຫລາຍແລະຍັງເປັນຜົນປໂຍດສໍາລັບເຮົາທຸກຄົນທີ່ຈະຕ້ອງຮຽນຮູ້ຈັກພຽງພໍໃນອົງພຣະຜູ້ເປັນເຈົ້າ ເພາະຕາມທັມມະດາແລ້ວຄົນເຮົາຈະບໍ່ຮູ້ຈັກເມືອງພໍ ແຕ່ສໍາລັບໂປໂລເວົ້າວ່າບໍ່ປາຖນາຈະຮັບຂອງທານ ແປວ່າບໍ່ມີໃຈຢາກໄດ້ຂອງອັນໃດຈາກຜູ້ໃດ ເພິ່ນຍັງເວົ້າອີກວ່າເຮົາກໍອີ່ມຢູ່ ແປວ່າມີພໍແລ້ວ. ແຕ່ໂປໂລຍັງກ່າວຍ້ອງຍໍນໍ້າໃນທີ່ໃຫ້ມາໂດຍກ່າວວ່າ *"ເຮົາໄດ້ຮັບຄົບຈໍານວນ ແລະມີບໍຣິບູນຢູ່ແລ້ວ ເຮົາກໍອີ່ມເຕັມຢູ່ເພາະໄດ້ຮັບຂອງຈາກເອປາໂຟດິໂຕ ຊຶ່ງເຈົ້າທັງຫລາຍສົ່ງໄປໃຫ້ເປັນຂອງທານທີ່ມີກິ່ນຫອມຫວານ ເປັນເຄື່ອງບູຊາທີ່ຊົງໂຜດຮັບແລະເປັນທີ່ຊອບພຣະທັຍພຣະເຈົ້າ"* (ຂໍ້ 18). ໂປໂລບອກອີກວ່າການເຮັດຢ່າງນີ້ພຣະເຈົ້າພໍພຣະທັຍ ເພາະຄຣິສຕຽນໄດ້ສະແດງຄວາມຮັກເຊິ່ງກັນແລະກັນໂດຍການເສັຽສະລະ, ຊ່ອຍເຫລືອເຊິ່ງກັນແລະກັນໃນ ຍາມຂັດສົນ.

<u>**ຄໍາຖາມ:**</u>

1. ເຮົາຈະມີໃຈອ່ອນສຸພາບໄດ້ທຸກບ່ອນທຸກທີ່ ແລະທຸກເວລາໄດ້ດ້ວຍວິທີໃດ?

໒. ເປັນຫຍັງໂປໂລຈຶ່ງບໍ່ເປັນທຸກຮ້ອນອັນໃດທັ້ງໆທີ່ເພິ່ນເອງຢູ່ໃນຄຸກ?

3. *ຢ່າທຸກຮ້ອນໃຈດ້ວຍສິ່ງໃດເລີຍ ແຕ່ຈົ່ງທູນເຣື່ອງຄວາມປາຖນາຂອງພວກເຈົ້າທຸກຢ່າງຕໍ່ພຣະເຈົ້າ ດ້ວຍການໄຫວ້ວອນ , "ແລ້ວສັນຕິສຸກອັນມາແຕ່ພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈແລະຄວາມຄິດຂອງເຈົ້າ* ໝາຍຄວາມວ່າແນວໃດ?

4. ໃນຊີວິດຂອງທ່ານມີຄວາມທຸກຮ້ອນໃຈອັນໃດແດ່? ເປັນຫຍັງບໍ່ເຮັດຕາມຄຳແນະນຳຂອງໂປໂລ?

5. ໃຈຈິດຈໍ່ຕໍ່ສັນຕິສຸກມີຫຍັງແດ່ ຂໍ້ 8 ທ່ານຍັງຂາດຂໍ້ໃດ?

6. ເຮັດແນວໃດເຮົາຈຶ່ງຈະຮຽນຮູ້ຄວາມພໍໃຈໃນການເປັນຢູ່ຂອງເຮົາ? ຫາກບໍ່ພໍໃນເຮົາຈະເປັນແນວໃດ?

7. ໂປໂລໄດ້ຍົກຍ້ອງນ້ຳໃຈເສັຽສະລະຂອງພີ່ນ້ອງຟີລິບປອຍນັ້ນ ເປັນບົດຮຽນຫຍັງສຳລັບທ່ານແດ່?

*ດຣ. ທຸນພັນ ວົງສຸຣິດທ໌*

# ບົດຮຽນທີ 12
# ພຣະເຢຊູເປັນພຣະເຈົ້າອົງສູງສຸດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂກໂລຊາຍ 1:15:-23

**ພູມຫລັງຂອງພຣະຄັມພີ:** ໂກໂລຊາຍ 1:1-23

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູເປັນພຣະເຈົ້າອົງສູງສຸດທີ່ປາກົດຕົວ, ເປັນພຣະຜູ້ຊົງສ້າງ, ເປັນປະມຸກຂອງຄຣິສຕະຈັກ, ເປັນຜູ້ນຳສັນຕິສຸກຈາກພຣະເຈົ້າມາສູ່ໂລກ.

**ຄຳຖາມເພື່ອການຄົ້ນຄວ້າ:** ເຮົາຈະເວົ້າໄດ້ຢ່າງໃດວ່າພຣະເຢຊູເປັນພຣະເຈົ້າເໜືອສາສນາ

**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າພຣະອົງມີຄວາມໝາຍຫຍັງສຳລັບຂ້ອຍ.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.

## ບົດນຳ

ພຣະເຢຊູຊົງເປັນພຣະລັກສະນະຂອງພຣະເຈົ້າ ຖ້າຜູ້ໃດຢາກເຫັນພຣະເຈົ້າຈົ່ງເບິ່ງພຣະເຢຊູ ເພາະພຣະອົງເປັນພຣະບຸດຂອງພຣະເຈົ້າທີ່ມາປາກົດໃນຄາບຂອງມະນຸດ ດັ່ງນັ້ນຈຶ່ງເວົ້າໄດ້ວ່າ ພຣະເຢຊູເປັນພຣະບຸດພຣະເຈົ້າອົງສູງສຸດທີ່ມະນຸດມາມາດເບິ່ງເຫັນດ້ວຍຕາຂອງເຂົາ.

**1. ພຣະເຢຊູພຣະຜູ້ສ້າງ:** ( ຟີລິບປອຍ 1:15-17 )

ໂປໂລໄດ້ອາທິບາຍເຣື່ອງພຣະເຢຊູຊົງເປັນພຣະຜູ້ສ້າງໂດຍກ່າວວ່າພຣະເຢຊູຊົງເປັນພຣະເຈົ້າທີ່ມາປາກົດຕົວ(ຂໍ້ 15). ໃນພາສາອັງກິດຈະເວົ້າວ່າ Image ແປວ່າຮູບຮ່າງ, ຄຳວ່າຮູບຮ່າງອາດມີຄວາມໝາຍວ່າຮູບສະທ້ອນແສງຄືຮູບພາບທີ່ປາກົດໃນກະຈົກ ໂປໂລບໍ່ໄດ້ຕັ້ງໃຈວ່າຈະໃຫ້ຄົນທັງຫລາຍເຂົ້າໃຈແນວນັ້ນ ແຕ່ມີຈຸດປະສົງຢາກບອກທຸກຄົນເຂົ້າໃຈວ່າພຣະເຢຊູເປັນພຣະເຈົ້າທີ່ປາກົດຕົວສາມາດເບິ່ງເຫັນແລະຈັບບາຍໄດ້ ເພາະພຣະບິດານັ້ນເຮົາບໍ່ສາມາດເບິ່ງເຫັນແລະຈັບບາຍບໍ່ໄດ້ ດັ່ງນັ້ນພຣະບຸດຈຶ່ງປາກົດຕົວໃຫ້ມະນຸດໄດ້ເຫັນ ເຮົາໄດ້ເຫັນພຣະລັກສະນະຂອງພຣະເຈົ້າຜ່ານທາງພຣະເຢຊູທີ່ເປັນພຣະເຈົ້າຊຶ່ງປາກົດຕົວໃນຮູບຮ່າງມະນຸດ.

ຢ່າງໃດກໍດີໂປໂລບໍ່ໄດ້ກ່າວວ່າພຣະຢູຊົງປາກົດຕົວແທນພຣະເຈົ້າ ແຕ່ກ່າວວ່າ *"ຊົງເປັນບຸດແຣກເໜືອສາຣະພັດ ທີ່ຊົງບັນດານໃຫ້ມີຂຶ້ນນັ້ນ"* (ຂໍ້ 15). ຫາກໂປໂລເວົ້າເຖິງການເກີດຂອງພຣະເຢຊູທີ່ບ້ານເບັດເລເຮັມເຮົາກໍຈະປະຫລາດໃຈໃນຄຳວ່າ "ເປັນບຸດແຣກ" ເພາະວ່າພຣະເຢຊູຊົງເປັນພຣະເຈົ້າແລະເປັນພຣະເຈົ້າທີ່ບໍ່ມີເບື້ອງຕົ້ນ ເມື່ອເວົ້າເຖິງເບື້ອງ ຕົ້ນ ຫລືຜົນແຣກນັ້ນອາດຈະພົ້ນໄປເພາະວ່າ ພຣະອົງບໍ່ມີເບື້ອງຕົ້ນກຳເນີດ, ສິ່ງທີ່ໂປໂລກຳລັງເວົ້າມີຄວາມໝາຍວ່າພຣະອົງຊົງຢູ່ກ່ອນທຸກສິ່ງ ແລະຊົງເປັນຜູ້ສ້າງທຸກສິ່ງ.

ໂປໂລຢັ້ງຢືນວ່າພຣະເຢຊູຊົງເປັນພຣະເຈົ້າດ້ວຍວ່າພຣະອົງຊົງມີອຳນາດເຕັມຕັ້ງແຕ່ຕົ້ນເດີມມາ *"ເພາະວ່າໃນພຣະອົງພຣະເຈົ້າໄດ້ຊົງສ້າງສັບພະສິ່ງຂຶ້ນ ທັງໃນທ້ອງຟ້າແລະເທິງແຜ່ນດິນໂລກ ສິ່ງທີ່ຕາເຫັນໄດ້ ແລະທີ່ເຫັນບໍ່ໄດ້ ຈະເປັນພຣະທີ່ນັ່ງຫລືເປັນອານຸພາບ ເປັນຜູ້ປົກຄອງຫລືຜູ້ມີອຳນາດ ສິ່ງທັງປວງເຫລົ່ານີ້ແມ່ນພຣະເຈົ້າໄດ້ສ້າງໂດຍທາງພຣະອົງ ແລະສຳລັບພຣະອົງ"* (ຂໍ້ 16). ໃນພຣະທັມນີ້ໄດ້ບົ່ງບອກວ່າພຣະເຢຊູໄດ້ຊົງສ້າງສັພສິ່ງທັງປວງຮວມທັງສວັນຊັ້ນຟ້າ, ແລະສິ່ງທີ່ເບິ່ງເຫັນດ້ວຍຕາເປົ່າແລະສິ່ງທີ່ເບິ່ງບໍ່ເຫັນອີກ, ສິ່ງທີ່ຕາບໍ່ເຫັນມີຄວາມໝາຍວ່າບໍ່ແມ່ນຂອງທີ່ຢູ່ໃນໂລກນີ້ ແຕ່ແມ່ນສິ່ງທີ່ເບິ່ງບໍ່ເຫັນກັບຕາ ຊຶ່ງເກີນກວ່າຄວາມເຂົ້າໃຈຂອງມະນຸດທີ່ຈະເຂົ້າໃຈໄດ້ຫລາຍຢ່າງໄດ້ຊົງສ້າງໄວ້ໃນບ່ອນທີ່ມະນຸດຍັງໄປບໍ່ຮອດ ຫລືຍັງບໍ່ທັນຮູ້ເຫັນເທື່ອ.

*"ພຣະອົງຊົງເປັນຢູ່ກ່ອນສິ່ງສາຣະພັດ ແລະສິ່ງສາຣະພັດນັ້ນເປັນຣະບຽບຢູ່ໂດຍພຣະອົງ"* (ຂໍ້ 17) ໄດ້ບົ່ງບອກວ່າບໍ່ມີສິ່ງນຶ່ງສິ່ງໃດ, ຜູ້ນຶ່ງຜູ້ໃດ, ພຣະໃດພຣະນຶ່ງ, ສາສນາໃດສາສນານຶ່ງເປັນມາກ່ອນພຣະອົງ ກ່ອນທີ່ຈະມີສິ່ງໃດສິ່ງນຶ່ງເກີດຂຶ້ນໃນໂລກນີ້ແມ່ນພຣະເຢຊູຊົງເປັນຢູ່ກ່ອນສ້າງໂລກພຸ້ນ ແລະພຣະອົງເອງເປັນຜູ້ສ້າງໂລກແລະສັພສິ່ງໃນໂລກ ແຕ່ບໍ່ໄດ້ມາບັງເກີດມາເປັນມະນຸດເທົ່ານັ້ນ ທັງນີ້ອາຈເປັນເພາະວ່າບໍ່ທັນເຖິງກຳໜົດເວລາມາກຳເນີດ ຂອງພຣະອົງ, ໂປໂລຍັງ ບອກອີກວ່າ ສິ່ງສາຣະພັດເປັນລະບຽບຢູ່ໂດຍພຣະອົງ, ຄຳວ່າສາຣະພັດແປວ່າທຸກສິ່ງທຸກຢ່າງຮວມທັງດວງດາວໃນທ້ອງຟ້າຍັງເປັນຣະບຽບຢູ່ເທົ່າທຸກວັນນີ້ ກໍເພາະພຣະອົງວາງມັນໄວ້ເຊັ່ນນັ້ນຕັ້ງແຕ່ຕົ້ນເດີມ ແລະບໍ່ມີໃຜຍ້າຍມັນໄປມາໄດ້.

**2. ຊົງເປັນປະມຸກຂອງຄຣິສຕະຈັກ:** (ຟີລິບປອຍ 1:18-19 )
*"ພຣະອົງຊົງເປັນສີສະຂອງກາຍ ຄືຄຣິສຕະຈັກ ພຣະອົງຊົງເປັນປະຖົມ ເປັນຜູ້ແຮກທີ່ຖືກຊົງບັນດານໃຫ້ຄືນມາຈາກຕາຍ ເພື່ອພຣະອົງຈະຊົງເປັນເອກໃນສັພສິ່ງທັງປວງເພາະວ່າພຣະບິດາຊົງພໍພຣະທັຍ ທີ່ຈະໃຫ້ສະພາບຂອງພຣະເຈົ້າສະຖິດຢູ່ໃນພຣະບຸດຢ່າງເຕັມບໍຣິບູນ"* (ຂໍ້ 18-19). ລາງຄົນອາດເວົ້າແລະເຂົ້າໃຈວ່າພຣະເຢຊູຊົງເປັນພຣະຜູ້ສ້າງສັພສິ່ງແລ້ວພຣະອົງກໍປ່ອຍປະລະເລີຍໄວ້ສຸດແລ້ວແຕ່ມັນຈະເປັນໄປ, ບໍ່ແມ່ນແນວນັ້ນດອກ ເມື່ອພຣະອົງຊົງ ສ້າງແລ້ວພຣະອົງກໍຊົງຮັກໃນສິ່ງທີ່ພຣະອົງຊົງສ້າງຕລອດເຖິງຄຣິສຕະຈັກຂອງພຣະອົງ, ດັ່ງນັ້ນພຣະອົງຈຶ່ງບໍ່ປ່ອຍປະລະເລີຍຄຣິສຕະຈັກຂອງພຣະອົງໃຫ້ເປັນກຳພ້າ ຍັງຊົງເປັນປະມຸກຫລືເປັນເຈົ້າຊີວິດຂອງຄຣິສຕະຈັກຂອງພຣະອົງທີ່ໂປໂລຮ້ອງວ່າເປັນສີສະ ແປວ່າຫົວຂອງຄຣິສຕະຈັກ, ເມື່ອເວົ້າເຖິງຫົວແລ້ວຂ້າພະເຈົ້າຄຶດເຖິງຮູບພາບຂອງຫົວຈັກຣົດໄຟທີ່ແກ່ດຶງພວກຕູ້ຣົດໄຟທີ່ໜັກແສນໜັກເປັນຮ້ອຍຕູ້ທີ່ແລ່ນໄປຕາມລາງນັ້ນແມ່ນອາ ສັຍຫົວຈັກເທົ່ານັ້ນ. ຫົວຈັກຣົດໄຟແກ່ດຶງຕູ້ຣົດໄຟມັນເປັນຮູບພາບທີ່ພຣະເຢຊູໄດ້ແກ່ດຶງຄຣິສຕະຈັກທັງຫລາຍ ໃນໂລກນີ້ດ້ວຍຄວາມໜັກທຸກໆວັນ, ດັ່ງນັ້ນຄຣິສຕະຈັກທຸກໆແຫ່ງຈຳຕ້ອງມີພຣະເຢຊູເປັນຫົວແລະຄຣິສຕຽນທຸກ ຄົນເປັນຄືຕູ້ຣົດໄຟ ຫາກຄຣິສຕະຈັກບໍ່ມີພຣະເຢຊູມັນກໍຈະຄ້າຍຄືຕູ້ຣົດໄຟທີ່ບໍ່ມີຫົວຈັກນັ້ນເອງ ແລະຫາກຕູ້ນັ້ນບໍ່ ຕິດກັບຈັກສັນໃດຕູ້ນັ້ນກໍຈະໄປບໍ່ໄດ້ສັນນັ້ນ.

ເມື່ອເຮົາເຂົ້າໃຈວ່າພຣະເຢຊູເປັນຫົວຄືຫົວຈັກຣົດໄຟແລ້ວ ເຮົາຄວນຈະໃຫ້ຫົວຈັກນັ້ນເປັນເຄື່ອງນຳພາເຮົາແຕ່ລະວັນໆ, ການນະມັສການຂອງເຮົາ, ການຮຽນພຣະທັມຂອງເຮົາ ແລະການສາມັກຄີທັມຂອງເຮົາຄວນຈະນຳໂດຍສີສະ (ຫົວ) ສເມີ. ຄຳວ່າຄຣິສຕະຈັກອາດແບ່ງເປັນສອງປະເພດຄື: 1. ບຸກຄົນທີ່ເຊື່ອໃນພຣະເຢຊູ (1ກຣທ 6:19). 2. ຕຶກຂອງຄຣິສຕະຈັກ (ມທ 16:18). ເມື່ອເຮົາຫາກຮູ້ວ່າຮ່າງກາຍຂອງເຮົາເປັນພຣະວິຫານຂອງພຣະເຈົ້າເຮົາກໍສົມຄວນຈະຮັກສາມັນໄວ້ບໍ່ໃຫ້ມີການດ່າງພ້ອຍ ແລະໃຊ້ມັນເພື່ອສັຣເສີນພຣະເຈົ້າໂດຍການຖວາຍ ຕົວໃນພຣະຣາຊກິດຂອງພຣະອົງ.

**3. ຊົງເປັນພຣະເຈົ້າຂອງຜູ້ເຊື່ອ:** ( ຟີລິບປອຍ1:20-23 )

ນອກຈາກພຣະເຢຊູເປັນພຣະຜູ້ສ້າງ, ເປັນຫົວຂອງຄຣິສຕະຈັກແລ້ວ ໂປໂລຍັງບອກອີກວ່າພຣະອົງຍັງເປັນເຈົ້ານາຍແລະເປັນພຣະເຈົ້າຂອງທຸກຄົນທີ່ໄວ້ວາງໃຈເຊື່ອໃນພຣະອົງອີກ. ທັງນີ້ມີຄວາມໝາຍວ່າພຣະອົງຮັກແລະຫ່ວງເຮົາສເມີ, ໃນຍາມເຮົາທຸກອົກທຸກໃຈຍ້ອນຄວາມເຈັບເປັນ, ຫລືຍາມຖືກຂົ່ມເຫງ, ຍາມເຮົາທຸກຍາກຂາດເຂີນ, ຍາມເຮົາເປັນທຸກພາຍໃນຈິດໃຈ ຫລືເປັນທຸກໃນສິ່ງໃດກໍຕາມເຮົາຄວນຈະອ້ອນວອນອະທິຖານຫາພຣະອົງ ເພາະເຮົາຮູ້ແລ້ວວ່າພຣະອົງຊົງຢູ່ຖ້າມກາງເຮົາ ແນ່ນອນພຣະອົງກໍຈະຊົງໄດ້ຍິນສຽງຂອງເຮົາ *"ຢ່າທຸກຮ້ອນໃຈ ໃນສິ່ງໃດເລີຍ ແຕ່ຈົ່ງທູນເຣື່ອງຄວາມປາຖນາຂອງພວກເຈົ້າທຸກຢ່າງຕໍ່ພຣະເຈົ້າ ດ້ວຍການໄຫວ້ວອນ, ແລະການ ອ້ອນວອນຂໍ, ພ້ອມກັບການຂອບພຣະຄຸນ ແລ້ວສັນຕິສຸກອັນມາແຕ່ພຣະເຈົ້າ ຊຶ່ງເກີນກວ່າຄວາມເຂົ້າໃຈຈະເຝົ້າຮັກສາຈິດໃຈແລະຄວາມຄຶດຂອງເຈົ້າທັງຫລາຍໄວ້ໃນພຣະເຢຊູຄຣິດ "* (ຟີລິບປອຍ 4: 6). ຈົ່ງຮູ້ວ່າພຣະເຈົ້າຂອງ ທ່ານເປັນພຣະຜູ້ສ້າງສັພສິ່ງທັງປວງ, ຊົງເປັນສີສະຂອງຄຣິສຕະຈັກ, ຊົງເປັນພຣະເຈົ້າຂອງທ່ານ ພຣະອົງຊົງ ຍອມຕາຍແທນຄວາມຜິດບາບຂອງທ່ານເພື່ອຈິດວິນຍານຂອງທ່ານຈະໄດ້ຄືນສູ່ພຣະເຈົ້າ *"ແລະໂດຍພຣະບຸດນັ້ນຈະໄດ້ຊົງໃຫ້ສິ່ງສາຣະພັດກັບຄືນດີກັບພຣະເຈົ້າບໍ່ວ່າສິ່ງນັ້ນຈະຢູ່ໃນແຜ່ນດິນໂລກ ຫລືໃນສວັນ ພຣະອົງໄດ້ຊົງບັນດານໃຫ້ເກີດສັນຕິພາບດ້ວຍພຣະໂລຫິດ ຊຶ່ງໄຫລທີ່ໄມ້ກາງແຂນຂອງພຣະອົງ "* (ຂໍ້ 20).

ໂປໂລບອກອີກວ່າ *"ແລະເຈົ້າທັງຫລາຍ ຊຶ່ງເມື່ອກ່ອນນັ້ນບໍ່ແມ່ນພົລເມືອງຂອງພຣະເຈົ້າ ແຕ່ເປັນສັດຕຣູທາງດ້ານຈິດໃຈດ້ວຍການຊົ່ວຮ້າຍຕ່າງໆບັດນີ້ ພຣະອົງຊົງໂຜດໃຫ້ກັບຄືນດີກັບພຣະອົງ ໂດຍການສິ້ນພຣະຊົນແຫ່ງພຣະກາຍຄືເນື້ອໜັງຂອງພຣະອົງ ເພື່ອຈະໄດ້ຊົງຖວາຍພວກເຈົ້າຕໍ່ພຣະພັກພຣະເຈົ້າ ໃຫ້ເປັນຄົນບໍຣິສຸດທີ່ບໍ່ມີຕຳໜິຕິຕຽນໄດ້ ແຕ່ເຈົ້າທັງຫລາຍຕ້ອງຕັ້ງໝັ້ນຢູ່ໃນຄວາມເຊື່ອ ຊຶ່ງໄດ້ວາງຮາກລົງຢ່າງແໜ້ນໜາຖາວອນແລ້ວແລະຢ່າໄດ້ໜີຈາກຄວາມໄວ້ໃຈໃນຂ່າວປະເສີດທີ່ພວກເຈົ້າໄດ້ຍິນແລ້ວ ແລະໄດ້ປະກາດແລ້ວແກ່ມະນຸດທຸກຄົນທີ່ຢູ່ທົ່ວໃຕ້ຟ້າ ຊຶ່ງເຮົາ ໂປໂລ ເປັນຜູ້ຮັບໃຊ້ໃນການປະກາດຂ່າວປະເສີດນັ້ນ "* (ຂໍ້ 22-23) ເຮົາກັບກາຍມາເປັນໄພ່ພົນຂອງ ພຣະເຈົ້າໂດຍຜ່ານທາງຄວາມເຊື່ອໃນພຣະເຢຊູ. ໂປໂລໃຊ້ຄຳວ່າເຊື່ອໃນຂ່າວປະເສີດ ເພາະວ່າຂ່າວປະເສີດແມ່ນຂ່າວເຣື່ອງພຣະເຢຊູ ດ້ວຍເຫດນີ້ໂປໂລຈຶ່ງຕັກເຕືອນທຸກຄົນວ່າຄວນໄວ້ວາງໃຈໃນຂ່າວປະເສີດ ແປວ່າໄວ້ວາງໃຈໃນພຣະເຢຊູ ເພາະວ່າຍ້ອນຂ່າວປະເສີດ (ພຣະເຢຊູ) ເຮົາທັງຫລາຍຈຶ່ງກາຍເປັນຄົນບໍຣິສຸດໃນສາຍພຣະເນດ (ຕາ) ຂອງພຣະເຈົ້າ.

**<u>ຄຳຖາມ:</u>**

1. ເມື່ອພຣະເຢຊູຜູ້ຊົງເປັນພຣະຜູ້ສ້າງທຸກສິ່ງທຸກຢ່າງ ແລະເຮົາເປັນລູກຂອງພຣະອົງແລ້ວເຮົາຈະຢ້ານຫຍັງອີກ?

2. ທ່ານໄດ້ເອົາພຣະເຢຊູເປັນສີສະ (ຫົວ) ຂອງທ່ານແນວໃດແດ່?

3. ທ່ານໄດ້ຮັບໃຊ້ພຣະເຈົ້າໃນໂບດແນວໃດແດ່?

4. ທ່ານຮູ້ບໍ່ວ່າພຣະເຢຊູຊົງຮັກທ່ານຫລາຍປານໃດ?

*ດຣ. ທຸນພັນ ວົງສຸຣິດທ໌*

## ບົດຮຽນທີ 13
## ໝັ້ນຄົງໃນຄວາມເຊື່ອ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂກໂລຊາຍ 2:6-23

**ພູມຫລັງຂອງພຣະຄັມພີ:** ໂກໂລຊາຍ 2:6-23

**ຈຸດສໍາຄັນຂອງບົດຮຽນນີ້:** ເຊື່ອພຣະເຢຊູຢ່າງຈິງໃຈໂດຍບໍ່ອຽງຝ່າຍໂລກ

**ຄໍາຖາມເພື່ອການຄົ້ນຄວ້າ:** ພຣະເຢຊູຊົງເປັນທຸກຢ່າງ ເປັນຫຍັງຈຶ່ງຕ້ອງການແນວອື່ນອີກ.

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສອນເຮົາໃຫ້ເຂົ້າໃຈວ່າ ມີພຣະເຢຊູກໍມີໝົດແລ້ວ.

**ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.

### ບົດນໍາ

ການດໍາເນີນຊີວິດຢ່າງຄຣິສຕຽນທີ່ແທ້ຈິງນັ້ນເປັນການຍາກເຫລືອເກີນ ເພາະມັນຈໍາເປັນຈະຕ້ອງປະຖິ້ມຄວາມຊົ່ວມົວໝອງທັງໝົດ, ຫລາຍເທື່ອເຮົາໄດ້ຍິນຄໍາສອນທີ່ອຽງໄປທາງຝ່າຍໂລກເພື່ອເອົາໃຈຜູ້ຟັງ ສ່ວນຜູ້ຟັງກໍພະຍາຍາມແປພຣະຄັມພີເຂົ້າຂ້າງຕົນເອງ ແຕ່ໂປໂລບໍ່ໄດ້ປະນີປະນອມກັບການເປັນຄຣິສຕຽນແບບເຄິ່ງໆກາງໆ ເພາະເພິ່ນຮູ້ວ່າຄົນທີ່ຢູ່ໃນພຣະເຢຊູຄຣິດເປັນທີ່ຕາຍແລ້ວຈາກຊີວິດເກົ່າ ເມື່ອຕາຍແລ້ວສິ່ງເກົ່າກໍຈະບໍ່ນໍາມາສູ່ຊີວິດໃໝ່ອີກ.

### 1. ມີພຣະເຢຊູ ເຮົາກໍມີໝົດ: ( ຟີລິບປອຍ 2:6-15 )

ໂປໂລສັງເກດເຫັນຄຣິສຕຽນໃນເມື່ອງໂກໂລຊາຍ ມີບັນຫາກ່ຽວກັບເຣື່ອງຄວາມເຊື່ອຂອງເຂົາຖືກຣົບກວນໂດຍການສອນຂອງພວກນັກທັມຟາຣີຊາຍທີ່ເປັນພວກຕໍ່ຕ້ານພຣະເຢຊູ, ຄຣິສຕຽນເຫລົ່ານີ້ໄດ້ຍິນຄໍາສອນທີ່ແຕກຕ່າງທີ່ທ່ານເອປາຟາໄດ້ສອນເຂົາໃນຄັ້ງທໍາອິດ (1:7). ການຟັງຄໍາສອນຈາກຄົນຂາດຄວາມເຂົ້າໃຈເຣື່ອງຂອງພຣະເຢຊູຄຣິດຢ່າງ ແທ້ຈິງນັ້ນໄດ້ນໍາເຂົາໄປສູ່ຄວາມສົງສັຍ ແລະເຮັດຕາມໃຈປາຖນາ ດ້ວຍເຫດນີ້ໂປໂລຈຶ່ງກ່າວກັບເຂົາອີກວ່າ *"ເຫດສັນນັ້ນ ເມື່ອທ່ານທັງຫລາຍໄດ້ຮັບພຣະເຢຊູຄຣິດເປັນອົງພຣະຜູ້ເປັນເຈົ້າແລ້ວສັນໃດ ຈົ່ງດໍາເນີນຊີວິດຢູ່ໃນພຣະອົງສັນນັ້ນ "* (ຂໍ້ 6). ໂປໂລແນະນໍາຄຣິສຕຽນເມື່ອງໂກໂລຊາຍໃຫ້ດໍາເດີນຊີວິດຕາມຄວາມເຊື່ອຄັ້ງທໍາອິດ, ຫລືໃຫ້ເຂົາ ປະຕິບັດຕາມທ່ານ ເອປາຟາ ໄດ້ສອນມາແລ້ວຢ່າຟັງຄວາມຜູ້ອື່ນອີກ. ການທີ່ໂປໂລກ່າວເຊັ່ນນີ້ກໍເພາະວ່າເພິ່ນຢ້ານເຂົາຈະຫລົງເຊື່ອຟັງແລ້ວກັບຄືນມາສົງສັຍພຣະເຢຊູ *ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ນຶ່ງ ຜູ້ໃດນໍາເຈົ້າທັງຫລາຍຕົກໄປເປັນເຫຍື່ອສະຕິປັນຍາຂອງໂລກ ຊຶ່ງເປັນຄໍາຫລອກລວງ ແລະໄຮ້ສາຣະຕາມຕໍານານຂອງມະນຸດທີ່ສືບຕໍ່ກັນມາ ຕາມອໍານາດສິ່ງສັກສິດແຫ່ງສາກົນຈັກກະວານແລະບໍ່ໃຊ່ຕາມອົງພຣະຄຣິດ "* (ຂໍ້ 8). ໝາຍຄວາມວ່າການສອນທີ່ຜິດນັ້ນແມ່ນການສອນໂດຍໃຊ້ສະຕິປັນຍາຂອງໂລກ ຫລືຄວາມຮູ້ຝ່າຍໂລກມາສອນວ່າບໍ່ມີພຣະເຈົ້າທຸກຢ່າງເກີດຂຶ້ນຕາມທັມມະຊາດ ໂປໂລສອນວ່າສິ່ງເຫລົ່ານີ້ເປັນຄໍາຫລອກລວງແລະໄຮ້ສາຣະບໍ່ເປັນປະໂຫຍດອັນໃດ ຈົ່ງຫລີກລ້ຽງຄົນຈໍາ

ພວກນີ້ດ້ວຍ *"ເພາະວ່າໃນພຣະອົງນັ້ນສະພາບຂອງພຣະເຈົ້າສະຖິດຢູ່ໃນ ພຣະກາຍຢ່າງເຕັມບໍຣິບູນ ແລະເຈົ້າທັງຫລາຍໄດ້ມີຊີວິດຄົບບໍຣິບູນໃນພຣະອົງ"* (ຂໍ້ 9).

ທ່ານທັງຫລາຍມີຊີວິດທີ່ຄົບບໍຣິບູນເພາະວ່າ *"ໃນພຣະອົງນັ້ນເຈົ້າທັງຫລາຍໄດ້ຮັບພິທີຕັດທີ່ບໍ່ແມ່ນມະນຸດໄດ້ເຮັດ ໂດຍທີ່ເຈົ້າທັງຫລາຍໄດ້ຮັບພິທີຕັດຂອງພຣະຄຣິດ ຊຶ່ງເປັນການຊົງໂຜດໃຫ້ພົ້ນຈາກກິເລດຕັນຫາຂອງເນື້ອກາຍນີ້ແລະໄດ້ຖືກຝັງໄວ້ກັບພຣະອົງໃນພິທີບັບຕິສະມາແລ້ວ ແລະໃນພິທີນັ້ນພວກເຈົ້າໄດ້ຮັບການຊົງບັນດານໃຫ້ຄືນມາດ້ວຍກັນກັບພຣະອົງ ໂດຍຄວາມເຊື່ອໃນການອິດທິຣິດຂອງພຣະເຈົ້າຜູ້ຊົງບັນດານໃຫ້ພຣະອົງຄືນພຣະຊົນ"* (ຂໍ້ 11-12). ໂປໂລໃຊ້ຄຳວ່າ *ພົ້ນຈາກກິເລດຕັນຫາຂອງເນື້ອກາຍນີ້ແລະໄດ້ຖືກຝັງໄວ້ກັບພຣະອົງໃນພິທີບັບຕິສະມາແລ້ວ* ແປວ່າທ່ານທັງຫລາຍໄດ້ພົ້ນຈາກກິເລດຝ່າຍໂລກນີ້ແລ້ວ ໂດຍຝັງໄວ້ໃນຕອນທີ່ທ່ານຮັບບັບຕິສະມາພົ້ນຫລືຄວາມຜິດບາບຂອງພວກທ່ານໄດ້ຖືກຕອກຄຶງໄວ້ທີ່ໄມ້ກາງແຂນພຣະເຢຊູ. ຄຳວ່າຖືກຕອກຄຶງຄວາມໝາຍ ສອງປະການຄື: 1. ຄວາມບາບຂອງທ່ານໄດ້ຕອກຄຶງແລະຕາຍໄປພ້ອມກັບການສິ້ນພຣະຊົນຂອງພຣະເຢຊູ. 2. ໝາຍເຖິງເຂົາຕອກປ້າຍເທິງຫົວຂອງພຣະອົງເພື່ອເຍາະເຍີ້ຍພຣະອົງ. ເມື່ອຄວາມບາບຂອງທ່ານຖືກຄຶງກັບພຣະເຢຊູແລ້ວ ແລະຄຳອັບອາຍຂອງທ່ານກໍຕອກຄຶງແລ້ວ ດັ່ງນັ້ນທ່ານຈຶ່ງບໍ່ເປັນຄົນບາບ ແລະບໍ່ເປັນຄົນອັບອາຍອີກຕໍ່ໄປເພາະວ່າພຣະເຢຊູຊົງຮັບເອົາຄວາມບາບແລະຄວາມອັບອາຍຂອງທ່ານໝົດແລ້ວ.

## ຂ. <u>ຢ່າໃຫ້ຜູ້ໃດດູຖູກທ່ານ:</u> (ຟີລິບປອຍ 2:16-18ກ)

ໂປໂລເວົ້າຢ່າງແຈ່ມແຈ້ງວ່າ *"ເຫດສັນນັ້ນ ຢ່າໃຫ້ຜູ້ໃດກ່າວໂທດເຈົ້າທັງຫລາຍໃນເຣື່ອງການກິນການດື່ມ ໃນເຣື່ອງເທສການ ເຣື່ອງວັນຕົ້ນເດືອນ ຫລືວັນສະບາໂຕ"* (ຂໍ້ 16). ບໍ່ໄດ້ໝາຍຄວາມວ່າ ໄປດ່າວ່າຫລືໄປຜິດຖຽງ ກັບຜູ້ທີ່ກ່າວຫາທ່ານ ຄວາມໝາຍຂອງໂປໂລມີຢູ່ວ່າ ຢ່າໃຫ້ຜູ້ໃດຕັດສິນທ່ານວ່າເຮັດບໍ່ຖືກໃນການສເລີມສລອງ ຫລືບໍ່ສລອງເທສການຂອງພວກທ່ານ, ໂປໂລໄດ້ອີງໃສ່ພຣະທັມນຶ່ງພົງສາວະດານ 23:31; ສອງພົງສາວະດານ 2:4; 31:3 ແລະພຣະທັມເນເຣມີຢາ 10:33 ພຣະທັມທັງສາມບ່ອນນີ້ໄດ້ບັນທຶກເຣື່ອງການຖວາຍບູຊາພຣະເຈົ້າໃນວັນຂຶ້ນນຶ່ງຄ່ຳ ເພື່ອສະແດງ ຄວາມຮູ້ບຸນຄຸນ, ເພື່ອປັນການຂໍໂທດຂໍອະພັຍ, ເພື່ອລຶບລ້າງຄວາມຜິດບາບ ແລະພຣະທັມເຫລົ່ານີ້ໄດ້ກ່າວບອກໄວ້ວ່າເປັນກົດໝາຍຂອງຊາວເຮັບເຣີໃນສມັຍນັ້ນ.

*"ສິ່ງເຫລົ່ານີ້ເປັນພຽງແຕ່ເງົາຂອງເຫດການທີ່ຈະມາພາຍຫລັງ ແຕ່ຕົວຈິງນັ້ນກໍຄືອົງພຣະຄຣິດ"* (ຂໍ້ 17). ໂປໂລບໍ່ໄດ້ປະນາມພວກທີ່ປະນາມພວກກຸ່ມຄົນທັງຫລາຍທີ່ໄດ້ໃສ່ຮ້າຍປ້າຍສີພີ່ນ້ອງເມືອງໂກໂລຊາຍ ແຕ່ກຳລັງຢາກບອກວ່າສິ່ງທີ່ເຂົາປະຕິບັດທັມອີງຕາມກົດໝາຍຂອງຊາວເຮັບເຣີນັ້ນກໍເປັນການຖືກຕ້ອງເໝືອນກັບການປະຕິບັດຕາມເງົາຂອງກົດໝາຍຊື່ໆ ສ່ວນກົດໝາຍທີ່ແທ້ຈິງນັ້ນແມ່ນພຣະເຢຊູຄຣິດ, ຫາກເຂົາປະຕິບັດຕາມກົດໂດຍບໍ່ມີເປົ້າໝາຍເຖິງພຣະເຢຊູຄຣິດແລ້ວການປະຕິບັດຂອງເຂົາກໍຂາດຄວາມໝາຍ ແລະການປະຕິບັດຂອງເຂົາກໍເທົ່າ ກັບເຂົາປະຕິບັດຕາມເງົາຂອງພຣະຄຣິດເທົ່ານັ້ນ, ອີກປະການນຶ່ງໂປໂລກຳລັງເວົ້າເຖິງພວກທີ່ປະຕິບັດຕາມພຣະທັມຄັມພີເດີມຢ່າງເຄັ່ງຄັດ ແຕ່ບໍ່ເຂົ້າໃຈເຣື່ອງພຣະເຢຊູກໍເທົ່າກັບເຂົາປະຕິບັດຕາມເງົາຂອງພຣະເຢຊູ ເພາະວ່າພຣະຄັມພີເດີມແມ່ນການເລີ້ມຕົ້ນເຣື່ອງພຣະເຢຊູ ແລະພຣະຄັມພີເດີມແມ່ນແນໃສ່ພຣະເຢຊູນັ້ນເອງ, ດ້ວຍເຫດ ນີ້ໂປໂລຈຶ່ງກ່າວອີກວ່າ *"ຢ່າໃຫ້ຜູ້ໃດໄດ້ສໍ້ໂກງເອົາຣາງວັນຂອງເຈົ້າທັງຫລາຍ"* (ຂໍ້ 14ກ).

## 3. <u>ບໍ່ມີອຳນາດຍິ່ງໃຫຍ່ໄປກວ່າພຣະເຢຊູ:</u> (ຟີລິບປອຍ 2:18ຂ-23)

ການເຊື່ອໃນອຳນາດຕ່າງ ໆໄດ້ເກີດມີຕໍ່ ໆກັນມາເຖິງທຸກວັນນີ້, ສ່ວນຫລາຍຄົນເຮົາມັກເຊື່ອໃນພຣະຕ່າງ, ເຊື່ອໃນສິ່ງສັກສິດຕ່າງ ໆຕລອດເຖິງພຣະອິນ, ພຣະພົມ, ເທວະບຸດ, ເທວະດາ ເມື່ອເຊື່ອແລ້ວກໍພາກັນມີຫົວປະດິດຄິດສ້າງຮູບ

ດັ່ງກ່າວນັ້ນເພື່ອມາຂາບໄຫວ້ ລາງຄົນທີ່ມີຝີມືດີແດ່ກໍພາກັນສ້າງຮູບເຫລົ່ານັ້ນຂາຍຕາມທ້ອງຕລາດຈົນລ້ຳລອຍກໍມີ, ຄົນພວກນີ້ໂປໂລເປີດເຜີຍກິຣິຍາທ່າທາງຂອງເຂົາວ່າເຂົາ *"ໃຊ້ກິຣິຍາທຳທ່າເປັນຜູ້ຖ່ອມຕົວລົງ ໄຫວ້ເທວະດາແລະໄຝ່ຝັນຢູ່ໃນນິມິດທີ່ເຂົາເຫັນ ແລະອວດອ້າງຕົວຂຶ້ນເປົ່າໆດ້ວຍຄວາມຄິດຢ່າງທຳມະດາມະນຸດ"* (ຂໍ້ 18ຂ). ຄົນພວນນີ້ທຳຊົງເປັນຄົນສງ່ຽມຄ່ຽມຄົມ, ຄ້າຍຄືຄົນຖ່ອມຕົວເພື່ອເປັນເຄື່ອງມືຫລອກລວງຜູ້ອື່ນໂດຍການປະພຶດ ຕົນເພື່ອເຂົາຈະຊັກຈູງຈິດໃຈຄົນທັງຫລາຍໃຫ້ຫລົງເຊື່ອໃນຄາຣົມເຂົາວ່າເຂົາເປັນຄົນທີ່ມີນິມິດຈາກເທວະດາ ເປັນການອວດອ້າງຄົນ ອື່ນ ຊຶ່ງການກະທຳແນວນີ້ໂປໂລເວົ້າວ່າ ເປັນການອວດອ້າງຢ່າງຄວາມຄິດຂອງສາມັນຊົນເທົ່ານັ້ນ.

ເຣື່ອງການຂາບໄຫວ້ເທວະດາວ່າສົມຄວນຫລືບໍ່ນັ້ນໃຫ້ເຮົາອ່ານພຣະທັມ <u>ພຣະນິມິດ 22:8-9</u> ຄືໂຢຮັນໄດ້ຂາບລົງນະມັສການເທວະດາ ແຕ່ເທວະດາບອກເພິ່ນບໍ່ໃຫ້ນະມັສການ ເພາະເທວະດາກໍເປັນຜູ້ຮັບໃຊ້ພຣະເຈົ້າຄືກັນ. ຫາກເຮົາບໍ່ເຂົ້າໃຈຄັກແນ່ເຮົາກໍຈະຂາບໄຫວ້ເທວະດາຕາມຄຳສອນຂອງພວກເຖົ້າແກ່ບູຮານ, ສ່ວນພວກຄຣິສຕຽນເມືອງໂກໂລຊາຍໄດ້ຖືກພວກນັກທັມຟາຣີຊາຍສອນເຂົາຊຶ່ງຄຳສອນນັ້ນແຕກຕ່າງກັບຄຳສອນທີ່ເຂົາໄດ້ ຮັບເບື້ອງຕົ້ນຈາກທ່ານເອປາຟາ (1:7) ຈຶ່ງເປັນຕົ້ນເຫດໃຫ້ເຂົາມີຄວາມເຊື່ອແບບເຄິ່ງໆກາງໆໃນຫລັກຄວາມເຊື່ອ ໃນພຣະເຢຊູກັບທັມບັນຍັດທີ່ພວກຟາຣີຊາຍສັ່ງໃຫ້ເຂົາປະຕິບັດ. ເພາະພວກເຂົາຄິດວ່າພຣະບັນຍັດນັ້ນມາກ່ອນ ແລະຍິ່ງໃຫຍ່ກວ່າພຣະເຢຊູ ແຕ່ເຂົາບໍ່ຮູ້ຈັກວ່າພຣະບັນຍັດນັ້ນຈະສຳເຣັດໄດ້ກໍແມ່ນຢູ່ໃນພຣະເຢຊູເທົ່ານັ້ນ. *"ຢ່າຄິດວ່າເຮົາມາ ລົບ ລ້າງພຣະບັນຍັດ ແລະຖ້ອຍຄຳຂອງຜູ້ປະກາດພຣະທັມເສັຽ ເຮົາບໍ່ໄດ້ມາລົບລ້າງ ແຕ່ມາເຮັດໃຫ້ສຳເຣັດຄົບຖ້ວນ"* (ມັດທາຍ 5:17). ດ້ວຍເຫດ ນີ້ໂປໂລຈຶ່ງກ່າວວ່າ *"ຖ້າເຈົ້າທັງຫລາຍໄດ້ຕາຍກັບ ພຣະຄຣິດ ພົ້ນຈາກອຳນາດສິ່ງສັກສິດແຫ່ງສາກົນຈັກກະວານແລ້ວ ເຫດສັນໃດພວກເຈົ້າຈຶ່ງມີຊີວິດຢູ່ເຫມືອນກັບວ່າພວກເຈົ້າຍັງຢູ່ຝ່າຍໂລກ ຍອມຢູ່ໃຕ້ບັນຍັດຕ່າງໆ"* (ຂໍ້ 20). ໝາຍຄວາມວ່າຄົນທີ່ຕາຍໃນນ້ຳບັບຕິສະມາໃນພຣະນາມແຫ່ງພຣະເຢຊູ ຄຣິດກໍພົ້ນຈາກກົດບັນຍັດຕ່າງໆເຫລົ່ານັ້ນແລ້ວດ້ວຍວ່າພຣະເຢຊູເປັນຕົວແທນພຣະບັນຍັດທັງໝົດນັ້ນແລ້ວ. ດ້ວຍ ເຫດນີ້ເຮົາທັງຫລາຍຈຶ່ງເຂົ້າໃຈວ່າ ພຣະເຢຊູຊົງມີອຳນາດແລະຊົງເປັນໃຫຍ່ກວ່າສິ່ງໃດໆທີ່ມະນຸດອ້າງເຖິງ.

**<u>ຄຳຖາມ:</u>**

1. ໃຜເປັນຜູ້ທຳອິດທີ່ປະກາດໃຫ້ຄຣິສຕຽນໂກໂລຊາຍ? ເປັນຫຍັງຕໍ່ມາເຂົາຈຶ່ງສົງສັຍພຣະເຢຊູ?

2. ການຖືກຣົບກວນດ້ານຄວາມເຊື່ອຂອງພີ່ນ້ອງໂກໂລຊາຍ ເປັນບົດຮຽນຫຍັງສຳລັບທ່ານແດ່?

3. ເຮັດແນວໃດທ່ານຈຶ່ງຈະບໍ່ຫລົງເຊື່ອຟັງຄຳສອນທີ່ແຕກຕ່າງກັບທິດທີທີ່ທ່ານເຊື່ອ?

4. ທ່ານໄດ້ຕິດຕໍ່ພົວພັນກັບພຣະເຢຊູແຕ່ລະວັນແນວໃດ? ການຕິດຕໍ່ພົວພັນກັບພຣະເຢຊູຈະຊ່ອຍປ້ອງກັນແນວໃດ?

5. ການສຶກສາ, ການອ່ານພຣະຄັມພີມີຜົນປໂຍດແນວໃດ?

*ດຣ. ທຸນພັນ ວົງສຸຣິດທ໌*